ສະຖາບັນ ຄົ້ນຄວ້າ ກະສິກໍາ ແລະ ປ່າໄມ້
ສູນຄົ້ນຄວ້າ ປ່າໄມ້

FORESTRY RESEARCH CENTRE

# ຄູ່ມືຝຶກອົບຮົມ
# ການເກັບກໍາຂໍ້ມູນແບບມີສ່ວນຮ່ວມ



ໂດຍ

ໂຄງການ ສົ່ງເສີມການນໍາໃຊ້ ເຄື່ອງປ່າຂອງດົງ ແບບຍືນຍົງ
ສູນຄົ້ນຄວ້າ ປ່າໄມ້

**Draft No. 1**

NAFRI IUCN

ວຽງຈັນ
ພະຈິກ 2000

# ສາລະບານ


ຄຳນຳ 1

**ພາກ 1. ແນະນຳກ່ຽວກັບການເກັບກຳຂໍ້ມູນແບບມີສ່ວນຮ່ວມ** 3

5 ຫົວຂໍ້ໃຫຍ່ທີ່ຕ້ອງເອົາໃຈໃສ່ 4

ບົດບາດຂອງການເກັບກຳຂໍ້ມູນແບບມີສ່ວນຮ່ວມໃນການເຄື່ອນໄຫວຂອງໂຄງການ 8

**ພາກ 2. ການຝຶກອົບຮົມ** 9

ກະກຽມເພື່ອການຝຶກອົບຮົມ 9

ທັດສະນະທີ່ດີຂອງຄູຝຶກ 10

ວິທີການຝຶກ 11

ການເລີ່ມຕົ້ນດຳເນີນການ 14

*ການແນະນຳຕົວໃນການຝຶກອົບຮົມ* 15

*ການສ້າງກົດລະບຽບຮ່ວມກັນ* 16

*ການແບ່ງກຸ່ມສົນເວນ* 17

*ສ້າງຄວາມຄາດຫວັງຂອງການຝຶກອົບຮົມ* 18

**ພາກ 3. ວິທີການເກັບກຳຂໍ້ມູນແບບມີສ່ວນຮ່ວມ** 19

ເລີ່ມຕົ້ນ 21

*ການວາງແຜນລົງສະໜາມ* 22

*ການແນະນຳຕົວເອງ* 24

*ການສ້າງຄວາມສາມັກຄີ* 26

**ຂໍ້ມູນກ່ຽວກັບເສດຖະກິດສັງຄົມ** 29

*ປະຫວັດບ້ານ* 30

*ປະຕິທິນລະດູການ* 32

*ຈັດລະດັບຖານະຂອງແຕ່ລະຄອບຄົວໃນບ້ານ* 34

*ແຕ້ມແຜນວາດບ້ານແບບມີສ່ວນຮ່ວມ* 36

*ຈັດລະດັບລາຍຮັບ / ລາຍຈ່າຍຂອງຊາວບ້ານ* 38

**ຂໍ້ມູນກ່ຽວກັບເຄື່ອງປ່າຂອງດົງ** 40

*ຄວາມອຸດົມສົມບູນຂອງເຄື່ອງປ່າຂອງດົງ* 41

*ຈັດລະດັບຄວາມສຳຄັນຂອງເຄື່ອງປ່າຂອງດົງ* 42

*ແຕ້ມແຜນວາດບ່ອນເກັບເຄື່ອງປ່າຂອງດົງແບບມີສ່ວນຮ່ວມ* 44

*ຈັດລະດັບຄວາມສຳຄັນຂອງບ່ອນເກັບເຄື່ອງປ່າຂອງດົງ* 46

*ຈັດລະດັບການຫຼຸດລົງຂອງເຄື່ອງປ່າຂອງດົງ* 48

*ຈຳນວນເຄື່ອງປ່າຂອງດົງທີ່ເກັບອອກຈາກປ່າ* 50

*ການວິເຄາະບັນຫາເຄື່ອງປ່າຂອງດົງ* 52

*ຂໍ້ມູນລວມຂອງການເກັບກູ້ເຄື່ອງປ່າຂອງດົງ* 54

*ການເກັບເຄື່ອງປ່າຂອງດົງລະຫ່ວາງບ້ານອ້ອມຂ້າງ ແລະ ພາກສ່ວນອື່ນໆ* 56

*ການຍ່າງປ່າ* 58

*ສຳພາດກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ປ່າ* 62

*ການປະເມີນສະພາບປ່າແບບມີສ່ວນຮ່ວມ* 66

**ສັງລວມ ແລະ ສະຫຼຸບ** 73

*ການສ່ອງແສງຄືນ* 74

*ການຂຽນບົດລາຍງານ* 76

# ຄຳນຳ

ຄູ່ມືຫົວນີ້ແມ່ນຮຽບຮຽງໂດຍມີການປະກອບສ່ວນຂອງຫຼາຍຄົນ ນັກຂຽນຕົ້ນຕໍແມ່ນ ທ່ານນາງ ຄຳຫຼ້າ ພຸດທະລາດ ແລະ ດຣ. ນິກ ເອັນພີວ ເຊິ່ງຍັງໄດ້ຮັບ ການປະກອບສ່ວນໂດຍກົງຈາກ ທ່ານ ວິລຸນ ສ້ອຍດາລາ, ທ່ານນາງ ເຣເຊິນ ເດີເຊເນີ, ທ່ານ ສູນທອນ ເກດພັນ, ທ່ານໂຢສ໌ ຟອບແປສ໌, ທ່ານ ສີພອງ ຈັນທະວົງສາ, ທ່ານ ແອວມະນີ ຈັນທະນີວົງ, ທ່ານ ວົງເດືອນ ເພັງຊະນະໄຊ, ທ່ານນາງ ຄອນສະຫວັນ ຄຳພາໂນລາດ, ທ່ານ ບຸນປອນ ສີພອນໄຊ, ທ່ານນາງ ອາຣຸນີ ກິດຈະເຣີນ, ທ່ານ ມິກ ສາຍລົມ, ບັນດາ ນັກສຳມະນາກອນ ແລະ ຊາວບ້ານ ທີ່ ເຄີຍນຳໃຊ້ ວິທີການຕ່າງໆ ທີ່ແນະນຳມາໃນຄູ່ມືຫົວນີ້.

ໃນການຂຽນຄູ່ມືຫົວນີ້ ຍັງໄດ້ມີການອີງໃສ່ຄູ່ມືອື່ນໆ ມີສອງຫົວທີ່ສຳຄັນ, ຄື:

- *Participatory techniques for community forestry: a field manual*, by W. J. Jackson and A. W. Ingles. (1998, Gland: IUCN/WWF.)
- *A trainer's guide for participatory learning and action*, by Jules N. Pretty, Irene Guijt, Ian Scoones, and John Thompson. (1995, London: International Institute for Environment and Development.)

ການນຳໃຊ້ຄູ່ມືຕ່າງໆໃນວຽກງານຕົວຈິງຢູ່ ສປປ ລາວ ໃນຊຸມປີຜ່ານມາ, ກໍ່ໄດ້ມີການປັບປຸງວິທີການຕ່າງໆ ເພື່ອໃຫ້ສອດຄ່ອງກັບສະພາບການຕົວຈິງຢູ່ ສປປ ລາວ.

## ຄູ່ມືຫົວນີ້ແມ່ນເພື່ອໃຫ້ໃຜອ່ານ?

ຄູ່ມືຫົວນີ້ແມ່ນ ສຳຫຼັບຜູ້ໃດທີ່ສົນໃຈໃນການປະຕິບັດວຽກງານ ກັບຊາວບ້ານແບບມີສ່ວນຮ່ວມ ໂດຍສະເພາະໃນການເກັບກຳຂໍ້ມູນກ່ຽວກັບເຄື່ອງປ່າຂອງດົງ ເພື່ອສ້າງແຜນການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ ໃນນັ້ນຍັງສາມາດເອົາຫຼາຍວິທີການທີ່ສະເໜີໄວ້ນີ້ໄປໃຊ້ໃນວຽກງານຂອງການພັດທະນາຊົນນະບົດທົ່ວໄປ ຈຸດປະສົງຕົ້ນຕໍຂອງຄູ່ມືຫົວນີ້ແມ່ນ ເພື່ອນຳໃຊ້ໃນການຝຶກໃຫ້ເຂົ້າໃຈວິທີການຕ່າງໆໃນການເກັບກຳຂໍ້ມູນແບບມີສ່ວນຮ່ວມ

ຄູ່ມືຫົວນີ້ມີ 3 ພາກໃຫຍ່ ຄື:

- ພາກທີ່ 1 ຈະແນະນຳບາງບັນຫາຕົ້ນຕໍ ກ່ຽວກັບການເກັບກຳຂໍ້ມູນແບບມີສ່ວນຮ່ວມ ໃນນັ້ນຈະມີຂໍ້ມູນ ດ້ານຫຼັກການສຳຄັນຂອງການປະຕິບັດງານກັບຊາວບ້ານແບບມີສ່ວນຮ່ວມ. ຜູ້ໃດທີ່ຈະປະຕິບັດວຽກງານພັດທະນາຊົນນະບົດບໍ່ວ່າດ້ານໃດ ຄວນຈະມີຄວາມຮູ້ຕົ້ນຕໍ ກ່ຽວກັບບັນຫາເຫຼົ່ານີ້.
- ພາກທີ່ 2 ຈະມີຄຳແນະນຳກ່ຽວກັບບັນຫາການຈັດຝຶດອົບຮົມ ໂດຍສະເພາະແມ່ນສຳຫຼັບຄົນທີ່ຕ້ອງການຈະອົບຮົມພະນັກງານ ຫຼື ຜູ້ເກັບກຳຂໍ້ມູນອື່ນໆ ໃນການເກັບກຳຂໍ້ມູນແບບມີສ່ວນຮ່ວມ ກ່ຽວກັບເຄື່ອງປ່າຂອງດົງ.
- ພາກທີ່ 3 ປະກອບມີວິທີການເກັບກຳຂໍ້ມູນແບບມີສ່ວນຮ່ວມ ກ່ຽວກັບເຄື່ອງປ່າຂອງດົງ 23 ວິທີການທີ່ສາມາດເລືອກເອົາສ່ວນໃດນຶ່ງເພື່ອໃຊ້ໃນການຝຶກອົບຮົມ ຫຼື ຈະໃຊ້ເປັນບ່ອນອີງໃນເວລາລົງພາກສະໜາມກໍ່ໄດ້

# ພາກ 1

## ແນະນຳກ່ຽວກັບ
## ການເກັບກຳຂໍ້ມູນແບບມີສ່ວນຮ່ວມ

# ພາກ 1. ແນະນຳກ່ຽວກັບການເກັບກຳຂໍ້ມູນແບບມີສ່ວນຮ່ວມ

## ການເກັບກຳຂໍ້ມູນແບບມີສ່ວນຮ່ວມແມ່ນຫຍັງ?

ແມ່ນການສ້າງໂອກາດໃຫ້ຊາວບ້ານ ເປັນຜູ້ກຳນົດຂໍ້ມູນ ກ່ຽວກັບທ້ອງຖິ່ນຂອງຕົນເອງ ໂດຍມີກິດຈະກຳ ແລະ ວິທີການລະດົມແນວຄິດຂອງຄົນໃນທຸກໆ ລະດັບພາຍໃນບ້ານ. ຊາວບ້ານ ເປັນຜູ້ສະເໜີ, ແລກປ່ຽນແນວຄິດ ແລະ ວິໃຈຂໍ້ມູນກ່ຽວກັບຊີວິດເຂົາເຈົ້າເອງ ແລະ ສະພາບການຕ່າງໆອ້ອມຂ້າງບ້ານ.

ໃນການເກັບກຳຂໍ້ມູນແບບມີສ່ວນຮ່ວມນີ້ ຫລາຍວິທີການທີ່ສາມາດນຳໃຊ້ເພື່ອຫາຂໍ້ມູນກ່ຽວກັບສະພາບຕົວຈິງຢູ່ບ້ານປະຊາຊົນ ແລະ ຢູ່ໃນບໍລິເວນອ້ອມບ້ານ ບ່ອນທີ່ຊາວບ້ານເຄີຍນຳໃຊ້ຊັບພະຍາກອນທຳມະຊາດ.

## ເປັນຫຍັງ ຈຶ່ງໃຫ້ຄົນໃນບ້ານ ມີສ່ວນຮ່ວມໃນການໃຫ້ຂໍ້ມູນ ວິເຄາະຂໍ້ມູນ ແລະ ວາງແຜນ?

ຊາວບ້ານ ຄວນຈະມີສ່ວນຮ່ວມ ໃນການໃຫ້ຂໍ້ມູນ, ວິເຄາະຂໍ້ມູນ ແລະ ວາງແຜນ ເພື່ອກິດຈະກຳຕ່າງ ໆ ໃນຕໍ່ໜ້າໃນບ້ານນັ້ນ ຍ້ອນວ່າ ຊາວບ້ານເປັນຜູ້ທີ່ມີຄວາມຮູ້ ກ່ຽວກັບ ທ້ອງຖິ່ນຂອງຕົນເອງ, ມີຄວາມລຶ້ງເຄີຍ ໃນການແກ້ໄຂບັນຫາ ຕາມປະເພນີ, ແນວທາງ ແລະ ກໍລະນີທີ່ເໝາະສົມຂອງ ທ້ອງຖິ່ນ ຖ້າເຮົາໃຫ້ຊາວບ້ານມີສ່ວນຮ່ວມໃນການເກັບກຳຂໍ້ມູນ ແລະ ວາງແຜນ ເຂົາເຈົ້າຈະເຂົ້າໃຈ ແລະ ໄດ້ປະກອບສ່ວນດີໃນການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ.

## ຂໍ້ມູນທີ່ເກັບໂດຍວິທີແບບມີສ່ວນຮ່ວມມີລັກສະນະຄືແນວໃດ?

ຊາວບ້ານຈະມີສ່ວນຮ່ວມໃນການກຳນົດຂໍ້ມູນກ່ຽວກັບເຂດບ້ານຕົນເອງ :

- ຊາວບ້ານສົນໃຈທີ່ຈະປະກອບສ່ວນໃນການກຳນົດບັນຫາຂອງເຂດບ້ານຕົນເອງ.
- ຊາວບ້ານໄດ້ເປັນເຈົ້າການໃນການວາງແຜນ ແລະ ປະຕິບັດຕົວຈິງ.
- ຂໍ້ມູນຈະມີຄວາມແນ່ນອນ ແລະ ເຊື່ອຖືໄດ້.
- ຜູ້ເກັບກຳຂໍ້ມູນຈະໄດ້ເລືອກວິທີເໝາະສົມກັບສະພາບຕົວຈິງ.
- ຂໍ້ມູນມີການປ່ຽນແປງໄດ້ (ສາມາດກວດຄືນຢ່າງເປີດກວ້າງ).
- ເກັບຂໍ້ມູນໄດ້ລະອຽດກ່ວາວິທີອື່ນ.

ຂໍ້ມູນທີ່ເກັບໂດຍວິທີແບບມີສ່ວນຮ່ວມອາດຈະມີຈຸດອ່ອນຕໍ່ໄປນີ້:

- ຖ້າໃຊ້ບໍ່ຖືກຫຼັກການ, ແມ່ນຂໍ້ມູນຈະບໍ່ແນ່ນອນ.
- ຖ້າໃຊ້ຖືກຫຼັກການ, ແມ່ນອາດຈະໃຊ້ເວລາດົນ.
- ອາດຈະລົບກວນການເຄື່ອນໄຫວປະຈຳວັນຂອງຊາວບ້ານ.
- ຄຳເຫັນອາດຈະບໍ່ສາມາດເປັນຕົວແທນຂອງໝົດບ້ານໄດ້ ເພາະວ່າຄຳເຫັນນັ້ນເປັນຂອງແຕ່ລະພາກສ່ວນທີ່ມາຮ່ວມ ໃນການໃຫ້ຂໍ້ມູນເທົ່ານັ້ນ.

## ວິທີການການເກັບກຳຂໍ້ມູນແບບເກົ່າມີລັກສະນະຄືແນວໃດ?

ມີລັກສະນະດັ່ງນີ້ :

- ເຄັ່ງຄັດ ແລະ ເປັນທາງການຫລາຍ.
- ນຳໃຊ້ບົດສຳພາດແບບຟອມທີ່ຍາວ ແລະ ລະອຽດຫລາຍ.
- ຜູ້ເກັບກຳຂໍ້ມູນ ບໍ່ມີໂອກາດຈະປັບຕົວຕາມສະພາບຕົວຈິງຂອງທ້ອງຖິ່ນ.

ຍ້ອນຈຸດອ່ອນເຫຼົ່ານີ້ ວິທີການເກັບກຳຂໍ້ມູນແບບມີສ່ວນຮ່ວມສ້າງຕັ້ງຂຶ້ນມາ.

ຂໍ້ສັງເກດ: ການເກັບກຳຂໍ້ມູນແບບມີສ່ວນຮ່ວມ ພາສາອັງກິດເອີ້ນວ່າ Rapid Rural Appraisal (RRA).

## "5 ຫົວຂໍ້ໃຫຍ່" ຂອງການເກັບກຳຂໍ້ມູນແບບມີສ່ວນຮ່ວມ.

ໃນການເຮັດວຽກແບບມີສ່ວນຮ່ວມກັບຊາວບ້ານ ແມ່ນມີຫຼາຍບັນຫາທີ່ຜູ້ເກັບກຳຂໍ້ມູນຈະຕ້ອງເອົາໃຈໃສ່ຕະຫຼອດເວລາ ໃນນັ້ນ, ຈະມີຫຼັກການສຳຄັນໆ 5 ຫົວຂໍ້ທີ່ຕ້ອງເນັ້ນໜັກ ໃນໝົດທຸກວິທີການເກັບກຳຂໍ້ມູນ ເພື່ອໃຫ້ໄດ້ຜົນດີ:

> ### 5 ຫົວຂໍ້ໃຫຍ່
>
> ທີ່ຕ້ອງເອົາໃຈໃສ່ໃນການເກັບກຳຂໍ້ມູນແບບມີສ່ວນຮ່ວມ
>
> 1 ການມີສ່ວນຮ່ວມ.
>
> 2 ການມີຄວາມສາມັກຄີ ແລະ ເປັນກັນເອງກັບຊາວບ້ານ.
>
> 3 ການໃຈເຢັນ.
>
> 4 ການເຂົ້າໃຈເຫດຜົນ.
>
> 5 ການປັບຕົວເຂົ້າກັບສະພາບການຕົວຈິງ.

1. **ການມີສ່ວນຮ່ວມ.**
   - ຊາວບ້ານຕ້ອງເປັນເຈົ້າການໃນກິດຈະກຳຕ່າງໆຂອງການເກັບກຳຂໍ້ມູນແບບມີສ່ວນຮ່ວມ ຕ້ອງຮັບຮູ້ວ່າ ຊາວບ້ານຮູ້ດີກ່ຽວກັບສະພາບຕົວຈິງໃນບໍລິເວນບ້ານຕົນເອງ ເຂົາເຈົ້າມີຫົວຄິດປະດິດສ້າງແລະມີຄວາມສາມາດໃນການປະກອບແລະວິເຄາະຂໍ້ມູນກ່ຽວກັບບ້ານຕົນເອງ .
   - ການສົນທະນາຕ້ອງໃຫ້ມີການແລກປ່ຽນຂໍ້ມູນກັບຊາວບ້ານ
   - ຕ້ອງຊອກຮູ້ຄຳເຫັນຂອງຊາວບ້ານຜູ້ທີ່ທຸກຍາກ ຫຼື ບໍ່ມີສິດທິພົນໃນບ້ານ.
   - ຕ້ອງຕັ້ງໃຈຟັງຄຳເຫັນຂອງຊາວບ້ານ ແລະ ບໍ່ໃຫ້ມີແຕ່ພະນັກງານເປັນຜູ້ປະກອບຄຳເຫັນ ຖ້າເຮົາຕັ້ງໃຈຟັງຄຳເວົ້າຂອງຊາວບ້ານ ເຮົາຈຶ່ງຈະໄດ້ຄວາມເຂົ້າໃຈຫຼາຍ.

- ໃນແຕ່ລະບ້ານຈະໄດ້ມີຊາວບ້ານບາງຄົນທີ່ຮູ້ດີກ່ວາໝູ່ກ່ຽວກັບຂໍ້ມູນຕ່າງໆ ເຮົາຕ້ອງຊອກຫາໃຫ້ຮູ້ຈັກກັບຄົນເຫຼົ່ານີ້ໃນແຕ່ລະບ້ານ ເພື່ອເປັນປະໂຫຍດໃນການເກັບກຳຂໍ້ມູນທີ່ແນ່ນອນ.

2. **ການມີຄວາມສາມັກຄີ ແລະ ເປັນກັນເອງກັບຊາວບ້ານ.**
   - ຕ້ອງໃຫ້ມີຄວາມສາມັກຄີ ແລະ ເປັນກັນເອງຕະຫລອດ ລະຫວ່າງຜູ້ເກັບກຳຂໍ້ມູນ ແລະ ຊາວບ້ານ.
   - ຕ້ອງມີຄວາມເປີດກວ້າງ, ຄວາມສົນໃຈໃນຊີວິດຂອງຊາວບ້ານ ບໍ່ຄວນໃຫ້ມີສະພາບການໃດທີ່ຈະເຮັດໃຫ້ຊາວບ້ານອຶດອັດໃຈ
   - ແມ່ຍິງອາດຈະມີຄວາມອາຍຕໍ່ຄົນແປກໜ້າ ດັ່ງນັ້ນ ຜູ້ເກັບກຳຂໍ້ມູນຕ້ອງເອົາໃຈໃສ່ໃນການສ້າງຄວາມເປັນກັນເອງກັບເຂົາເຈົ້າ.
   - ຕ້ອງດຳເນີນກິດຈະກຳການເກັບກຳຂໍ້ມູນໃນເວລາທີ່ຊາວບ້ານມີຄວາມສະດວກ, ບໍ່ໃຫ້ລົບກວນວຽກປະຈຳວັນຂອງເຂົາເຈົ້າ.
   - ການສ້າງຄວາມສາມັກຄີຈະໄດ້ໃຊ້ເວລາ - ເຮົາຕ້ອງມີຄວາມເອົາໃຈໃສ່ ແລະ ຕ້ອງໃຈເຢັນໆ.

3. **ການໃຈເຢັນ / ອົດທົນ.**
   - ໃນການລົມກັບຊາວບ້ານ ຕ້ອງຕັ້ງໃຈຟັງ, ຖາມຕໍ່ເລື້ອຍໆ ແລະ ບໍ່ຄວນແຊງຄຳເວົ້າຂອງຊາວບ້ານ - ຄວນລໍຖ້າໃຫ້ຊາວບ້ານມີເວລາປະກອບຄຳເຫັນຕື່ມ ເລື້ອຍໆ
   - ບໍ່ຕ້ອງຟ້າວ
   - ຕ້ອງໃຫ້ເວລາແກ່ຊາວບ້ານເພື່ອສົນທະນາຢ່າງລະອຽດ ແລະ ເພື່ອພິຈາລະນາບັນຫາຕ່າງໆຢ່າງຄົບຖ້ວນ

4. **ການເຂົ້າໃຈເຫດຜົນ.**
   - ຕ້ອງຕັ້ງໃຈຟັງຄຳອະທິບາຍຂອງຊາວບ້ານ ເພື່ອຈະໄດ້ເຂົ້າໃຈເຫດຜົນຂອງເຂົາເຈົ້າ ໃນແນວຄິດ ແລະ ການປະຕິບັດຕ່າງໆ ສຳຄັນແມ່ນ ຕ້ອງໃຫ້ຈົດໄວ້ຢ່າງລະອຽດໃນປື້ມບັນທຶກ.
   - ໃນໄລຍະການເກັບກຳຂໍ້ມູນ ແມ່ນຕ້ອງແຕ່ງໃຫ້ຄົນນຶ່ງເປັນຜູ້ຮັບຜິດຊອບການບັນທຶກຢ່າງດຽວ. ໃຫ້ຕັ້ງຄຳຖາມທີ່ເຮັດໃຫ້ຊາວບ້ານສາມາດອະທິບາຍຄຳຕອບຢ່າງລະອຽດ (ຕົວຢ່າງ: ໃຊ້ຄຳວ່າ "ເປັນຫຍັງ?", "ແນວໃດ?", "ຢູ່ໃສ?") ບໍ່ໃຫ້ຕັ້ງຄຳຖາມທີ່ຊາວບ້ານຈະໄດ້ຕອບພຽງແຕ່ວ່າ "ແມ່ນ" ຫຼື "ບໍ່ແມ່ນ" ( ຕົວຢ່າງ : ໃຫ້ຖາມວ່າ " ເຈົ້າເກັບໜໍ່ໄມ້ມາຈາກໃສ ? " ບໍ່ໃຫ້ຖາມວ່າ " ເຈົ້າເກັບໜໍ່ໄມ້ຢູ່ປ່າສະຫງວນ ບໍ່ ".
   - ຕ້ອງກວດຂໍ້ມູນທີ່ໄດ້ແລ້ວ ໂດຍມີການຖາມຄືນກັບຄົນອື່ນໆ ແລະ ໃນກໍລະນີອື່ນໆ ນຳຫຼັງເພື່ອຢັ້ງຢືນຄວາມແນ່ນອນຂອງຂໍ້ມູນນັ້ນ

5. **ການປັບຕົວເຂົ້າກັບສະພາບການຕົວຈິງ.**
   - ວິທີການເກັບກຳຂໍ້ມູນທັງໝົດທີ່ສະເໜີໃນຄູ່ມືນີ້ ແມ່ນພະນັກງານສາມາດດັດແປງເອງເພື່ອໃຫ້ເໝາະສົມກັບສະພາບຕົວຈິງໃນບ້ານ ບໍ່ຄວນມີຄວາມເຄັ່ງຄັດຫຼາຍໃນການນຳໃຊ້ແຕ່ລະວິທີການ.

- ຕ້ອງຈົດໄວ້ແຕ່ເບື້ອງຕົ້ນວ່າເຮົາຕ້ອງການຂໍ້ມູນຫຍັງແດ່ ແລ້ວເວລາເກັບກຳຂໍ້ມູນນັ້ນ ແມ່ນໃຫ້ເບິ່ງຄືນເລື້ອຍໆ ເພື່ອຈະຮູ້ວ່າມີຂໍ້ມູນຫຍັງທີ່ເກັບໄດ້ແລ້ວ ແລະ ມີຂໍ້ມູນຫຍັງທີ່ຍັງບໍ່ທັນໄດ້ເກັບ.
- ການສຳພາດກັບຊາວບ້ານບໍ່ຄວນມີລັກສະນະເຄັ່ງຄັດຫຼາຍ ຄືນເກັບກຳຂໍ້ມູນຄວນຈະກຽມຄຳຖາມຕ່າງໆໄວ້ເພື່ອຊີ້ນຳໃນການຕັ້ງຄຳຖາມກັບຊາວບ້ານ ໃຫ້ຈື່ເນື້ອໃນຂອງຄຳຖາມໄວ້, ບໍ່ໃຫ້ອ່ານຕໍ່ໜ້າຊາວບ້ານ. ໃນສະພາບຕົວຈິງ ເຮົາອາດຈະໄດ້ປ່ຽນຄຳຖາມຕາມຄວາມເໝາະສົມກໍ່ໄດ້.
- ນອກຈາກການເກັບກຳຂໍ້ມູນຕາມວິທີການຕ່າງໆທີ່ແນະນຳໄວ້ໃນຄູ່ມືນີ້ ແມ່ນຜູ້ເກັບກຳຂໍ້ມູນຄວນຈະຕັ້ງໃຈສັງເກດການຕ່າງໆໂດຍກົງ ແລະ ບັນທຶກໄວ້ຢ່າງລະອຽດ.
- ຖ້າຜູ້ເກັບກຳຂໍ້ມູນມີຄວາມຄິດທີ່ຈະດັດແປງ ຫຼື ປັບປຸງວິທີການອັນໃດນຶ່ງເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງ, ແມ່ນຄວນຈະລອງປັບເບິ່ງ ແລະ ພິຈາລະນາເຫດຜົນກັບຄົນຮ່ວມງານ

## ບາງວິທີການທີ່ສຳຄັນ

ການເກັບກຳຂໍ້ມູນໃນບ້ານຈະມີວິທີການຕ່າງໆ ພາກທີ III ຂອງຄູ່ມືຫົວນີ້ຈະກຳນົດ 20 ກ່ວາວິທີການທີ່ສາມາດໃຊ້ໃນການເກັບກຳຂໍ້ມູນທີ່ ກ່ຽວຂ້ອງກັບເສດຖະກິດ ສັງຄົມ ແລະ ການນຳໃຊ້ເຄື່ອງປ່າຂອງດົງ ໃນບັນດາວິທີການດັ່ງກ່າວ ມີ 5 ວິທີການສຳຄັນທີ່ສາມາດໃຊ້ໃນຫຼາຍກໍລະນີໄດ້ ຄື:

### 1. ການຢັ້ງຢືນຄວາມແນ່ນອນຂອງຂໍ້ມູນ

ເວລາເກັບກຳຂໍ້ມູນໃນບ້ານ ເຮົາຕ້ອງຢັ້ງຢືນຄວາມຈິງ ຫຼື ຄວາມແນ່ນອນຂອງຂໍ້ມູນນັ້ນ ຄວນຈະກວດຄືນ ໂດຍວິທີການຕ່າງໆ ເຊັ່ນ : ການສັງເກດການໂດຍກົງ, ສຳພາດກັບຄົນອື່ນ.

- ຕ້ອງບັນທຶກຢ່າງລະອຽດວ່າ ຕ້ອງການຂໍ້ມູນຫຍັງ? ສາມາດເກັບຂໍ້ມູນນັ້ນໂດຍວິທີໃດແດ່?
- ຄວນອີງໃສ່ ປຶດບັນທຶກໃນເວລາເກັບກຳຂໍ້ມູນ ເພື່ອໃຫ້ຕິດຕາມ ການເຄື່ອນໄຫວຂອງຕົນເອງ.
- ເວລາໄດ້ຂໍ້ມູນແມ່ນຕ້ອງມີການບັນທຶກຢ່າງລະອຽດກ່ຽວກັບທີ່ມາ ແລະ ຄວາມແນ່ນອນຂອງຂໍ້ມູນນັ້ນ
- ໃນກໍລະນີທີ່ຂໍ້ມູນມີຄວາມບໍ່ແນ່ນອນ, ແມ່ນຄວນຊອກຫາຄຳເຫັນໂດຍວິທີໃໝ່ເພື່ອຢັ້ງຢືນ (ຂໍ້ຄວນເອົາໃຈໃສ່: ການຢັ້ງຢືນຂໍ້ມູນແບບນີ້ອາດຈະໃຊ້ເວລາຫຼາຍ - ຕ້ອງໃຈເຢັນ)

### 2 ການສຳພາດແບບເຄິ່ງຈັດວາງ.

ການສົນທະນາແບບທຳມະດາ ກັບຊາວບ້ານເປັນວິທີດີຫຼາຍ ທີ່ຈະຮຽນຮູ້ຫຼາຍອັນ ກ່ຽວກັບສະພາບການ ແລະ ຊີວິດການເປັນຢູ່ຂອງຊາວບ້ານ. ການສຳພາດແບບເຄິ່ງຈັດວາງແມ່ນການໂອ້ລົມກັນຢ່າງທຳມະດາ ໂດຍມີຜູ້ເກັບກຳຂໍ້ມູນ ຕັ້ງຄຳຖາມລວມໆ ເພື່ອຊີ້ນຳການສົນທະນານັ້ນ ການສຳພາດແບບນີ້ ຈະໄດ້ສຳພາດນຳຊາວບ້ານທັງຫຼາຍ ບໍ່ວ່າຍິງ ຫຼື ຊາຍ, ທຸກ ຫຼື ມີ ອາດຈະສຳພາດໃນຫຼາຍກໍລະນີກໍ່ໄດ້ (ຕົວຢ່າງ - ໄປຢາມເຮືອນຊານຂອງຊາວບ້ານ ຫຼື ທ່ຽວຫຼິ້ນຕາມເດີ່ນບ້ານຕາມຄວາມເໝາະສົມ)

ໃນການສຳພາດແບບເຄິ່ງຈັດວາງ, ຄວນຈະເອົາໃຈໃສ່ຕໍ່ໄປນີ້:

- ກຽມແລະຈົດບາງຄຳຖາມໄວ້ກ່ອນຈະເປີດການສຳພາດ ແຕ່ວ່າ ບໍ່ໃຫ້ອ່ານຄຳຖາມນັ້ນຕໍ່ໜ້າຊາວບ້ານ.
- ຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ (ອີງໃສ່ຂໍ້ມູນທີ່ຕ້ອງການ).
- ຫາເວລາ ແລະ ບ່ອນທີ່ຈະສະດວກ ແລະ ບໍ່ມີການລົບກວນ.
- ໃນການຕັ້ງຄຳຖາມ, ແມ່ນຄວນອີງໃສ່ຄຳຖາມລວມໆ ທີ່ກຽມໄວ້ແລ້ວ, ແຕ່ບໍ່ຄວນເຄັ່ງຄັດຫຼາຍ (ຕົວຢ່າງ, ອາດຈະຕັ້ງຄຳຖາມໃໝ່ ກ່ຽວກັບເລື່ອງທີ່ບໍ່ໄດ້ກຽມໄວ້ກໍ່ໄດ້).
- ໃຫ້ຕັ້ງຄຳຖາມທີ່ເຮັດໃຫ້ຊາວບ້ານສາມາດອະທິບາຍຄຳຕອບຢ່າງລະອຽດ (ຕົວຢ່າງ: ໃຊ້ຄຳວ່າ "ເປັນຫຍັງ?", "ແນວໃດ?", "ຢູ່ໃສ?") ບໍ່ໃຫ້ຕັ້ງຄຳຖາມທີ່ຊາວບ້ານຈະໄດ້ຕອບພຽງແຕ່ວ່າ "ແມ່ນ" ຫຼື "ບໍ່ແມ່ນ".
- ໃຫ້ມີຄົນບັນທຶກການສົນທະນາຢ່າງລະອຽດຄົບຖ້ວນ.

3. ການສັງເກດການໂດຍກົງ.

ການສັງເກດການໂດຍກົງເປັນວິທີດີຫຼາຍເພື່ອເກັບກຳຂໍ້ມູນ ໃນເວລາ ທີ່ເຮົາກຳລັງເຄື່ອນໄຫວວຽກງານ ເຮົາຕ້ອງມີການສັງເກດໂດຍກົງກ່ຽວກັບຫຼາຍບັນຫາ ທີ່ບໍ່ມີກຳນົດ ເຊັ່ນ: ສະພາບຂອງບ້ານ ແລະ ຊີວິດການເປັນຢູ່ຂອງຊາວບ້ານ, ການຮ່ວມມືຂອງຜູ້ໃຫ້ຂໍ້ມູນ ແລະອື່ນໆ ການສັງເກດໂດຍກົງຈະເປັນວິທີໜຶ່ງເພື່ອແກ້ໄຂບັນຫາຕໍ່ໄປນີ້:

- ຢັ້ງຢືນຄວາມແນ່ນອນ ຫຼື ເປັນຈິງຂອງຂໍ້ມູນທີ່ເກັບໄດ້ແລ້ວ.
- ປະຫຍັດເວລາໃນການສອບຖາມ.
- ຖ້າມີຄວາມບໍ່ເຂົ້າໃຈກັນໃນການສົນທະນາກັບຊາວບ້ານ, ອາດຈະແກ້ໄຂໄດ້ໂດຍການສັງເກດການໂດຍກົງ.

4. ການຈັດລະດັບ.

ການຈັດລະດັບ ເປັນວິທີການນຶ່ງທີ່ຈະບອກເຖິງສິ່ງທີ່ສຳຄັນກວ່າໝູ່ສຳລັບຊາວບ້ານ ຄື ຈັດປະເພດບັນຫາຕ່າງໆ ເປັນລະດັບ. ວິທີການນີ້ ສາມາດເຮັດກັບບຸກຄົນໃດນຶ່ງ ໃນການສຳພາດແບບເຄິ່ງຈັດວາງ ຫຼື ຈະເຮັດເປັນກຸ່ມກໍ່ໄດ້. ວິທີການນີ້ສ່ວນຫຼາຍຈະໄດ້ແບ່ງຜູ້ໃຫ້ຂໍ້ມູນອອກເປັນກຸ່ມຍິງ, ກຸ່ມຊາຍເພື່ອໃຫ້ເຂົ້າໃຈຄວາມແຕກຕ່າງກັນລະຫວ່າງຍິງ ແລະ ຊາຍໃນຄວາມຄິດເຫັນ.

ການຈັດລະດັບສາມາດປະຕິບັດ ໂດຍສອງວິທີ ຄື :

1. ການໃຫ້ຄະແນນ.
2. ການສົມທຽບ.

ລາຍລະອຽດໃຫ້ເບິ່ງຕົວຢ່າງ ໜ້າທີ 38 ແລະ ໜ້າທີ 42 ຂອງຄູ່ມືທີ່ນີ້.

ເລື່ອງສຳຄັນທີ່ສຸດໃນວິທີການຈັດລະດັບແມ່ນຕ້ອງເຂົ້າໃຈເຫດຜົນຂອງຊາວບ້ານ - ຕອນໃດທີ່ມີການຈັດລະດັບ, ຕ້ອງມີຄົນບັນທຶກການສົນທະນາກ່ຽວກັບເຫດຜົນຂອງຊາວບ້ານຢ່າງລະອຽດ.

5. ການແຕ້ມແຜນວາດ.

ການແຕ້ມແຜນວາດ ຫຼື ສ້າງຮູບພາບອື່ນໆ ສາມາດປະກອບຂໍ້ມູນໄດ້ຫຼາຍແນວ ຊຶ່ງເປັນພາບທີ່ເຂົ້າໃຈໄດ້ງ່າຍ ເວລາຊາວບ້ານແຕ້ມແຜນວາດເປັນກຸ່ມຈະສ້າງໂອກາດທີ່ດີໃຫ້ມີສ່ວນຮ່ວມຂອງ ຊາວບ້ານຫຼາຍຄົນ (ໃນພາກ ທີ່ 3 ຂອງຄູ່ມືນີ້ຈະໄດ້ອະທິບາຍ ວິທີການແຕ້ມແຜນວາດຢ່າງລະອຽດ) ເບິ່ງໜ້າ 36 ແລະ ໜ້າ 44 ໃນຄູ່ມືຫົວນີ້.

ຜູ້ເກັບກຳຂໍ້ມູນ ສາມາດນຳໃຊ້ 5 ວິທີການສຳຄັນ ຕາມຄວາມເໝາະສົມກັບສະພາບ ແລະ ເງື່ອນໄຂຕ່າງໆ ໃນບ້ານ. ພາກທີ່ 3 ຂອງຄູ່ມືຫົວນີ້ຈະມີຄຳອະທິບາຍທີ່ລະອຽດຕື່ມ.

## ບົດບາດຂອງການເກັບກຳຂໍ້ມູນແບບມີສ່ວນຮ່ວມໃນການເຄື່ອນໄຫວຂອງໂຄງການ.

ການເກັບກຳຂໍ້ມູນແບບມີສ່ວນຮ່ວມເປັນຂັ້ນຕອນນຶ່ງ ໃນວຽກງານການສົ່ງເສີມການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ.

ຂັ້ນຕອນໃຫຍ່ຂອງການປະຕິບັດຂອງໂຄງການ



# ພາກ 2

## ການຝຶກອົບຮົມ

# ພາກ 2 ການຝຶກອົບຮົມ

ຈຸດປະສົງຂອງການຝຶກອົບຮົມ ກ່ຽວກັບ ການເກັບກຳຂໍ້ມູນແບບມີສ່ວນຮ່ວມ ແມ່ນເພື່ອສ້າງຄວາມສາມາດໃນການເກັບກຳຂໍ້ມູນກ່ຽວກັບເຄື່ອງປ່າຂອງດົງໂດຍໃຫ້ຊາວບ້ານມີສ່ວນຮ່ວມ ໃນການຄົ້ນຄວ້າ, ເຂົ້າໃຈ ແລະ ວິເຄາະ ຂໍ້ມູນຕົ້ນຕໍໃນເຂດບ້ານ.

ສຳຫຼັບການຝຶກອົບຮົມ ແມ່ນຕ້ອງໃຫ້ ນັກສຳມະນາກອນມີສ່ວນຮ່ວມເຊັ່ນກັນ ເພື່ອເປັນການແລກປ່ຽນບົດຮຽນ ແລະ ປະສົບປະການລະຫວ່າງພາກສ່ວນຕ່າງໆ ທີ່ຈະໄດ້ລົງພາກສະໜາມເກັບກຳຂໍ້ມູນ ກ່ຽວກັບບັນຫາເຄື່ອງປ່າຂອງດົງ ຫຼື ບັນຫາອື່ນໆກ່ຽວກັບສະພາບເສດຖະກິດສັງຄົມໃນລະດັບບ້ານ. ນອກຈາກນັ້ນ ການຝຶກອົບຮົມ ຍັງຈະໃຫ້ໂອກາດແກ່ຄູຝຶກ ເພື່ອປັບປຸງຄວາມສາມາດຂອງຕົນເອງ.

ໃນພາກນີ້ ຈະໄດ້ສະເໜີບາງຫົວຂໍ້ ກ່ຽວກັບບັນຫາການຝຶກອົບຮົມເນື້ອໃນຂອງຄູ່ມືຫົວນີ້.

## 1. ກະກຽມເພື່ອການຈັດຝຶກອົບຮົມ

ຖ້າຈະເປີດຊຸດອົບຮົມ, ກ່ອນອື່ນໝົດຕ້ອງຂຽນແຜນການຝຶກອົບຮົມ ດັ່ງຕໍ່ລົງໄປນ :

1. ແມ່ນໃຜຄວນຈະເຂົ້າຮ່ວມ? ຈະກຳນົດດ້ວຍເຫດຜົນຫຍັງ?
2. ຈະຝຶກ ກ່ຽວກັບຫຍັງ?
3. ຈະຝຶກຢູ່ໃສ?
4. ໃຜຄວນຈະເປັນຄູຝຶກໃຫ້? ຈະກຳນົດດ້ວຍເຫດຜົນຫຍັງ?
5. ຈະຝຶກປະຕິບັດຕົວຈິງຢູ່ບ້ານໃດແດ່?
6. ຈະຈັດໃນເວລາໃດ?
7. ຈະຈັດຕາຕະລາງຝຶກຄືແນວໃດ?
8. ຕ້ອງການປະກອບອຸປະກອນຫຍັງແດ່ເພື່ອການຝຶກ?
9. ຕ້ອງການງົບປະມານເທົ່າໃດ?
10. ການພົວພັນກັບພາກສ່ວນຕ່າງໆ (ແຈ້ງການຕ່າງໆ, ໜັງສື, ແລະ ອື່ນໆ) ເປັນແນວໃດ?

- ໃຫ້ສົນທະນາໃນທີມງານກ່ຽວກັບແຕ່ລະບັນຫາ ແລະ ວາງແຜນລະອຽດ.
- ທີມງານຄວນຈະແບ່ງໜ້າທີ່ຮັບຜິດຊອບໃຫ້ແຕ່ລະຄົນຢ່າງຈະແຈ້ງ.
- ກ່ອນຈະຈັດການຝຶກອົບຮົມ ໃຫ້ສົນທະນາ ແລະ ກວດຄືນໝົດທຸກບັນຫາ ທີ່ສະເໜີຂ້າງເທິງ.

## 2. ທັດສະນະທີ່ດີຂອງຄູຝຶກ

ບັນດາວິທີຕໍ່ໄປນີ້ຈະຊ່ວຍໃນການເຮັດໃຫ້ມີການສ່ວນຮ່ວມຂອງນັກສຳມະນະກອນ ແລະຈຶ່ງໃຫ້ໄດ້ຜົນດີໃນການຝຶກອົບຮົມ:

- ຄູຝຶກບໍ່ຄວນເວົ້າຫຼາຍ ຄວນເວົ້າພໍໃຫ້ເຂົ້າໃຈ, ແລ້ວຈຶ່ງມອບໃຫ້ນັກສຳມະນາກອນ ລອງປະຕິບັດຕົວຈິງໂດຍຕົນເອງ.
- ເວລາກຳລັງເວົ້າຕໍ່ໜ້ານັກສຳມະນາກອນທັງຫຼາຍ ແມ່ນຜູ້ຝຶກຄວນເບິ່ງໜ້າເຂົາເຈົ້າ - ບໍ່ໃຫ້ເບິ່ງແຕ່ປຶ້ມໃນເວລາຝຶກ.
- ໃຫ້ຍິ້ມ ແລະ ສະເໜີບົດຝຶກດ້ວຍອາລົມດີ.
- ບໍ່ໃຫ້ຟ້າວຫຼາຍ.
- ໃຫ້ສ້າງຄວາມສາມັກຄີ ແລະ ຄວາມເປັນກັນເອງກັບນັກສຳມະນາກອນເລື້ອຍໆ ທັງນອກ ແລະ ໃນຫ້ອງຝຶກ.
- ຄວນໃຫ້ນັກສຳມະນາກອນ ມີຄວາມຮູ້ວ່າ ເປັນການແລກປ່ຽນກັບຄູຝຶກ.
- ການຝຶກບໍ່ຄວນມີແຕ່ຄູຝຶກເວົ້າຕະຫຼອດ, ຄົນອື່ນນັ່ງຟັງ, ພະຍາຍາມໃຫ້ນັກສຳມະນາກອນໝົດທຸກ ຄົນໄດ້ປະກອບສ່ວນເລື້ອຍໆ.

**ການສອນຜູ້ໃຫຍ່**

**ຄູຝຶກຕ້ອງຄຳນຶງເຖິງບັນຫາດັ່ງລຸ່ມນີ້ໃນເວລາຝຶກໃຫ້ຜູ້ໃຫຍ່ :**

- ການຮຽນຂອງຜູ້ໃຫຍ່ ຈະແຕກຕ່າງກັນກັບການຮຽນຂອງເດັກນ້ອຍ.
- ຜູ້ໃຫຍ່ມີປະສົບການ ແລະ ຄວາມຮູ້ຫລາຍດ້ານແລ້ວ ແລະ ສາມາດປະກອບສ່ວນໃນການຝຶກອົບຮົມໄດ້ຫລາຍອັນ.
- ເວລາຜູ້ໃຫຍ່ຮຽນ ຕ້ອງມີການລົງມືປະຕິບັດຕົວຈິງ ຈຶ່ງຈະໄດ້ຮັບຜົນດີໃນການສອນ.
- ເວລາຝຶກຜູ້ໃຫຍ່ ຕ້ອງໃຫ້ບົດຝຶກສອດຄ່ອງກັບຊີວິດຕົວຈິງຂອງເຂົາເຈົ້າ.
- ຜູ້ໃຫຍ່ຈະມີລະດັບຄວາມຮູ້ແຕກຕ່າງກັນ ຄວນເອົາໃຈໃສ່ ໃນການຮຽນຮູ້ ແລະ ນັບຖືຄວາມແຕກຕ່າງກັນຂອງແຕ່ລະຄົນໃນຊຸດຝຶກອົບຮົມ.
- ໃຫ້ໃຈເຢັນ, ບໍ່ຕ້ອງຟ້າວທັກທ້ວງນັກສຳມະນາກອນວ່າ ອັນໃດຖືກ ຫຼື ຜິດ.
- ຄວນໃຫ້ຄຳຊົມເຊີຍ ກ່ອນຄຳຕິຊົມ.
- ຖ້າຈະໃຫ້ຄຳຕິຊົມ ຕ້ອງອະທິບາຍເຫດຜົນຢ່າງຈະແຈ້ງ.

ຂໍ້ຄວນເອົາໃຈໃສ່ :

- ຄິດໄວ້ກ່ອນ ກ່ຽວກັບລະດັບ ແລະ ຈຳນວນຂອງນັກສຳມະນາກອນ - ມີຫຍັງທີ່ເຂົາເຈົ້າຮູ້ແລ້ວ? ມີຫຍັງທີ່ເຂົາເຈົ້າຈຳເປັນຕ້ອງຮູ້? ມີຫຍັງທີ່ບໍ່ຈຳເປັນຕ້ອງຝຶກກໍ່ໄດ້? (ເຮັດແບບນີ້ຈຶ່ງບໍ່ເສຍເວລາໃນການຝຶກ).
- ກະກຽມບົດຝຶກດີໆ ກ່ອນຈະເຂົ້າໄປຝຶກໃຫ້ (ເຮັດແບບນີ້ຈຶ່ງຈະບໍ່ຢ້ານໃນການຝຶກ) ຫຼັງຈາກຝຶກແລ້ວແຕ່ລະເທື່ອ, ຄວນຈະພິຈາລະນາວ່າການຝຶກນັ້ນໄດ້ມີຈຸດດີ ແລະ ຈຸດອ່ອນຄືແນວໃດ (ຈຶ່ງຈະໄດ້ປັບປຸງລັກສະນະ ຂອງການຝຶກ ເພື່ອຍົກລະດັບໃນຕໍ່ໜ້າ).

## 3. ວິທີການຝຶກ

ຈຸດປະສົງອັນນຶ່ງຂອງຄູ່ມືຫົວນີ້ ແມ່ນເພື່ອຈະເປັນບ່ອນອີງ ສຳຫຼັບຄົນທີ່ຈະເປີດການຝຶກອົບຮົມກ່ຽວກັບ ການເກັບກຳຂໍ້ມູນແບບມີສ່ວນຮ່ວມ ກ່ອນຈະໄດ້ແນະນຳແຕ່ລະວິທີການເກັບກຳຂໍ້ມູນໃນພາກທີ III, ພາກນີ້ຈະແນະນຳບາງຫົວຂໍ້ ກ່ຽວກັບວິທີຝຶກ ແລະ ບັນຫາຕ່າງໆ ໃນການເປີດການຝຶກອົບຮົມ.

**ແນະນຳການຝຶກວິທີການຕ່າງໆ .**

ສຳຫຼັບແຕ່ລະຫົວຂໍ້ (ເບິ່ງພາກ ທີ I ແລະ III) ໃຫ້ໃຊ້ວິທີຝຶກຕໍ່ໄປນີ້:

ສະຫຼຸບແລ້ວ ການຮຽນຮູ້ຈາກການປະຕິບັດ ມີຂັ້ນຕອນຕໍ່ໄປນ :

**ຮຽນຈາກການປະຕິບັດ**

1. ອະທິບາຍ ( ເວລາສັ້ນ ).
2. ປະຕິບັດຕົວຈິງ.
3. ສ່ອງແສງຄືນ / ຖອດຖອນບົດຮຽນນຳກັນ.
4. ກວດສອບ.

1. ອະທິບາຍຫົວຂໍ້ເປັນເວລາສັ້ນ (5 -10 ນາທີ).

   ສຳຫຼັບແຕ່ລະຫົວຂໍ້, ກ່ອນອື່ນຄວນບອກນັກສຳມະນາກອນຢ່າງຈະແຈ້ງວ່າຈະເວົ້າເຖິງເລື່ອງຫຍັງ, ແລ້ວຈຶ່ງອະທິບາຍຕາມເນື້ອໃນທີ່ແນະນຳໄວ້ໃນແຕ່ລະຫົວຂໍ້ ໃຫ້ໃຊ້ເວລາບໍ່ເກີນ 10 ນາທີ.

2. ປະຕິບັດຕົວຈິງໂດຍນັກສຳມະນະກອນເອງ

   ໃຫ້ນັກສຳມະນາກອນເປັນຜູ້ລົງມືລອງປະຕິບັດວິທີການໂດຍຕົນເອງ ໃນນີ້ອາດຈະໃຊ້ຫຼາຍວິທີ ເຊັ່ນ:

   - ຝຶກເປັນກຸ່ມໃຫຍ່ - ໃຫ້ນັກສຳມະນາກອນແບ່ງອອກເປັນສອງກຸ່ມ, ກຸ່ມນຶ່ງສົມມຸດເປັນຜູ້ເກັບກຳຂໍ້ມູນ, ອີກກຸ່ມນຶ່ງສົມມຸດເປັນຊາວບ້ານ.
   - ຝຶກເປັນກຸ່ມນ້ອຍ - ໃນແຕ່ລະກຸ່ມໃຫ້ຄົນສ່ວນນຶ່ງສົມມຸດເປັນຜູ້ເກັບກຳຂໍ້ມູນ, ອີກສ່ວນນຶ່ງສົມມຸດເປັນຊາວບ້ານ.
   - ໃຫ້ຄູຝຶກຕິດຕາມແລະ ໃຫ້ຄຳແນະນຳຕາມຄວາມຕ້ອງການ.

- ວິທີເພີ່ມເຕີມທີ 1: ແບ່ງເປັນກຸ່ມຄົ້ນຄ້ວາ

  ຫຼັງຈາກສະເໜີຫົວຂໍ້ໃດໜຶ່ງແລ້ວ ໃຫ້ນັກສຳມະນາກອນແບ່ງ ເປັນກຸ່ມຍ່ອຍເພື່ອພິຈາລະນາ ແລະ ຄົ້ນຄ້ວານຳກັນ - ອາດຈະໃຫ້ອີງໃສ່ປຶ້ມຄູ່ມືນີ້ເປັນຫຼັກ ແລະ ໃຫ້ຜູ້ຝຶກຕິດຕາມ ແລະ ໃຫ້ຄຳແນະນຳຕາມຄວາມຕ້ອງການ.

- ວິທີເພີ່ມເຕີມທີ 2: ສົນທະນາເລື່ອງຕີຄວາມໝາຍຂອງສັບ

  ໃນຫຼາຍກໍລະນີ ເລື່ອງຄວາມໝາຍຂອງສັບຈະເປັນເລື່ອງສຳຄັນຫຼາຍທັງໃນການຝຶກ ແລະ ໃນການນຳໃຊ້ແຕ່ລະວິທີການ ຂອງການເກັບກຳຂໍ້ມູນແບບມີສ່ວນຮ່ວມ - ເຮົາຕ້ອງຮັບຮູ້ວ່າຄວາມຄິດອັນໃດນຶ່ງ ສາມາດອະທິບາຍໄດ້ຫຼາຍແນວ ໃນບາງກໍລະນີພາສາເຕັກນິກ ຈະເໝາະສົມໃນການຝຶກ (ຕົວຢ່າງ : ໃນກໍລະນີທີ່ຜູ້ເຂົ້າຮ່ວມເປັນນັກວິຊາການ), ແຕ່ຈະບໍ່ເໝາະສົມໃນການສົນທະນາຕົວຈິງກັບຊາວບ້ານ, ເພາະວ່າ ເຂົາເຈົ້າຈະບໍ່ເຂົ້າໃຈ ເຮົາຕ້ອງເອົາໃຈໃສ່ ໃຫ້ມີຄວາມສາມາດອະທິບາຍບັນຫາໃດນຶ່ງເປັນຫຼາຍຄຳເວົ້າ ໃນຫຼາຍລະດັບໄດ້.

3. ການຖອດຖອນບົດຮຽນນຳກັນ.

   ຫຼັງຈາກນັກສຳມະນາກອນ ໄດ້ຝຶກໂດຍກົງແລ້ວ, ຕ້ອງມີການຖອດຖອນບົດຮຽນນຳກັນ ແລະ ປຽບທຽບປະສົບປະການຕ່າງໆ ອາດຈະສົນທະນາກັນເປັນກຸ່ມໃຫຍ່ເລີຍ ຫຼື ອາດຈະສົນທະນາເປັນກຸ່ມຍ່ອຍກ່ອນ ຈຶ່ງສະເໜີໃນກຸ່ມໃຫຍ່.

   ຂໍ້ຄວນເອົາໃຈໃສ່: ໃນຕອນຖອດຖອນບົດຮຽນນຳກັນ, ຕ້ອງພະຍາຍາມໃຫ້ນັກສຳມະນາກອນປະກອບສ່ວນໝົດທຸກຄົນ.

4. **ການກວດສອບ.**

ຫຼັງຈາກເປີດການຝຶກອົບຮົມ ຄູຝຶກຕ້ອງມີວິທີເພື່ອຕີລາຄາຄວາມເຂົ້າໃຈຂອງນັກສຳມະນາກອນ ເຊັ່ນ:

- ສະຫຼຸບ ແລະ ສ່ອງແສງຄືນ - ໃຫ້ນັກສຳມະນາກອນປະເມີນຜົນ ຂອງຕົນເອງໃນການສົນທະນາເປັນກຸ່ມໃຫຍ່ ຫຼື ອາດຈະໃຫ້ນັກສຳມະນາກອນຂຽນການປະເມີນຜົນຂອງຕົນເອງເພື່ອສົ່ງໃຫ້ຄູຝຶກ.
- ການສັງເກດ ແລະ ການບັນທຶກ - ຄູຝຶກຕ້ອງມີການສັງເກດການໂດຍກົງທີ່ບັນທຶກໄວ້ຢ່າງລະອຽດກ່ຽວກັບການປະກອບສ່ວນ ແລະ ຄວາມເຂົ້າໃຈຂອງນັກສຳມະນາກອນແຕ່ລະຄົນ.
- ການຕັ້ງຄຳຖາມແບບກວດສອບ - ຄູຝຶກອາດຈະນຳໃຊ້ບົດກວດສອບທີ່ຕັ້ງຄຳຖາມ ກ່ຽວກັບບົດສະເໜີຕ່າງໆ ໃນການຝຶກ

5. **ການສ້າງຕາຕະລາງຝຶກ.**

   ກ່ອນຈະເປີດການຝຶກອົບຮົມຕ້ອງໄດ້ຈັດຕາຕະລາງການຝຶກໃຫ້ລະອຽດແລະຄົບຖ້ວນ ຄວນກຳນົດກິດຈະກຳຕໍ່ໄປນີ້:

   - ລົງທະບຽນ
   - ພິທີເປີດ/ປິດ
   - ເວລາຝຶກ

- ເວລາພັກຜ່ອນ
- ຕາຕະລາງປະຈຳວັນ
- ປະເມີນຜົນການຝຶກອົບຮົມ
- ສ້າງບັນຍາກາດ (ກຸ່ມສິດເວນຮັບຜິດຊອບ)

ຕົວຢ່າງ:

ມື້ທີ 1. ວັນທີ ....................

| ເວລາ | ເນື້ອໃນ | ວິທີການ | ຜູ້ດຳເນີນການ |
|---|---|---|---|
| 8:00-8:30 | ລົງທະບຽນ | ຂຽນໃສ່ຟອມ | ສ/ຫ ກ |
| 8:30-9:00 | ພິທີເປີດ | ກຸ່ມໃຫຍ່ | ສ/ຫ ຂ |
| 9:00-9:15 | ພັກຜ່ອນ | | |
| 9:15-9:45 | ແນະນຳຕົວ | ເກມ(ເບິ່ງໜ້າ 14 ) ? | ສ/ຫ ກ |
| 9:45-10:00 | ສ້າງກົດລະບຽບຮ່ວມກັນ (ແບ່ງກຸ່ມສິດເວນ) | ກຸ່ມໃຫຍ່ (ເບິ່ງໜ້າ 15 - 16 )? | ສ/ຫ ຂ |
| 10:00-10:20 | ສ້າງຄວາມຄາດຫວັງ | ກຸ່ມໃຫຍ່ ໃຊ້ເຈັ້ຽນ້ອຍ ຢາຍ (ເບິ່ງໜ້າ 17) ? | ສ/ຫ ຂ |
| 10:20-12:00 | ການເກັບກຳຂໍ້ມູນແບບມີສ່ວນຮ່ວມ | ສົນທະນາກຸ່ມໃຫຍ່ ບັນທຶກ ແລະ ສັງລວມ (ອີງໃສ່ຄູ່ມື ພາກ 1.) | ສ/ຫ ຄ |
| 12:00-13:30 | ອາຫານທ່ຽງ | | |
| - | | | |
| - | | | |

## ການເລີ້ມຕົ້ນຂອງການດຳເນີນການ.

ກ່ອນຈະເຂົ້າເຖິງເນື້ອໃນ ຂອງການຝຶກອົບຮົມ ທຸກຄັ້ງ ຕ້ອງມີ 4 ຫົວຂໍ້ລຸ່ມນີ້ ເພື່ອດຳເນີນໄດ້ໃນຫລາຍໆວິທີການ ແຕ່ໃນຄູ່ມືຫົວນີ້ໄດ້ນຳສະເໜີສະເພາະແຕ່ວິທີດຽວ.

ການເລີ້ມຕົ້ນຂອງການດຳເນີນການ.

| |
|---|
| ການແນະນຳຕົວ.<br>ການສ້າງກົດລະບຽບຮ່ວມກັນ<br>ການແບ່ງກຸ່ມສິດເວນ<br>ການສ້າງຄວາມຄາດຫວັງ |

# • ການແນະນຳຕົວໃນການຝຶກອົບຮົມ •

ແມ່ນຫຍັງ?

ວິທີການນີ້ແມ່ນເພື່ອໃຫ້ມີຄວາມລົ້ງເຄີຍລະຫວ່າງຜູ້ເຂົ້າຮ່ວມການຝຶກອົບຮົມທັງໝົດ

ເຮັດແນວໃດ?

- ກຽມເຈັ້ຽສະຫຼາກໄວ້ໃຫ້ມີຈຳນວນເທົ່າກັນກັບຄົນເຂົ້າຮ່ວມໃນການຝຶກອົບຮົມ ແລະ ຂຽນຊື່ວັດຖຸຕ່າງໆ ດັ່ງລຸ່ມນີ້ (ໃຫ້ຂຽນແຕ່ຊື່ດຽວຕໍ່ສະຫຼາກໃບນຶ່ງ, ແຕ່ໃຫ້ແຕ່ລະໃບມີຄູ່ອີກໃບນຶ່ງ - ຕົວຢ່າງ, ຖ້າຂຽນ "ປາ" ໃສ່ໃບໜຶ່ງ, ຕ້ອງມີອີກໃບນຶ່ງຂຽນ "ນ້ຳ"):

| | | | | |
|---|---|---|---|---|
| ໃບຢານາງ, ໜໍ່ໄມ້ | ບ່າວ, ສາວ | ຕົວຢ່າງ: | ສາວ | ບ່າວ |
| ກົບ, ຂຽດ | ໂຕະ, ຕັ່ງ | | | |
| ປາ, ນ້ຳ | ປຶ້ມ, ບິກ | | ໂຕະ | ຕັ່ງ |
| ນ້ຳມັນຍາງ, ກົກຍາງ | ສໍຂາວ, ກະດານດຳ | | | |
| ແມ່ເຜິ້ງ, ຮັງເຜິ້ງ | ລົດ, ນ້ຳມັນ | | | |
| ຄົກ, ສາກ | ຄາດ, ໄຖ | | | |
| ຖ້ວຍ, ບ່ວງ | ຈິກ, ຊວານ | | | |
| ... | ... | | | |

- ພັບເຈັ້ຽສະຫຼາກ ແລ້ວເອົາໃສ່ໃນກັບອັນໃດນຶ່ງ ( ຂໍ້ສັງເກດ : ຄວນກຽມໄວ້ກ່ອນ ).
- ສະເໜີຈຸດປະສົງຂອງການແນະນຳຕົວໃຫ້ແກ່ຜູ້ເຂົ້າຮ່ວມ.
- ໃຫ້ຜູ້ເຂົ້າຮ່ວມຈົກສະຫຼາກທີ່ໄດ້ຂຽນໃສ່ ຊື່ວັດຖຸຕ່າງໆ.
- ໃຫ້ຜູ້ເຂົ້າຮ່ວມຊອກຄູ່ຂອງຕົນເອງຕາມທີ່ຂຽນໄວ້ໃນສະຫຼາກໃຜມັນໂດຍມີການສອບຖາມໝູ່ເຂົ້າຮ່ວມ.
- ຫຼັງຈາກຫາຄູ່ຂອງຕົນເອງໄດ້ແລ້ວແມ່ນມີການສຳພາດຄູ່ຕົນເອງ, ເປັນຕົ້ນ ຊື່ ແລະ ນາມສະກຸນ, ມາຈາກໃສ, ຢູ່ໃສ, ສ້າງຄອບຄົວ ແລ້ວບໍ່? ເຮັດວຽກຢູ່ໃສ? ແລະ ອື່ນໆ.
- ຈາກນັ້ນ ໃຫ້ແຕ່ລະຄົນແນະນຳຄູ່ຂອງຕົນເອງ.
- ເຮັດດັ່ງນີ້ຈົນໝົດທຸກຄູ່.

(ຂໍ້ສັງເກດ - ຄວນໃຫຄູ່ຝຶກເຂົ້າຮ່ວມພ້ອມ)

# • ການສ້າງລະບຽບຮ່ວມກັນ •

ແມ່ນຫຍັງ?

ວິທີການນີ້ຈະເຮັດໃຫ້ທຸກຄົນມີສ່ວນຮ່ວມໃນການກຳນົດເວລາຂອງການຝຶກອົບຮົມ ແລະຮັກສາການປະຕິບັດເວລາເຂົ້າອອກໃຫ້ຖືກກັບເວລາທີ່ໄດ້ກຳນົດໄວ້

ເຮັດແນວໃດ?

- ສະເໜີໃຫ້ຜູ້ເຂົ້າຮ່ວມອອກຄຳເຫັນ ແລະ ໃຫ້ມີຄວາມເອກະພາບກັນ ໃນການກຳນົດເວລາການເຂົ້າອອກການຝຶກ ແລະ ໃຫ້ຂຽນໃສ່ເຈ້ຍແຜ່ນໃຫຍ່ຕິດໄວ້ຢູ່ຝາຫ້ອງຝຶກ

ຕົວຢ່າງ:



# • ການແບ່ງກຸ່ມສິດເວນ •

ແມ່ນຫຍັງ?

ການຈັດກຸ່ມສິດເວນແມ່ນເພື່ອສະດວກ ໃນການຄຸ້ມຄອງການຝຶກອົບຮົມ, ການຕິດຕາມເວລາ, ແລະ ການສະຫຼຸບປະເມີນຜົນການຝຶກອົບຮົມປະຈຳວັນ

ເຮັດແນວໃດ?

- ສະເໜີໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນນັບ 1 ຫາ 6 ຕໍ່ ຈົນໄດ້ນັບທຸກຄົນ.
- ຈັດກຸ່ມຕາມເລກ ເປັນ 6 ກຸ່ມ, ຂຽນໃສ່ເຈັ້ຍແຜ່ນໃຫຍ່.
  (ຕົວຢ່າງ, ເວລານັບຕົວເລກລຽນກັນໄປ, ຖ້າມີຄົນນັບ "ສອງ", ຜູ້ນັ້ນຈະເຂົ້າໃນກຸ່ມທີ່ 2, ຖ້ານັບ "ສີ່" ກໍ່ເຂົ້າໃນກຸ່ມທີ່ 4).
- ໃນແຕ່ລະກຸ່ມ ສະເໜີໃຫ້ຄັດເລືອກຫົວໜ້າ ແລະ ຮອງຫົວໜ້າກຸ່ມ.
- ສະເໜີໃຫ້ ຜູ້ເຂົ້າຮ່ວມ ກຳນົດໜ້າທີ່ຮັບຜິດຊອບ ຂອງກຸ່ມສິດເວນ.
- ສະເໜີໃຫ້ກຸ່ມທີນຶ່ງ ຂຶ້ນມາຮັບເອົາ.

<u>ຕົວຢ່າງ</u> :



# • ສ້າງຄວາມຄາດຫວັງຂອງການຝຶກອົບຮົມ •

ແມ່ນຫຍັງ?

ເປັນວິທີການໃຫ້ເຂົ້າໃຈຄວາມຄາດຫວັງຂອງຜູ້ເຂົ້າຮ່ວມໃນການຝຶກອົບຮົມ ເພື່ອການຕອບສະໜອງຕາມເງື່ອນໄຂທີ່ເໝາະສົມ, ເພື່ອສັງລວມ ແລະ ເປັນບ່ອນອີງໃນເວລາປະເມີນຜົນນຳຫຼັງ.

ເຮັດແນວໃດ?

- ຜູ້ດຳເນີນການຝຶກອົບຮົມຕັ້ງຄຳຖາມ ໃຫ້ຜູ້ເຂົ້າຮ່ວມວ່າ:
  " ນັກສຳມະນາກອນເຂົ້າຮ່ວມການຝຶກອົບຮົມຄັ້ງນີ້ ມີຄວາມຄາດຫວັງຫຍັງແດ່?"
  (ຂຽນຄຳຖາມໃສ່ກະດານ ຫຼື ເຈັ້ຍໃຫຍ່ກໍ່ໄດ້).
- ຢາຍເຈັ້ຍນ້ອຍໃຫ້ຜູ້ເຂົ້າຮ່ວມຂຽນຄຳຕອບຂອງຕົນເອງໃສ່, ຂໍ້ນຶ່ງຕໍ່ເຈັ້ຍແຜ່ນນຶ່ງ.
- ຂຽນແລ້ວເກັບເຈັ້ຍຄືນ.
- ໃຫ້ຄູຝຶກສະຫຼຸບເນື້ອໃນສຳຄັນຂອງຄວາມຄາດຫວັງ ເປັນຫົວຂໍ້ລວມຕິດໃສ່ເຈັ້ຍແຜ່ນໃຫຍ່.
- ໃນມື້ສຸດທ້າຍ ຂອງການຝຶກອົບຮົມ ຈະມີການປະເມີນຄືນ ການຕອບສະໜອງຄວາມຄາດຫວັງຂອງຜູ້ເຂົ້າຮ່ວມ.

ຂໍ້ສັງເກດ :

- ຖ້າຫາກວ່າ ມີຄວາມຄາດຫວັງທີ່ນອກເໜືອຈາກເນື້ອໃນ ຂອງການຝຶກອົບຮົມ ຄູຝຶກຄວນສະເໜີໃນກອງປະຊຸມ.

# ພາກ 3
# ວິທີການເກັບກຳຂໍ້ມູນແບບມີສ່ວນຮ່ວມ

# ພາກ 3 ວິທີການເກັບກຳຂໍ້ມູນແບບມີສ່ວນຮ່ວມ

ໃນພາກທີ່ 3 ນີ້, ຈະໄດ້ແນະນຳບັນດາວິທີການທີ່ສາມາດນຳໃຊ້ໃນການເກັບກຳຂໍ້ມູນແບບມີສ່ວນຮ່ວມ ໃນນັ້ນຈະໄດ້ແບ່ງອອກເປັນ 4 ຫົວຂໍ້ໃຫຍ່ ຄື:

1. ເລີ່ມຕົ້ນ
   - → ສ້າງທີມງານ
   - → ຝຶກອົບຮົມ
   - → ວາງແຜນ
2. ຂໍ້ມູນກ່ຽວກັບເສດຖະກິດສັງຄົມ
   - → ແນະນຳ
   - → ເສດຖະກິດ ສັງຄົມ
   - → ເຄື່ອງປ່າຂອງດົງ
3. ການສັງລວມ
   - → ສ່ອງແສງຄືນ
   - → ຂຽນບົດລາຍງານ

ການນຳໃຊ້ຄຳສັບ.

ການເກັບກຳຂໍ້ມູນແບບມີສ່ວນຮ່ວມນີ້ ຄວນໃຊ້ສັບງ່າຍໆ ທີ່ເຂົ້າໃຈໂດຍກົງ. ເນື່ອງຈາກວ່າ ການໃຊ້ສັບເຕັກນິກ ຈະເຮັດໃຫ້ຊາວບ້ານມີຄວາມສັບສົນ. ດັ່ງນັ້ນ ຄູ່ມືຫົວນີ້ຈຶ່ງບໍ່ມີສັບເຕັກນິກຫລາຍ.

# 1. ເລີ້ມຕົ້ນ.

ສ້າງທີມງານ :

ໃນການສ້າງທີມງານ ເພື່ອການເກັບກຳຂໍ້ມູນແບບມີສ່ວນຮ່ວມ ຕ້ອງພິຈາລະນາ ແລະ ແກ້ໄຂບັນຫາດັ່ງຕໍ່ລົງໄປນີ້ :

- ຕ້ອງການຈັກຄົນ ?
- ໃຫ້ມີທັງຍິງ ແລະ ຊາຍ.
- ຄວນມີຄົນທີ່ມີປະສົບການແຕກຕ່າງກັນ.
- ຄວນປະກອບຄົນທີ່ຮູ້ຈັກພາສາທ້ອງຖິ່ນ.

ທີມງານຕ້ອງ :

- ມີຄວາມສາມັກຄີດີ.
- ຮູ້ຈັກລັກສະນະພິເສດ ຊຶ່ງກັນ ແລະ ກັນ.
- ເຄົາລົບນັບຖື ຊຶ່ງກັນ ແລະ ກັນ.

ຝຶກອົບຮົມ :

ກ່ອນຈະເຮັດວຽກພາກສະໜາມ ສະມາຊິກທີມງານ ຕ້ອງໄດ້ຜ່ານການຝຶກອົບຮົມ ວິທີການເກັບກຳຂໍ້ມູນແບບມີສ່ວນຮ່ວມ ( ລະອຽດ ກ່ຽວກັບວິທີການຈັດການຝຶກອົບຮົມ ໄດ້ສະເໜີຢູ່ໃນພາກທີ 2 ຂອງຄູ່ມືຫົວນີ້ ).

# • ການວາງແຜນລົງສະໜາມ •

ແມ່ນຫຍັງ?

ທີມງານ ຕ້ອງວາງແຜນເດີນທາງຢ່າງລັກແນ່ ແລະ ຕ້ອງກະກຽມເອກະສານ ແລະ ປະກອບອຸປະກອນຕ່າງໆໃຫ້ຄົບຖ້ວນກ່ອນຈະເດີນທາງ.

ເພື່ອຫຍັງ?

| |
|---|
| • ເພື່ອໃຫ້ຂໍ້ມູນລະອຽດຄົບຖ້ວນ ແລະ ບໍ່ໃຫ້ເສັຽເວລາຂອງຊາວບ້ານ. |

ເຮັດແນວໃດ?

1 ການວາງແຜນລົງສະໜາມ ຕ້ອງພິຈາລະນາ ແລະ ແກ້ໄຂບັນຫາດັ່ງນີ້ :

- ☐ ຢາກໄດ້ຂໍ້ມູນກ່ຽວກັບບັນຫາຫຍັງແດ່?
- ☐ ເປັນຫຍັງຢາກໄດ້ຂໍ້ມູນນີ້? ຈະເອົາໄປເຮັດຫຍັງ?
- ☐ ຈະໃຊ້ວິທີການໃດແດ່ ເພື່ອເກັບກຳຂໍ້ມູນນີ້ຢ່າງເໝາະສົມທີ່ສຸດ?
- ☐ ແບ່ງໜ້າທີ່ຮັບຜິດຊອບ ໃຫ້ແຕ່ລະຄົນ ໃນທີມງານຢ່າງເໝາະສົມ.
  - ຜູ້ບັນທຶກ.
  - ຜູ້ສຳພາດ.
  - ຜູ້ສັງເກດການ.
  - ຜູ້ແຕ່ງກິນ.
- ☐ ຕ້ອງໄດ້ວາງແຜນເວລາຢ່າງລັກແນ່ (ເປັນຕາຕະລາງວຽກ).
- ☐ ຈະເດີນທາງໂດຍລົດຫຍັງ?
- ☐ ຕ້ອງເຮັດໃບສະເໜີຕາມຄວາມຈຳເປັນ ແລະ ເໝາະສົມ.
  - ຕ້ອງແຈ້ງທາງບ້ານຢ່າງລັກແນ່ກ່ອນຈະເດີນທາງ, ເພື່ອໃຫ້ຊາວບ້ານກະກຽມໄດ້.
- ☐ ຕ້ອງປະກອບອຸປະກອນທັງໝົດເພື່ອການພັກເຊົາ.
  - ມຸ້ງ, ສາດ, ໝອນ, ຜ້າຫົ່ມ...
  - ຖ້ວຍ/ບ່ວງ, ຈອກ...
  - ຢາປົວພະຍາດ, ນ້ຳດື່ມ, ເຈ້ຍອະນາໄມ...
- ☐ ຕ້ອງແກ້ໄຂເລື່ອງອາຫານການກິນກ່ອນຈະເດີນທາງ (ຈະຊື້ຂອງກິນນຳຊາວບ້ານບໍ? ຈະເອົາອາຫານໄປນຳບໍ? ຕ້ອງການອາຫານເພື່ອຈັກຄົນ? ຈະໄດ້ກິນເຂົ້າຢູ່ໃນບ້ານທັງໝົດຈັກຄາບ?).
- ☐ ຕ້ອງປະກອບອຸປະກອນທັງໝົດເພື່ອການເຮັດວຽກເກັບກຳຂໍ້ມູນ (ຕາມຄວາມຕ້ອງການໃນແຕ່ລະວິທີການ - ຕົວຢ່າງ : ສໍຂາວ, ເຈ້ຍ, ບິກ, ປຶ້ມບັນທຶກນ້ອຍສຳຫຼັບໝົດທຸກຄົນ, ແລະ ອື່ນໆ).
- ☐ ຕ້ອງປະກອບງົບປະມານໃຫ້ກຸ້ມການໃຊ້ຈ່າຍ (ເພື່ອຊື້ກິນ, ໃສ່ນ້ຳມັນລົດ, ແລະ ອື່ນໆ).

2 ລົມທະນາໃນທີມງານ ກ່ຽວກັບແຕ່ລະບັນຫາ ແລະ ແບ່ງຄົນຮັບຜິດຊອບ.

3 ກ່ອນຈະເດີນທາງ ໃຫ້ກວດຄືນໝົດທຸກບັນຫາ ທີ່ສະເໜີຂ້າງເທິງ.

ຂໍ້ຄວນເອົາໃຈໃສ່:

- ເວລາລົງສະໜາມ ການກິນບໍ່ຄວນເອື້ອຍອີງໃສ່ປະຊາຊົນເປັນຕົ້ນຕໍ.
- ເວລາກະກຽມເພື່ອລົງພາກສະໜາມ, ຄວນຈະແກ້ໄຂທຸກບັນຫາໃນມື້ກ່ອນຈະເດີນທາງ
  ຕົວຢ່າງ : ຖ້າຕ້ອງຊື້ອຸປະກອນຢູ່ຕະຫຼາດ (ເຊັ່ນ : ມຸ້ງ, ບົກ, ປ້ອງປາ, ເຂົ້າ), ແມ່ນໃຫ້ໄປຊື້ໄວ້ໃນມື້ກ່ອນ, ບໍ່ແມ່ນຊື້ໃນມື້ທີ່ຈະເດີນທາງ, ເພື່ອບໍ່ໃຫ້ເສຍເວລາ ແລະ ຂັດຂ້ອງກັບຕາຕະລາງວຽກ.

## • ການແນະນຳຕົວເອງ •

ແມ່ນຫຍັງ?

ໃນເວລາທີ່ໄປຮອດບ້ານທຳອິດ, ກ່ອນອື່ນໝົດເຮົາຕ້ອງແນະນຳຕົວເອງ ແລະ ຕ້ອງສະເໜີຈຸດປະສົງຢ່າງລະອຽດ ແລະ ຈະແຈ້ງ.

ເພື່ອຫຍັງ?

- ເພື່ອໃຫ້ຊາວບ້ານເຂົ້າໃຈວ່າ ເຮົາຈະເຮັດວຽກຫຍັງ?
- ເພື່ອຫລີກລ້ຽງຄວາມອຶດອັດໃຈ ຂອງຊາວບ້ານ.



## ເຮັດແນວໃດ?

1. ໃນເວລາໄປຮອດບ້ານທຳອິດ, ຄວນຈະໄປລົມກັບຊາວບ້ານກ່ອນຈະເອົາເຄື່ອງລົງຈາກລົດ ຫຼື ໄປຍ່າງເລາະບ້ານ ຫຼື ເຮັດວຽກອື່ນ.
2. ຖາມຫານາຍບ້ານ, ຖ້າເພິ່ນບໍ່ຢູ່ແມ່ນຕ້ອງຖ້າ (ຖ້າສະດວກ ອາດຈະໃຫ້ຄົນໄປນຳ).
3. ໃນກໍລະນີທີ່ຕ້ອງຖ້ານາຍບ້ານມາ, ຄວນຢູ່ກັບຊາວບ້ານຖ້າ, ສ້າງຄວາມສາມັກຄີ ແລະ ຄວາມເປັນກັນເອງເລີຍ (ເບິ່ງວິທີການຕໍ່ໄປ) ລົມກັນເລື່ອງທົ່ວໄປ (ຄວນຈະສັງເກດການຕ່າງໆ, ແຕ່ບໍ່ຕ້ອງຈົດຂໍ້ມູນໃນປື້ມ ຫຼື ເລີ່ມເກັບກຳຂໍ້ມູນເປັນທາງການກ່ອນໄດ້ສະເໜີຈຸດປະສົງກັບນາຍບ້ານ).
4. ເວລາໄດ້ພົບກັບນາຍບ້ານ, ໃຫ້ແຈ້ງໜັງສື ແລະ ສະເໜີຈຸດປະສົງ ແລະ ແຜນວຽກຢ່າງລະອຽດ.

ຂໍ້ຄວນເອົາໃຈໃສ່ -

- ໃນເວລາທີ່ສະເໜີຕົວກັບນາຍບ້ານ, ໃຫ້ປະຕິບັດຕາມຮູບລັກສະນະເປັນທາງການ.
  (ຕົວຢ່າງ : ການນຸ່ງຖື ແລະ ການປາກເວົ້າ) ແຕ່ວ່າຫຼັງຈາກສະເໜີຕົວເປັນທາງການໄດ້ແລ້ວ, ຄວນນຸ່ງຖື ແລະ ປາກເວົ້າເປັນກັນເອງຫຼາຍກ່ວາ, ເພື່ອຈະຊ່ວຍໃນການສ້າງຄວາມສາມັກຄີ ແລະ ເປັນກັນເອງກັບຊາວບ້ານ, ບໍ່ໃຫ້ເຂົາເຈົ້າມີຄວາມອຶດອັດ (ເບິ່ງວິທີການຕໍ່ໄປ).
- ເວລາສະເໜີຈຸດປະສົງ ແລະ ແຜນວຽກຄວນນໃຫ້ມີຕົວແທນ ຂອງແຕ່ລະອົງການຈັດຕັ້ງບ້ານເຂົ້າຮ່ວມ.

# • ການສ້າງຄວາມສາມັກຄີ •

ແມ່ນຫຍັງ?

ວິທີການນີ້ ແມ່ນເປັນການສ້າງຄວາມລຶ້ງເຄີຍ ແລະ ເປັນອັນນຶ່ງອັນດຽວກັນ ລະຫວ່າງ ຜູ້ເກັບກຳຂໍ້ມູນ ແລະ ຊາວບ້ານໝົດທຸກຄົນ.

| ເພື່ອຫຍັງ? | • ເພື່ອໃຫ້ມີການຮ່ວມມືກັນດີ.<br>• ເພື່ອໃຫ້ມີບັນຍາກາດດີ ແລະ ຄວາມໄວ້ໃຈ ແລະ ບໍ່ອຶດອັດໃຈຂອງຊາວບ້ານ. |
|---|---|



ເຮັດແນວໃດ?

| | |
|---|---|
| 1 | ເລີ່ມຕົ້ນສ້າງການໂອ້ລົມ ກັບຄົນທີ່ສາມາດເຂົ້າຫາໄດ້ງ່າຍ (ຕົວຢ່າງ ຜູ້ເຖົ້າ, ເຈົ້າຂອງຮ້ານຂາຍເຄື່ອງ, ອຳນາດການປົກຄອງບ້ານ .....) |
| 2 | ໃນການໂອ້ລົມ ຄວນອະທິບາຍຈຸດປະສົງຂອງການມາ. |
| 3 | ສົນໃຈໃນຊີວິດການເປັນຢູ່, ຮີດຄອງປະເພນີ ແລະ ວັດທະນະທຳ ຂອງຊາວບ້ານ. |
| 4 | ໂອ້ລົມກັບຊາວບ້ານທັງຍິງ ແລະ ຊາຍ, ຄົນທຸກ ແລະ ຄົນມີ, ຄົນໜຸ່ມ ແລະ ຜູ້ເຖົ້າ. |
| 5 | ສົນທະນາກັນແບບເປັນກັນເອງ ໃຫ້ລຶ້ງກັນ (ຕົວຢ່າງ : ຖາມຊື່ກັນ, ສົນທະນາກັນເລື່ອງຄອບຄົວ, ບອກເຂົາເຈົ້າກ່ຽວກັບເລື່ອງຕົນເອງ, ນັ່ງລົມກັນທຳມະດາ). |
| 6 | ຮ່ວມປະຕິບັດກິດຈະກຳ ແນວໃດແນວນື່ງກັບຊາວບ້ານ ( ເຊັ່ນ : ຕຳເຂົ້າ, ຫາບນ້ຳ, ແຕ່ງກິນ ແລະ ອື່ນໆ ). |

ຂໍ້ຄວນເອົາໃຈໃສ່:

- ຕ້ອງເອົາໃຈໃສ່ ໃນການສ້າງຄວາມສາມັກຄີ ແລະ ເປັນກັນເອງ ກັບຊາວບ້ານທຸກລະດັບ ແລະ ທຸກປະເພດ.
- ການສ້າງຄວາມສາມັກຄີ ອາດຈະມີການດື່ມເຫຼົ້າ ແຕ່ລະວັງຢ່າໃຫ້ເມົາເກີນຂອບເຂດ !
- ຄວນຈະສ້າງຄວາມສາມັກຄີ ກັບຊາວບ້ານທຸກໆ ເວລາທີ່ຢູ່ໃນບ້ານ - ບໍ່ແມ່ນພຽງແຕ່ຕອນມາຮອດບ້ານທຳອິດ.



ການ ຈັດລະດັບ ຖານະ ຂອງແຕ່ ລະ ຄອບຄົວ

## ຂໍ້ມູນກ່ຽວກັບເສດຖະກິດສັງຄົມ

ໃນບັນດາວິທີການເກັບກຳຂໍ້ມູນແບບມີສ່ວນຮ່ວມ ມີບາງວິທີການທີ່ຈະເຈາະຈື້ມຂໍ້ມູນທາງດ້ານເສດຖະກິດສັງຄົມ ຄວາມເຂົ້າໃຈໃນດ້ານນີ້ແມ່ນຈຳເປັນເພື່ອຈະໄດ້ເຂົ້າໃຈສະພາບຊີວິດການເປັນຢູ່ຂອງຊາວບ້ານ ແລະເພື່ອວາງແຜນການຄຸ້ມຄອງແລະນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງໃນຕໍ່ໜ້າ. ໃນບັນດາວິທີການເກັບກຳຂໍ້ມູນດ້ານເສດຖະກິດສັງຄົມມີຕໍ່ໄປນີ້:

- ປະຫວັດບ້ານ.
- ປະຕິທິນລະດູການ.
- ຈັດລະດັບຖານະ ຂອງແຕ່ລະຄອບຄົວໃນບ້ານ.
- ແຕ້ມແຜນວາດຂອງບ້ານແບບມີສ່ວນຮ່ວມ.
- ຈັດລະດັບລາຍຮັບ / ລາຍຈ່າຍຂອງຊາວບ້ານ.

## • ປະຫວັດບ້ານ •

ແມ່ນຫຍັງ?

ວິທີການນີ້ແມ່ນການເລົ່າເຖິງເຫດການສຳຄັນໆ ທີ່ເກີດຂຶ້ນ ຕັ້ງແຕ່ການກຳເນີດຂອງບ້ານຈົນຮອດປັດຈຸບັນ ລວມໃນນີ້ ໄດ້ເລົ່າເຖິງ ການນຳໃຊ້ເຄື່ອງປ່າຂອງດົງ, ການປ່ຽນແປງຕ່າງໆ ຂອງປ່າ ແລະ ບ້ານ.

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອ ສັງລວມບັນຫາ ແລະ ການພັດທະນາ ໃນໄລຍະຜ່ານມາ
- ເພື່ອເປັນຂໍ້ມູນໃຊ້ໃນການວາງແຜນໃນອະນາຄົດ

ຕົວຢ່າງ:



## ເຮັດແນວໃດ?

1 ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເຟີດ ຫຼື ອື່ນໆ.

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ເຖົ້າແກ່ແນວໂຮມ ຫຼື ຜູ້ທີ່ມາຢູ່ໃນບ້ານກ່ອນໝູ່

3 ລວມກຸ່ມໃຫຍ່ໝົດບ້ານ.

4 ແນະນຳຈຸດປະສົງກັບຜູ້ໃຫ້ຂໍ້ມູນ.

5 ສະເໜີໃຫ້ຊາວບ້ານເລົ່າເອງກ່ຽວກັບ ເຫດການສຳຄັນໆ ທີ່ເກີດຂຶ້ນຕັ້ງແຕ່ການກຳເນີດຂອງບ້ານຈົນຮອດປັດຈຸບັນ.

ຕົວຢ່າງ: ບ້ານເລີ່ມຕັ້ງຂຶ້ນຕັ້ງແຕ່ປີໃດ?
ເຫດການສຳຄັນໆທີ່ເກີດຂຶ້ນໃນບ້ານມີຫຍັງແດ່? ເວລາໃດ?
ມີຄົນເຂົ້າມາຢູ່ ຫຼື ຍ້າຍອອກໄປຢູ່ບ່ອນອື່ນຍ້ອນຫຍັງ? ເວລາໃດ?
ສະພາບຂອງປ່າມີແຕ່ລະໄລຍະ ມີການປ່ຽນແປງແນວໃດ?

6 ຜູ້ເກັບກຳຂໍ້ມູນຈະຊ່ວຍບັນທຶກຊຽນປະຫວັດນີ້ໃສ່ເຈ້ຍ ຫຼື ກະດານ (ແລະ ຕ້ອງມີຄົນນຶ່ງຮັບຜິດຊອບການຈົດໃສ່ປຶ້ມບັນທຶກໄວ້ໃຫ້ລະອຽດ).

7 ທວນຄືນກັບຊາວບ້ານເປັນກຸ່ມໃຫຍ່ ເພື່ອຢັ້ງຢືນຂໍ້ມູນ ແລະ ໃຫ້ຈະແຈ້ງຂຶ້ນ.

ຂໍ້ຄວນເອົາໃຈໃສ່:

- ພະນັກງານຄວນຖາມເພີ່ມເຕີມ ກ່ຽວກັບເຫດການທີ່ຍັງບໍ່ຈະແຈ້ງ.
- ບໍ່ໃຫ້ມີການຍາດກັນເວົ້າ - ໃຫ້ເວົ້າເທື່ອລະຄົນ.

## • ປະຕິທິນລະດູການ •

ແມ່ນຫຍັງ?

ວິທີການນີ້ແມ່ນເພື່ອໃຫ້ຮູ້ຮອບວຽນຂອງກິດຈະກຳ ຫຼື ເຫດການຕ່າງໆ ພາຍໃນບ້ານໃນຮອບ 1 ປີ

| ຫາຂໍ້ມູນນີ້ເພື່ອຫຍັງ? | • ເພື່ອວາງແຜນເຮັດວຽກໃນບ້ານໃຫ້ສອດຄ່ອງກັບການເຄື່ອນໄຫວຂອງຊາວບ້ານທີ່ມີຢູ່ແລ້ວ |
|---|---|

ຕົວຢ່າງ:



## ເຮັດແນວໃດ?

1 ຫາກະດານໃຫຍ່ສໍຂາວ ຫຼື ເຈ້ຍໃຫຍ່ບິກເຟີດ ຫຼື ອື່ນໆ ເພື່ອສ້າງຕາຕະລາງ (ເຊັ່ນ: ດິນຮາບພຽງ ແລະ ແປນດີ).

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ມີອາຊີບແຕກຕ່າງກັນ (ເຮັດນາ, ຄ້າຂາຍ) ຫຼື ແຍກຕາມຖານະຂອງຄອບຄົວ.

3 ແບ່ງກຸ່ມຍິງ/ຊາຍ, ກຸ່ມລະປະມານ 8 ຄົນ.

4 ແນະນຳຈຸດປະສົງກັບຜູ້ໃຫ້ຂໍ້ມູນ, ຄື: ຢາກຮູ້ເຖິງຮອບວຽນຂອງ ກິດຈະກຳ ຫຼື ເຫດການເກີດຂຶ້ນພາຍໃນບ້ານ ໃນຮອບ 1 ປີ . (ຕົວຢ່າງຄື: ອາກາດ, ການຜະລິດ, ການເກັບເຄື່ອງປ່າຂອງດົງ, ກິດຈະກຳອື່ນໆ ທາງສັງຄົມ ວັດທະນະທຳ, ສາດສະໜາ, ເສດຖະກິດ, ສຸກຂະພາບ, ອາຫານທີ່ມີໃນ ແຕ່ລະໄລຍະ, ແຮງງານ ແລະ ອື່ນໆ).

5 ສ້າງຕາຕະລາງ - ຂີດເສັ້ນຂວາງຢູ່ຂ້າງເທິງຂອງກະດານ (ຫຼື ເຈ້ຍ ຫຼື ບ່ອນດິນຮາບພຽງ ແລະ ແປນດີ) ຂຽນຊື່ແຕ່ລະເດືອນລຽນກັນໄປ (ອາດຈະຂຽນຕາມພາສາທ້ອງຖິ່ນກໍ່ໄດ້).

6 ຂີດເສັ້ນຕັ້ງຢູ່ເບື້ອງຊ້າຍ ຂອງຕາຕະລາງ ແລະ ໃຫ້ຊາວບ້ານເປັນຜູ້ກຳນົດເຫດການ ຫຼື ກິດຈະກຳສຳຄັນໃນບ້ານ ຂຽນຕາມເສັ້ນຕັ້ງລຽນກັນລົງມາ (ເບິ່ງຕົວຢ່າງຢູ່ຂ້າງເທິງ).
ໃຫ້ຊາວບ້ານເປັນຜູ້ກຳນົດແຕ່ລະເຫດການ - ເຮົາອາດຈະຕັ້ງຄຳຖາມເຊັ່ນ: ເວລາໃດມັກເກີດໄລກອະຫິວາ? ເກັບຫວາຍ? ຝົນຕົກ? ອາກາດຮ້ອນ? ປູກເຂົ້າ? ຂາຍຫວາຍ? ເກັບກູ້ຜັກ? ມີເຫັດ?

7 ໃຫ້ຊາວບ້ານເລືອກສັນຍາລັກ ແລະ ພາບ ທີ່ສະແດງເຖິງຄວາມໝາຍຂອງເຫດການ ຫຼື ກິດຈະກຳຕ່າງໆ (ເບິ່ງຕົວຢ່າງຢູ່ຂ້າງເທິງ)

## ຂໍ້ຄວນເອົາໃຈໃສ່

- ຊາວບ້ານອາດຈະບໍ່ຄິດຕາມຊື່ຂອງເດືອນ - ອາດຈະວ່າ "ຍາມຝົນມີກົບຫຼາຍ" (ອາດຈະບໍ່ວ່າ "ເດືອນຫົກເດືອນເຈັດມີກົບຫຼາຍ").
- ຢ່າສັບສົນລະຫວ່າງເດືອນລາວ ກັບ ເດືອນສາກົນໃຫ້ຊາວບ້ານກຳນົດຢ່າງຈະແຈ້ງ.

# • ຈັດລະດັບຖານະຂອງແຕ່ລະຄອບຄົວໃນບ້ານ •

**ແມ່ນຫຍັງ?**

ວິທີການນີ້ແມ່ນການແບ່ງປະເພດຖານະຂອງຄອບຄົວໃນບ້ານຕາມສະພາບເສດຖະກິດ.

**ຫາຂໍ້ມູນນີ້ເພື່ອຫຍັງ?**

- ເພື່ອການວາງແຜນພັດທະນາ ແລະ ກຳນົດກິດຈະກຳຕ່າງໆ ໃຫ້ສອດຄ່ອງກັບສະພາບຂອງແຕ່ລະຄອບຄົວ.
- ເພື່ອຕິດຕາມປະເມີນຜົນການປ່ຽນແປງໃນຕໍ່ໜ້າ.

**ຕົວຢ່າງ:**



## ເຮັດແນວໃດ?

1 ເອົາເຈ້ຍແຂງແຜ່ນນ້ອຍ ຫຼາຍໆ ໃບ (ໃຫ້ເທົ່າກັບ ຈຳນວນຄອບຄົວໃນບ້ານ).

2 ຂໍລາຍຊື່ຄອບຄົວໃນບ້ານຈາກນາຍບ້ານ ແລ້ວຂຽນໃສ່ເຈ້ຍແຜ່ນນ້ອຍ (ແຜ່ນນຶ່ງຕໍ່ຄອບຄົວນຶ່ງ).

3 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ຮູ້ຈັກຄົນໃນບ້ານດີ.

4 ແບ່ງເປັນ 3 ກຸ່ມ: ຍິງ, ຊາຍ, ອຳນາດການປົກຄອງ - ກຸ່ມລະປະມານ 8 ຄົນ.

5 ແນະນຳຈຸດປະສົງກັບຜູ້ໃຫ້ຂໍ້ມູນ.

6 ຍົກບັດແຂງສອງບັດທີ່ຂຽນຊື່ໄວ້ແລ້ວຖາມ: ຄອບຄົວໃດຖານະດີກ່ວາກັນ?

7 ເຮັດແບບນີ້ເລື້ອຍໆ ຈົນທຸກຄອບຄົວໄດ້ແບ່ງອອກເປັນກຸ່ມຕາມລະດັບທີ່ຊາວບ້ານກຳນົດໄວ້.

8 ຖາມເຖິງເງື່ອນໄຂຂອງການຈັດລະດັບ ໃຫ້ຊາວບ້ານເປັນຜູ້ກຳນົດເງື່ອນໄຂເອງ (ໃຫ້ມີຄົນບັນທຶກລະອຽດເວລາຊາວບ້ານສົນທະນາ).

9 ຈັດລະດັບແລ້ວ, ຈະມີບັດແຂງກອງໄວ້ເປັນລະດັບ (I, II, III, IV...) ຕ້ອງຈົດຄະແນນໃສ່ທາງຫຼັງແຕ່ລະບັດຕາມລະດັບໃຜມັນ (ເຮົາຈະຕ້ອງກຳນົດໄວ້ວ່າລະດັບໃດຈະໄດ້ຈັກຄະແນນ) ເພື່ອຈະໄດ້ສະເລ່ຍລະຫວ່າງການຈັດລະດັບຂອງທັງສາມກຸ່ມ (ຍິງ, ຊາຍ, ອຳນາດການປົກຄອງ).

ຕົວຢ່າງ: ມີ 4 ລະດັບຄື I (30 ຄະແນນ), II (50 ຄະແນນ), III (70 ຄະແນນ), IV(90 ຄະແນນ)

I - II - III - IV

0 30 40 50 60 70 80 90 100

ສົມມຸດວ່າຄອບຄົວທ້າວ ກ ຈັດລະດັບດັ່ງນີ້:

| | ຈັດລະດັບ | ຄະແນນ |
|---|---|---|
| ຍິງ | I | 30 |
| ຊາຍ | II | 50 |
| ອຳນາດການປົກຄອງ | I | 30 |

**ສະເລ່ຍ**: 110/3=36.7

ສະເລັ່ຍແລ້ວ ຄອບຄົວທ້າວ ກ ໄດ້ຄະແນນ 36.7, ຕົກຢູ່ໃນລະດັບ I

(ສັງເກດ: ຖ້າຄອບຄົວໃດຖືກທັງສາມກຸ່ມຈັດໃນລະດັບດຽວກັນ, ບໍ່ຈຳເປັນຕ້ອງສະເລັ່ຍ).

10 ເອົາຂໍ້ມູນທັງໝົດເຂົ້າໃນຕາຕະລາງ (ຕາມຕົວຢ່າງຢູ່ຂ້າງເທິງ) ແລ້ວສະເໜີໃຫ້ຊາວບ້ານທັງຫຼາຍ

**ຂໍ້ຄວນເອົາໃຈໃສ່:**

- ພະຍາຍາມຊຸກຍູ້ໃຫ້ທຸກຄົນໃນກຸ່ມ ໄດ້ປະກອບຄຳຄິດຄຳເຫັນ.
- ບໍ່ຄວນຟ້າວຟັ່ງ ຮີບຮ້ອນເອົາຄຳຕອບ, ປ່ອຍເວລາໃຫ້ທຸກຄົນ ໄດ້ສົນທະນາກັນ ຈົນເປັນເອກະພາບກັນພາຍໃນກຸ່ມ.
- ເວລາຂຽນຄະແນນ ໃສ່ຂ້າງຫຼັງເຈ້ຍນັ້ນ ບໍ່ຄວນເປີດໃຫ້ກຸ່ມອື່ນ ທີ່ຍັງບໍ່ທັນໄດ້ຈັດລະດັບເຫັນ
- ຫຼັງຈາກຈັດລະດັບແລ້ວອາດຈະມີການສົມທຽບຂໍ້ມູນລະຫວ່າງແຕ່ລະກຸ່ມ ຄວນເອົາໃຈໃສ່ສັງເກດເງື່ອນໄຂຂອງຊາວບ້ານ ຍ້ອນວ່າເງື່ອນໄຂໃນການຈັດລະດັບຂອງແຕ່ລະກຸ່ມອາດຈະແຕກຕ່າງກັນ.

# • ແຕ້ມແຜນວາດຂອງບ້ານແບບມີສ່ວນຮ່ວມ •

ແມ່ນຫຍັງ?

ວິທີການນີ້ແມ່ນການແຕ້ມແຜນທີ່ ແບບບໍ່ເປັນທາງການ, ເຊິ່ງໄດ້ບັນທຶກຂໍ້ມູນຕ່າງໆ ກ່ຽວກັບສະພາບເສດຖະກິດສັງຄົມ ແລະ ບ່ອນເກັບເຄື່ອງປ່າຂອງດົງ (ເຊັ່ນ: ທີ່ຕັ້ງ ແລະ ຂອບເຂດບ້ານ, ເສັ້ນທາງ, ຊື່ຂອງສະຖານທີ່ຕ່າງໆ, ໂຮງຮຽນ, ສຸກສາລາ, ນ້ຳ, ເຮືອນຊາວບ້ານ ແລະ ອື່ນໆ).

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອເຂົ້າໃຈການນຳໃຊ້ທີ່ດິນໃນບໍລິເວນບ້ານ.
- ເພື່ອຄວາມສະດວກໃນການເຄື່ອນໄຫວ ແລະ ສອບຖາມຂໍ້ມູນ.
- ເພື່ອຊ່ວຍໃນການວາງແຜນ, ການກຳນົດກິດຈະກຳຕ່າງໆ ໃຫ້ສອດຄ່ອງກັບສະພາບຕົວຈິງ.

ຕົວຢ່າງ:



ຂໍ້ສັງເກດ:

- ແຜນວາດນີ້ ຈະບໍ່ມີມາດຕາສ່ວນ ແລະ ຂອບເຂດທີ່ແນ່ນອນ ຄືກັບແຜນທີ່ມາດຖານ ທີ່ພິມອອກເປັນທາງການ.
- ການແຕ້ມແຜນວາດແບບມີສ່ວນຮ່ວມນີ້ ສາມາດແຕ້ມໃສ່ເຈ້ຍແຜ່ນໃຫຍ່, ໜ້າດິນທີ່ຮາບພຽງ ຫຼື ກະດານໃຫຍ່ກໍ່ໄດ້ ຜົນດີຂອງການແຕ້ມແຜນວາດໃສ່ໜ້າດິນ ແມ່ນ ຊາວບ້ານສາມາດລຶບ, ສາມາດແຕ້ມ ແລະ ສາມາດວາງສິ່ງຂອງຕ່າງໆລົງໄດ້ຕາມໃຈ, ແຕ່ວ່າເວລາຂຽນຄືບແລ້ວແມ່ນພະນັກງານຈະຕ້ອງໄດ້ແຕ້ມຄືນອີກເທື່ອນຶ່ງໃສ່ເຈ້ຍແຜ່ນໃຫຍ່ ຫຼືວ່າ ປື້ມບັນທຶກຢ່າງລະອຽດ.

ເຮັດແນວໃດ?

1 ຫາບ່ອນມີດິນຮາບພຽງ ແລະ ແປນດີ ເພື່ອແຕ້ມແຜນທີ່ໃສ່ (ຕ້ອງຫາ ກ້ອນຫີນ, ແກບ, ເຟືອງ, ຊາຍ, ໃບໄມ້, ກິ່ງໄມ້ ຕ່າງໆ ເພື່ອໃຫ້ຊາວບ້ານຂີດ ຫຼື ວາງໄວ້) ຫຼື ອາດຈະໃຊ້ກະດານໃຫຍ່ , ສໍຂາວ ຫຼື ເຈ້ຍໃຫຍ່, ບິກເຟີດກໍ່ໄດ້.
2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ຮູ້ຈັກບໍລິເວນບ້ານດີ, ຄົນທີ່ເຄີຍທ່ຽວອ້ອມເຂດບ້ານເລື້ອຍໆ.
3 ແບ່ງເປັນກຸ່ມຍິງ / ກຸ່ມຊາຍ, ກຸ່ມລະປະມານ 10 ຄົນ.
4 ແນະນໍາຈຸດປະສົງກັບຜູ້ໃຫ້ຂໍ້ມູນ.
5 ໃຫ້ຜູ້ເຂົ້າຮ່ວມແຕ້ມຈຸດຕ່າງໆ ທີ່ສໍາຄັນລົງໃນແຜນວາດ ເຊັ່ນ: ທິດເໜືອ-ໃຕ້, ແຕ່ລະຫລັງຄາເຮືອນ, ທາງລົດ, ສຸກສາລາ, ຫ້ວຍນໍ້າ, ເສັ້ນທາງຍ່າງ, ປ່າໄມ້, ນາ, ໄຮ່, ໂຮງສີເຂົ້າ, ວັດ, ນໍ້າບາດານ (ຖ້າແຕ້ມໃສ່ພື້ນດິນ,ໃຫ້ຂຽນຈຸດຕ່າງໆນັ້ນໃສ່ເຈ້ຍນ້ອຍ ຢອງໃສ່ຈຸດທີ່ຕັ້ງໄວ້).
6 ຖ້າຜູ້ເກັບກໍາຂໍ້ມູນເຫັນວ່າຂໍ້ມູນຍັງບໍ່ທັນຄົບຖ້ວນ, ໃຫ້ຖາມເພີ່ມຕື່ມອີກ.
7 ແຕ້ມຄົບຖ້ວນແລ້ວ, ຕ້ອງກ່າຍໃສ່ເຈ້ຍແຜ່ນໃຫຍ່ ຫຼື ປື້ມບັນທຶກ, ໝາຍຊື່ສະຖານທີ່ໃຫ້ລະອຽດ, ຂຽນຊື່ຜູ້ເຂົ້າຮ່ວມ ແລະ ຂຽນວັນທີ ເດືອນ ປີ ທີ່ແຕ້ມແຜນວາດນັ້ນລົງໃສ່ເຈ້ຍເລີຍ (ຕ້ອງກ່າຍອອກອີກແຜ່ນນຶ່ງ ເພື່ອມອບໃຫ້ຊາວບ້ານເລີຍ).
8 ໃຫ້ໃຊ້ເຄື່ອງໝາຍ ເພື່ອຈໍາແນກຖານະຂອງຄອບຄົວ ແລະ ອື່ນໆ.
9 ແຕ້ມແລ້ວ, ເຮົາອາດຈະເອົາແຜນວາດຂອງກຸ່ມຍິງ ແລະ ກຸ່ມຊາຍມາສົມທຽບກັນ - ແລ້ວເລືອກເອົາແຜນວາດແມ່ຍິງເປັນໂຕຫລັກ ແລະ ຕື່ມຂໍ້ມູນເຂົ້າໃສ່ ເປັນອຜນວາດສົມບູນຂອງບ້ານ.

ຂໍ້ຄວນເອົາໃຈໃສ່:

- ກ່ອນທີ່ຈະສ້າງແຜນວາດແບບມີສ່ວນຮ່ວມ, ຜູ້ເກັບກໍາຂໍ້ມູນຄວນມີຄວາມເຂົ້າໃຈ ສ່ວນໜຶ່ງກ່ຽວກັບຂອບເຂດນັ້ນ (ໂດຍການຍ່າງບ້ານເປັນກຸ່ມ, ສັງເກດການໂດຍກົງ, ສໍາພາດກັບຊາວບ້ານ ແລະ ອື່ນໆ).
- ຕ້ອງຮັບຮູ້ວ່າມາດຕາສ່ວນຂອງແຜນວາດບ້ານທີ່ສ້າງແບບມີສ່ວນຮ່ວມຈະບໍ່ຖືກຕ້ອງສະເໝີໄປ.
- ຕ້ອງກະຕຸກຊຸກຍູ້ໃຫ້ທຸກໆຄົນໄດ້ມີສ່ວນຮ່ວມ.

## • ຈັດລະດັບລາຍຮັບ/ລາຍຈ່າຍຂອງຊາວບ້ານ •

ແມ່ນຫຍັງ?

ວິທີການນີ້ແມ່ນເພື່ອເຂົ້າໃຈວ່າ ລາຍຮັບຕົ້ນຕໍ່ຂອງຊາວບ້ານໄດ້ຈາກຫຍັງແດ່? ໄດ້ຈາກຫຍັງຫຼາຍກ່ວາໝູ່? ລາຍຈ່າຍຕົ້ນຕໍ່ຈ່າຍຊື້ຫຍັງແດ່? ຈ່າຍຊື້ຫຍັງຫຼາຍກ່ວາໝູ່?

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອເຂົ້າໃຈສະພາບເສດຖະກິດຂອງບ້ານໃນລະດັບຄອບຄົວ
- ເພື່ອເປັນບ່ອນອີງໃນການວາງແຜນການຄຸ້ມຄອງການນຳໃຊ້ເຄື່ອງປ່າຂອງດົງ
- ເພື່ອເປັນບ່ອນອີງໃນການຕິດຕາມສະພາບເສດຖະກິດຂອງຊາວບ້ານໃນຕໍ່ໜ້າ

ຕົວຢ່າງ:

ການຈັດ ລະດັບລາຍຮັບ.

ບ້ານ ເຫາເຄາ (ກຸ່ມຊາຍ) ວັນທີ 28/5/2000

| ຊະນິດ | ຄະແນນ | ລະດັບ | ເປີເຊັນ |
|---|---|---|---|
| ໜໍ່ໄມ້ | 12 | 12 | 24% |
| ກົບ | 3 | 6 | 6% |
| ສັດປ່າ | 6 | 3 | 12% |
| ໝາກແໜ່ງ | 15 | 1 | 30% |
| ກະບອງ | 4 | 5 | 8% |
| ເຂົ້າ | 5 | 4 | 10% |
| ຮັບຈ້າງ | 5 | 4 | 10% |

## ເຮັດແນວໃດ?

1 ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເພີດ ຫຼື ອື່ນໆ ເພື່ອສ້າງຕາຕະລາງ (ເຊັ່ນ ດິນຮາບ ພຽງ ແລະ ແປນດີ ).

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນໃນຄອບຄົວທີ່ເຄີຍເປັນຄົນໃຊ້ເງິນ - ຄວນມີຄົນມາຈາກຄອບຄົວທີ່ມີລະດັບບໍ່ຄືກັນ, ຕົວຢ່າງຮັ່ງມີ, ກຸ້ມກິນ, ທຸກຍາກ ເພື່ອມີການສົມທຽບ ແລະ ສະເລັ່ງໃຫ້ຖືກກັບສະພາບຕົວຈິງໃນບ້ານ.

3 ແບ່ງກຸ່ມຍິງ / ຊາຍ ກຸ່ມລະປະມານ 8 ຄົນ.

4 ແນະນຳຈຸດປະສົງກັບຜູ້ໃຫ້ຂໍ້ມູນ, ຄື: ຢາກຮູ້ວ່າ :

- ລາຍຮັບຕົ້ນຕໍ່ຂອງຊາວບ້ານ ໄດ້ຈາກຫຍັງແດ່? ໄດ້ຈາກຫຍັງຫຼາຍກວ່າໝູ່?
  (ຕົວຢ່າງ - ຂາຍເຄື່ອງປ່າຂອງດົງ, ຂາຍພືດກະສິກຳ, ຮັບຈ້າງອອກແຮງງານ)
- ລາຍຈ່າຍຕົ້ນຕໍ່ຈ່າຍຊື້ຫຍັງ ແດ່? ຈ່າຍຊື້ຫຍັງຫຼາຍກວ່າໝູ່?
  (ຕົວຢ່າງ - ຢາ, ເຂົ້າ, ເຄື່ອງນຸ່ງ, ເກືອ/ແປ້ງນົວ, ເບັດ, ອຸປະກອນການຜະລິດ)

5 ຈັດຕາຕະລາງທີ່ຂຽນຊື່ບັນດາສິ່ງຕ່າງໆ ທີ່ຊາວບ້ານກຳນົດໄວ້ແລ້ວ (ອາດຈະບໍ່ໄດ້ຂຽນເປັນຄຳສັບ, ຍ້ອນວ່າຊາວບ້ານບາງຄົນອາດຈະບໍ່ຮູ້ໜັງສື ໃນກໍລະນີນີ້ເຮົາອາດຈະແຕ້ມຮູບເອົາ ຫຼື ເອົາຕົວຢ່າງແທ້ຈິງມາວາງໄວ້ກໍ່ໄດ້).

- ຂໍ້ສັງເກດ: ຄວນມີ 2 ຕາຕະລາງຕ່າງຫາກ: ອັນນຶ່ງແມ່ນລາຍຮັບ, ອັນນຶ່ງແມ່ນລາຍຈ່າຍ.

6 ຈັດລະດັບໂດຍໃຊ້ວິທີໃຫ້ຄະແນນ ( ວາງກ້ອນຫີນນ້ອຍ ຫຼື ອັນອື່ນທີ່ເປັນເມັດນ້ອຍ ເຊັ່ນໃນໝາກຂາມ, ເມັດເຂົ້າເປືອກ, ເມັດສາລີ .............).

- ເອົາກ້ອນຫີນນ້ອຍ ຫຼື ອັນໃດນຶ່ງທີ່ເປັນກ້ອນ ຫຼື ເມັດນ້ອຍທີ່ສາມາດນັບໄດ້ 50 ກ້ອນ.
- ໃຫ້ຊາວບ້ານຈັບກ້ອນນັ້ນ ແລະ ວາງໄວ້ຕາມແຕ່ລະສິ່ງຕ່າງໆ ທີ່ກຳນົດໄວ້ໃນຕາຕະລາງ ແລ້ວສະເໜີຢ່າງນີ້: ໃຫ້ວາງກ້ອນຫີນແບ່ງໄວ້ລະຫວ່າງເຄື່ອງຕ່າງໆທີ່ຈະເປັນລາຍຮັບ (ຫຼື ລາຍຈ່າຍ), ສິ່ງທີ່ສຳຄັນກວ່າໝູ່ສຳລັບຊາວບ້ານຕ້ອງວາງກ້ອນ ຫຼື ເມັດນັ້ນໄວ້ໃຫ້ຫຼາຍກວ່າໝູ່.
- ຄວນໃຫ້ເວລາແກ່ຊາວບ້ານຫຼາຍເພື່ອສົນທະນາ ກ່ຽວກັບການຈັດລະດັບ - ຕ້ອງຕັ້ງໃຈຟັງເຫດຜົນຂອງເຂົາເຈົ້າໃນການຈັດລະດັບ ແລະ ຕ້ອງມີຄົນບັນທຶກພ້ອມ.

7 ຫຼັງຈາກແບ່ງກ້ອນ ຫຼື ເມັດນັ້ນຖືກກັບຄວາມສຳຄັນຂອງແຕ່ລະຊະນິດໄດ້ແລ້ວ, ແມ່ນໃຫ້ນັບຈຳນວນ ແລະຈົດໄວ້ - ຊະນິດໃດໄດ້ຫຼາຍທີ່ນຶ່ງ? ຊະນິດໃດໄດ້ ຫຼາຍທີ່ສອງ? ຕໍ່ໄປຈົນໝົດ ຕາມຕົວເລກ 1, 2, 3,... ແລ້ວຈະໄດ້ເຫັນລະດັບໂດຍກົງເລີຍ (ເບິ່ງຕົວຢ່າງຂ້າງເທິງ).

8 ເຮົາອາດຈະເອົາຕົວເລກຂອງຈຳນວນກ້ອນ ຫຼື ເມັດມາຕີເປີເຊັນກໍ່ໄດ້ - ສົມມຸດວ່າຊາວບ້ານໄດ້ວາງກ້ອນຫີນໄວ້ທັງໝົດໄດ້ 50 ກ້ອນ ຖ້າເອົາ 12 ກ້ອນວາງຢູ່ກັບໜໍ່ໄມ້, ນີ້ຈະເທົ່າກັບຈຳນວນ 24% ຂອງຈຳນວນກ້ອນຫີນທັງໝົດ.

9 ກວດກາ ແລະ ຢັ້ງຢືນຄວາມແນ່ນອນ ຂອງຂໍ້ມູນດ້ວຍການສັງເກດການ, ການສຳພາດແບບ ເຄິ່ງຈັດວາງ (ເປັນກັນເອງ ).

**ຂໍ້ສັງເກດ:**

- ການຕີເປີເຊັນແມ່ນບໍ່ມີຄວາມສຳຄັນຫຼາຍ ເລື່ອງທີ່ສຳຄັນໃນການຈັດລະດັບແມ່ນຢາກຮູ້ວ່າອັນໃດໄດ້ທີ່ 1? ອັນໃດໄດ້ທີ່ 2? ອັນໃດໄດ້ທີ່ 3? ຕໍ່ໄປຈົນໝົດ ເຮົາເບິ່ງຕົວເລກຂອງຈຳນວນກ້ອນຫີນ ຫຼື ເມັດອື່ນທີ່ຊາວບ້ານວາງໄວ້ແລ້ວຈຶ່ງເຫັນລະດັບໂລດ.
- ສຳຄັນ: ຖ້າການຕີເປີເຊັນຈະສ້າງຄວາມສັບສົນ ຫຼື ເຮັດໃຫ້ເສຍເວລາແມ່ນບໍ່ຄວນເຮັດ.

# ຂໍ້ມູນກ່ຽວກັບເຄື່ອງປ່າຂອງດົງ

ຄຳວ່າ "ເຄື່ອງປ່າຂອງດົງ" ໝາຍເຖິງ "ທຸກສິ່ງທຸກຢ່າງທີ່ເຮົາເອົາມາຈາກປ່າ - ນອກຈາກໄມ້ທ່ອນ". ຂໍ້ມູນເຫຼົ່ານີ້ຈະເວົ້າເຖິງບັນຫາຕໍ່ໄປນີ້: ສະພາບການຂອງເຄື່ອງປ່າຂອງດົງໃນບ້ານເປັນແນວໃດ? ແລະ ເຮັດແນວໃດຈິ່ງຈະໄດ້ວາງແຜນ ເພື່ອຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງ ໃຫ້ມີລັກສະນະແບບຍືນຍົງ.

ວິທີການຕ່າງໆ ເພື່ອເກັບກຳຂໍ້ມູນກ່ຽວກັບເຄື່ອງປ່າຂອງດົງມີຕໍ່ໄປນີ້:

- ຄວາມອຸດົມສົມບູນຂອງເຄື່ອງປ່າຂອງດົງ.
- ຈັດລະດັບຄວາມສຳຄັນຂອງເຄື່ອງປ່າຂອງດົງ.
- ແຕ້ມແຜນວາດຂອງບ່ອນເກັບເຄື່ອງປ່າຂອງດົງແບບມີສ່ວນຮ່ວມ.
- ຈັດລະດັບຄວາມສຳຄັນຂອງບ່ອນເກັບເຄື່ອງປ່າຂອງດົງ.
- ຈັດລະດັບການຫຼຸດລົງຂອງເຄື່ອງປ່າຂອງດົງ.
- ຈຳນວນຂອງການເກັບເຄື່ອງປ່າຂອງດົງ.
- ການວິເຄາະບັນຫາເຄື່ອງປ່າຂອງດົງ.
- ຂໍ້ມູນກ່ຽວກັບການເກັບກູ້ເຄື່ອງປ່າຂອງດົງ.
- ການເກັບເຄື່ອງປ່າຂອງດົງ ລະຫວ່າງບ້ານອ້ອມຂ້າງ ແລະ ພາກສ່ວນອື່ນໆ.
- ສຳພາດກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ປ່າ ແລະ ເຄື່ອງປ່າຂອງດົງ.
- ການຍ່າງປ່າ.
- ການປະເມີນສະພາບປ່າແບບມີສ່ວນຮ່ວມ.
- ການຍ່າງສຳຫຼວດແບບຕັດທາງຂວາງ (ໃນບ້ານ ຫຼື ປ່າ).



# • ຄວາມອຸດົມສົມບູນຂອງເຄື່ອງປ່າຂອງດົງ •

**ແມ່ນຫຍັງ?**

ວິທີການນີ້ແມ່ນເພື່ອເຂົ້າໃຈວ່າ ຊະນິດເຄື່ອງປ່າຂອງດົງໃນເຂດບ້ານມີຫຍັງແດ່? ແລະ ໄດ້ນຳໃຊ້ເພື່ອຫຍັງ?

*(ສັບເຕັກນິກ: ຄວາມຫຼາກຫຼາຍຂອງເຄື່ອງປ່າຂອງດົງ)*

**ຫາຂໍ້ມູນນີ້ເພື່ອຫຍັງ?**

- ເພື່ອການວາງແຜນໃນການນຳໃຊ້ເຄື່ອງປ່າຂອງດົງ
- ເພື່ອຕິດຕາມປະເມີນຜົນໃນຕໍ່ໜ້າ

ຕົວຢ່າງ:




**ເຮັດແນວໃດ?**

1 ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເພີດ ຫຼື ອື່ນໆ ເພື່ອສ້າງຕາຕະລາງ.
2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍເຂົ້າປ່າຫາເຄື່ອງປ່າຂອງດົງເລື້ອຍໆ.
3 ແບ່ງກຸ່ມຍິງ/ຊາຍ, ກຸ່ມລະປະມານ 10 ຄົນ.
4 ແນະນຳຈຸດປະສົງກັບຄົນໃຫ້ຂໍ້ມູນ.
5 ຂີດຂຽນຕາຕະລາງ ແລ້ວລະດົມແນວຄິດຂອງຊາວບ້ານນ ແລ້ວຕັ້ງຄຳຖາມ ຄື : ຊະນິດເຄື່ອງປ່າຂອງດົງໃນເຂດບ້ານນີ້ມີຫຍັງແດ່? ແຕ່ລະຊະນິດຳໄດ້ໃຊ້ພາກສ່ວນໃດ? ແລະ ໃຊ້ເຮັດຫຍັງ?
6 ບັນທຶກແຕ່ລະຊະນິດໄວ້ໃນຕາຕະລາງໃຫຍ່ຈົນໝົດ - ໃຫ້ຊາວບ້ານເປັນເຈົ້າການ.

ຂໍ້ສັງເກດ :

- ວິທີການນີ້ຈະຕໍ່ເນື່ອງໃສ່ວິທີການຈັດລະດັບເຄື່ອງປ່າຂອງດົງ, ຕໍ່ໄປ.

# • ຈັດລະດັບຄວາມສຳຄັນຂອງ ເຄື່ອງປ່າຂອງດົງ •

**ແມ່ນຫຍັງ?**

ວິທີການນີ້ແມ່ນເພື່ອເຂົ້າໃຈວ່າ ເຄື່ອງປ່າຂອງດົງຊະນິດໃດແດ່ ຈະສຳຄັນທີ່ສຸດສຳຫຼັບຊາວບ້ານ ໃນການກິນ, ການນຳໃຊ້, ການຄ້າຂາຍ ແລະ ແລກປ່ຽນ.

**ຫາຂໍ້ມູນນີ້ເພື່ອຫຍັງ?**

- ເພື່ອໃຫ້ຮູ້ ເຖິງຄວາມສຳຄັນຂອງເຄື່ອງປ່າຂອງດົງຕໍ່ຊີວິດການເປັນຢູ່ຂອງຊາວບ້ານ.
- ເພື່ອນຳໃຊ້ໃນການວາງແຜນ ພັດທະນາການນຳໃຊ້ເຄື່ອງປ່າຂອງດົງຂອງໃນບ້ານ.

**ຕົວຢ່າງ:**

ຈັດລະດັບຄວາມສຳຄັນຂອງເຄື່ອງປ່າຂອງດົງ.

ບ້ານເສົາແດງ

ວັນທີ 2/4/2000

| | | | | | |
|---|---|---|---|---|---|
| ໜໍ່ໄມ້ | | | | | |
| ກົບ | ໜໍ່ໄມ້ | | | | |
| ໝາກແໜ່ງ | ໝາກແໜ່ງ | ໝາກແໜ່ງ | | | |
| ຮາກອຽ່ມດອ່ມ | ໜໍ່ໄມ້ | ກົບ | ໝາກແໜ່ງ | | |
| ໝາກຈອງ | ໝາກຈອງ | ໝາກຈອງ | ໝາກແໜ່ງ | ໝາກຈອງ | |
| ດອກເຜີ້ງ | ໜໍ່ໄມ້ | ກົບ | ໝາກແໜ່ງ | ດອກເຜີ້ງ | ໝາກຈອງ |
| | ໜໍ່ໄມ້ | ກົບ | ໝາກແໜ່ງ | ຮາກອຽ່ມດອ່ມ | ໝາກຈອງ | ດອກເຜີ້ງ |

ໄດ້ລະດັບຕໍ່ໄປນີ້:

1. ໝາກແໜ່ງ
2. ໝາກຈອງ
3. ໜໍ່ໄມ້
4. ກົບ
5. ດອກເຜີ້ງ
6. ຮາກອຽ່ມດອ່ມ

## ເຮັດແນວໃດ?

1 ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເພີດ ຫຼື ອື່ນໆ (ເຊັ່ນ ດິນຮາບພຽງ ແລະ ແປນດີ).

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຜູ້ທີ່ນຳໃຊ້ເຄື່ອງປ່າຂອງດົງ ຫຼາຍ, ເຄີຍຂາຍ, ເຄີຍແລກປ່ຽນແກ້ໄຂຊີວິດການເປັນຢູ່.

3 ແບ່ງກຸ່ມຍິງ/ຊາຍ ປະມານ 8-10 ຄົນ.

4 ສະເໜີຈຸດປະສົງກັບຜູ້ໃຫ້ຂໍ້ມູນ, ຄື: ຢາກຮູ້ວ່າ ເຄື່ອງປ່າຂອງດົງຊະນິດໃດເປັນຊະນິດສຳຄັນທີ່ນຶ່ງ? ຊະນິດໃດສຳຄັນທີ່ສອງ? ຊະນິດໃດສຳຄັນທີ່ສາມ? ຕໍ່ໄປ...

5 ກ່ອນອື່ນ, ຊາວບ້ານຕ້ອງເລືອກເອົາເຄື່ອງປ່າຂອງດົງທີ່ສຳຄັນກ່ວາໝູ່ໃນຊີວິດປະຈຳວັນ - ໃຫ້ເລືອກປະມານ 10 ຊະນິດ.

6 ຈັດຕາຕະລາງທີ່ຂຽນຊື່ບັນດາຊະນິດສຳຄັນທີ່ຊາວບ້ານກຳນົດໄວ້ແລ້ວ (ອາດຈະບໍ່ໄດ້ຂຽນເປັນຄຳສັບ, ຍ້ອນວ່າຊາວບ້ານບາງຄົນອາດຈະບໍ່ຮູ້ໜັງສ ໃນກໍລະນີນັ້ນເຮົາອາດຈະແຕ້ມຮູບເອົາ ຫຼື ເອົາຕົວຢ່າງແທ້ຈິງມາວາງໄວ້ກໍ່ໄດ້).

7 ສາມາດຈັດລະດັບໄດ້ 2 ວິທີ :

1. ວິທີວາງກ້ອນຫີນ ( ໃຫ້ເບິ່ງ ໜ້າ ........................ ).
2. ວິທີສົມທຽບຈະໄດ້ອະທິບາຍຕໍ່ລົງໄປນີ້ :

- ສົມມຸດວ່າຊາວບ້ານເລືອກເອົາຊະນິດທີ່ສຳຄັນທີ່ສຸດ ໃຫ້ສ້າງຕາຕະລາງຕາມຮູບແບບຂ້າງເທິງ.
- ຂຽນຊະນິດ ເຄື່ອງປ່າຂອງດົງໃສ່ທາງຕັ້ງ ແລະ ທາງຂວາງ ແລ້ວທຽບໝົດທຸກຊະນິດ.
- ໃນການທຽບແຕ່ລະຄູ່ ຖ້າຊະນນິດໃດສຳຄັນກວ່າ ໃຫ້ຈົດຊື່ຊະນິດນັ້ນ ໃນຫ້ອງຕາຕະລາງນັ້ນ.
- ນັບຊື່ຂອງແຕ່ລະຊະນິດທີ່ຂຽນ ຢູ່ໃນຕາຕະລາງ ແລ້ວຂຽນໂຕເລກໃສ່ຂ້າງນຶ່ງ.
- ຈັດລະດັບຕາມຄະແນນ.

## • ແຕ້ມແຜນວາດຂອງບ່ອນເກັບເຄື່ອງປ່າຂອງດົງແບບມີສ່ວນຮ່ວມ •

**ແມ່ນຫຍັງ?**

ວິທີການນີ້ແມ່ນການແຕ້ມແຜນທີ່ ແບບບໍ່ເປັນທາງການ, ເຊິ່ງໄດ້ບັນທຶກຂໍ້ມູນໂດຍສະເພາະກ່ຽວກັບບ່ອນເກັບເຄື່ອງປ່າຂອງດົງ.

*(ສັບເຕັກນິກ: ແຕ້ມແຜນວາດຂອງແຫຼ່ງເກັບກູ້ເຄື່ອງປ່າຂອງດົງ).*

| ຫາຂໍ້ມູນນີ້ເພື່ອຫຍັງ? | • ເພື່ອໃຊ້ໃນການວາງແຜນການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງໃນຕໍ່ໜ້າ.<br>• ເພື່ອສະດວກໃນການຕິດຕາມສະພາບຂອງເຄື່ອງປ່າຂອງດົງໃນຕໍ່ໜ້າ. |
|---|---|

ຕົວຢ່າງ:



ຂໍ້ສັງເກດ:

- ແຜນວາດນີ້ ຈະບໍ່ມີມາດຕາສ່ວນ ແລະ ຂອບເຂດທີ່ແນ່ນອນ ຄືກັບແຜນທີ່ມາດຖານ ທີ່ພິມອອກເປັນທາງການ.
- ການແຕ້ມແຜນວາດແບບມີສ່ວນຮ່ວມນີ້ ສາມາດແຕ້ມໃສ່ເຈ້ຍແຜ່ນໃຫຍ່, ໜ້າດິນທີ່ຮາບພຽງ ຫຼື ກະດານໃຫຍ່ກໍ່ໄດ້ ຜົນດີຂອງການແຕ້ມແຜນວາດໃສ່ໜ້າດິນ ແມ່ນ ຊາວບ້ານສາມາດລຶບ, ສາມາດແຕ້ມ ແລະ ສາມາດວາງສິ່ງຂອງຕ່າງໆລົງໄດ້ຕາມໃຈ, ແຕ່ວ່າ ພະນັກງານຈະຕ້ອງໄດ້ແຕ້ມຄືນອີກເທື່ອນຶ່ງໃສ່ເຈ້ຍແຜ່ນໃຫຍ່ ຫຼື ວ່າປຶ້ມບັນທຶກຢ່າງລະອຽດ.

ເຮັດແນວໃດ?

1 ຫາບ່ອນມີດິນຮາບພຽງ ແລະ ແປນດີ ເພື່ອແຕ້ມແຜນທີ່ໃສ່ (ຕ້ອງຫາ ກ້ອນຫີນ, ແກບ, ເຟືອງ, ຊາຍ, ໃບໄມ້, ກິ່ງໄມ້ ຕ່າງໆ ເພື່ອໃຫ້ຊາວບ້ານຂີດຫຼືວາງໄວ້) ຫຼືອາດຈະໃຊ້ກະດານໃຫຍ່ສໍຂາວ ຫຼື ເຈ້ຍໃຫຍ່ບິກເຟີດກໍ່ໄດ້.

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍທ່ຽວໄປຫາເຄື່ອງປ່າຂອງດົງຫຼາຍໆຊະນິດຢູ່ອ້ອມເຂດບ້ານເລື້ອຍໆ.

3 ແບ່ງເປັນກຸ່ມຍິງ, ກຸ່ມຊາຍ, ກຸ່ມລະປະມານ 8 ຄົນ.

4 ແນະນໍາຈຸດປະສົງກັບຜູ້ໃຫ້ຂໍ້ມູນ.

5 ໃຫ້ຜູ້ເຂົ້າຮ່ວມແຕ້ມຈຸດຕ່າງໆທີ່ສໍາຄັນລົງໃນແຜນວາດ ເຊັ່ນ: ທິດເໜືອ-ໃຕ້, ທາງລົດ, ຫ້ວຍນໍ້າ, ເສັ້ນທາງຍ່າງ, ປ່າໄມ້, ນາ, ໄຮ່, ສັນພູ (ຖ້າແຕ້ມໃສ່ພື້ນດິນ,ໃຫ້ຂຽນຈຸດຕ່າງໆນັ້ນໃສ່ເຈ້ຍນ້ອຍຍອງໃສ່ຈຸດທີ່ຕັ້ງໄວ້).

6 ສໍາຄັນແມ່ນໃຫ້ຊາວບ້ານແຕ້ມບ່ອນເກັບກູ້ເຄື່ອງປ່າຂອງດົງໃສ່ຢ່າງລະອຽດ - ໃນນັ້ນ,ໃຫ້ກໍານົດຂອບເຂດ ແລະ ປະເພດປ່າຕ່າງໆ, ຊື່ຂອງແຕ່ລະບ່ອນ ແລະ ເຄື່ອງປ່າຂອງດົງຊະນິດສໍາຄັນທີ່ມີໃນແຕ່ລະບ່ອນ.

7 ຖ້າຜູ້ເກັບກໍາຂໍ້ມູນເຫັນວ່າຂໍ້ມູນຍັງບໍ່ທັນຄົບຖ້ວນ, ໃຫ້ຖາມເພີ່ມຕື່ມອີກ.

8 ແຕ້ມຄົບຖ້ວນແລ້ວ, ຕ້ອງກ່າຍໃສ່ເຈ້ຍແຜ່ນໃຫຍ່ ຫຼື ປຶ້ມບັນທຶກ, ໝາຍຊື່ສະຖານທີ່ໃຫ້ລະອຽດ, ຂຽນຊື່ຜູ້ເຂົ້າຮ່ວມ ແລະ ຂຽນວັນທີ ເດືອນ ປີ ທີ່ແຕ້ມແຜນວາດນັ້ນລົງໃສ່ເຈ້ຍເລີຍ (ຕ້ອງກ່າຍອອກອີກແຜນນຶ່ງເພື່ອມອບໃຫ້ຊາວບ້ານເລີຍ) .

9 ແຕ້ມແລ້ວ, ເຮົາອາດຈະເອົາແຜນວາດຂອງກຸ່ມຍິງແລະກຸ່ມຊາຍມາສົມທຽບກັນ ແລ້ວເລືອກເອົາແຜນວາດ ແຜ່ນນຶ່ງເປັນໂຕຫລັກ ແລະ ຕື່ມຂໍ້ມູນເຂົ້າໃສ່ເປັນແຜນວາດສົມບູນຂອງບ້ານ.

ຂໍ້ຄວນເອົາໃຈໃສ່:

- ກ່ອນທີ່ຈະສ້າງແຜນວາດແບບມີສ່ວນຮ່ວມ, ຜູ້ເກັບກໍາຂໍ້ມູນຄວນມີຄວາມເຂົ້າໃຈ ສ່ວນນຶ່ງ ກ່ຽວກັບຂອບເຂດນັ້ນ.
- ຕ້ອງຮັບຮູ້ວ່າມາດຕາສ່ວນຂອງແຜນວາດບ້ານທີ່ສ້າງແບບມີສ່ວນຮ່ວມຈະບໍ່ຖືກຕ້ອງສະເໝີໄປ.
- ຕ້ອງກະຕຸກຊຸກຍູ້ໃຫ້ທຸກໆຄົນໄດ້ມີສ່ວນຮ່ວມ.

## • ຈັດລະດັບຄວາມສຳຄັນຂອງບ່ອນເກັບເຄື່ອງປ່າຂອງດົງ •

ແມ່ນຫຍັງ?

ວິທີການນີ້ແມ່ນເພື່ອເຂົ້າໃຈວ່າ ບ່ອນເກັບເຄື່ອງປ່າຂອງດົງບ່ອນໃດແດ່ ຈະສຳຄັນທີ່ສຸດສຳຫຼັບຊາວບ້ານ?

*(ສັບເຕັກນິກ: ຈັດລະດັບຄວາມສຳຄັນຂອງແຫຼ່ງເກັບກູ້ເຄື່ອງປ່າຂອງດົງ).*

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອການວາງແຜນຄຸ້ມຄອງການນຳໃຊ້ເຄື່ອງປ່າຂອງດົງ.
- ເພື່ອຄວາມສະດວກໃນການຕິດຕາມກວດກາ.
- ເພື່ອເປັນບ່ອນອີງໃນການສຳຫຼວດດອນປ່າໄມ້.

ຕົວຢ່າງ:

ຈັດລະດັບບ່ອນເກັບເຄື່ອງປ່າຂອງດົງ.

ບ້ານ ຜາແດງ ວັນທີ 4/5/2000

| ບ່ອນເກັບ ຄປດ. | ໜໍ່ໄມ້ | ຫວາຍ | ໝາກແໜ່ງ | ຜັກປ່າ | ເຫັດ | ນ້ຳມັນຍາງ | ລວມທັງໝົດ | ລະດັບ |
|---|---|---|---|---|---|---|---|---|
| ປ່າແດງ | 25 | 15 | 0 | 20 | 15 | 30 | 105 | 1 |
| ໜອງຄໍ່ | 5 | 0 | 5 | 15 | 2 | 5 | 32 | 4 |
| ດອນຫົວນາ | 12 | 0 | 45 | 10 | 25 | 0 | 92 | 2 |
| ພູດະແໜມ | 8 | 35 | 0 | 5 | 8 | 15 | 71 | 3 |

## ເຮັດແນວໃດ?

1 ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເຟີດ ຫຼື ອື່ນໆ ເພື່ອສ້າງຕາຕະລາງ (ເຊັ່ນ : ດິນຮາບພຽງ ແລະ ແປນດີ).

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍທ່ຽວໄປຫາເຄື່ອງປ່າຂອງດົງຫຼາຍໆຊະນິດຢູ່ອ້ອມເຂດບ້ານເລື້ອຍໆ.

3 ແບ່ງເປັນກຸ່ມຍິງ, ກຸ່ມຊາຍ, ກຸ່ມລະປະມານ 8 ຄົນ.

4 ແນະນຳຈຸດປະສົງກັບຜູ້ໃຫ້ຂໍ້ມູນ, ຄື: ຢາກຮູ້ວ່າ ບ່ອນເກັບເຄື່ອງປ່າຂອງດົງບ່ອນໃດຈະສຳຄັນທີ່ ໜຶ່ງ? ບ່ອນໃດຈະສຳຄັນທີ່ ສອງ? ບ່ອນໃດຈະສຳຄັນທີ່ ສາມ? ຕໍ່ໄປ... (ໃນການກຳນົດແຕ່ລະບ່ອນ, ຈະໄດ້ອີງໃສ່ແຜນວາດທີ່ຊາວບ້ານແຕ້ມແລ້ວ).

5 ຈັດຕາຕະລາງທີ່ຂຽນຊື່ບັນດາບ່ອນເກັບເຄື່ອງປ່າຂອງດົງທີ່ຊາວບ້ານກຳນົດໄວ້ (ເບິ່ງຕົວຢ່າງ).

6 ສຳລັບແຕ່ລະຊະນິດເຄື່ອງປ່າຂອງດົງ ຈັດລະດັບໂດຍໃຊ້ວິທີວາງກ້ອນຫີນ:

- ເອົາກ້ອນຫີນນ້ອຍຫຼືອັນໃດໜຶ່ງທີ່ເປັນກ້ອນຫຼືເມັດນ້ອຍທີ່ສາມາດນັບໄດ້ 50 ກ້ອນ
- ໃຫ້ຊາວບ້ານຈັບກ້ອນວາງໃສ່ແຕ່ລະຊະນິດເຄື່ອງປ່າຂອງດົງທີ່ກຳນົດໄວ້ໃນຕາຕະລາງ ແລ້ວສະເໜີວ່າ : ບ່ອນໃດທີ່ໄປເກັບຫລາຍກ່ວາໝູ່ ໃຫ້ໃສ່ກ້ອນ ຫຼື ເມັດນັ້ນໄວ້ໃຫ້ຫຼາຍກ່ວາໝູ່ ບ່ອນໃດທີ່ໄປເກັບໜ້ອຍ ໃຫ້ໃສ່ກ້ອນຫີນໜ້ອຍ.
- ລວມຄະແນນໃນແຕ່ລະບ່ອນວ່າໄດ້ເທົ່າໃດ ຈາກນັ້ນ ຈັດລະດັບຕາມຄະແນນ (ເບິ່ງຕົວຢ່າງ).
- ຄວນໃຫ້ເວລາແກ່ຊາວບ້ານຫຼາຍເພື່ອສົນທະນາກ່ຽວກັບການຈັດລະດັບ - ຕ້ອງຕັ້ງໃຈຟັງເຫດຜົນຂອງເຂົາເຈົ້າໃນການຈັດລະດັບ ແລະ ຕ້ອງມີຄົນບັນທຶກພ້ອມ

# • ຈັດລະດັບການຫຼຸດລົງຂອງ ເຄື່ອງປ່າຂອງດົງ •

ແມ່ນຫຍັງ?

ວິທີການນີ້ແມ່ນເພື່ອເຂົ້າໃຈວ່າ ເຄື່ອງປ່າຂອງດົງທີ່ຊາວບ້ານເຄີຍໄປເອົາ ມີຊະນິດໃດແດ່ທີ່ຫາຍາກກ່ວາເກົ່າ? (ຕົວຢ່າງມີໜ້ອຍກ່ວາເກົ່າ, ຕ້ອງໄປໄກຈຶ່ງຫາໄດ້).

*(ສັບເຕັກນິກ: ການຫຼຸດລົງຂອງຄວາມຫຼາກຫຼາຍຂອງເຄື່ອງປ່າຂອງດົງ).*

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອເຂົ້າໃຈຄວາມປ່ຽນແປງໃນການເກັບກູ້ແລະນຳໃຊ້ເຄື່ອງປ່າຂອງດົງໃນເຂດບ້ານ.
- ເພື່ອການວາງແຜນຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງ.
- ເພື່ອຊີ້ໃຫ້ຊາວບ້ານເຫັນເຖິງການຫຼຸດລົງຂອງເຄື່ອງປ່າຂອງດົງ.
- ເພື່ອເຂົ້າໃຈຜົນສະທ້ອນຕໍ່ທຳມະຊາດຂອງການເກັບເຄື່ອງປ່າຂອງດົງ.
- ເພື່ອຄວາມສະດວກໃນການຕິດຕາມກວດກາ

ຕົວຢ່າງ:

ຈັດລະດັບການຫລຸດລົງຂອງເຄື່ອງປ່າຂອງດົງ.

ບ້ານ ຊາແດງ ວັນທີ 5/4/2000

| ຊະນິດຕອປດ ທີ່ຫລຸດລົງ | ຄະແນນ | ລະດັບ | ເປີເຊັນ |
|---|---|---|---|
| ປາ | 21 | 1 | 42% |
| ໜໍ່ໄມ້ | 6 | 3 | 12% |
| ໝາກຈອງ | 4 | 4 | 8% |
| ຫວາຍ | 15 | 2 | 30% |
| ນໍ້າມັນຍາງ | 3 | 5 | 6% |
| ອື່ນໆ | 1 | 6 | 2% |

## ເຮັດແນວໃດ?

1 ຫາກະດານໃຫຍ່ສໍຂາວ ຫຼື ເຈັ້ຍໃຫຍ່ບິກເຟີດ ຫຼື ອື່ນໆ ເພື່ອສ້າງຕາຕະລາງ (ເຊັ່ນ ດິນຮາບພຽງ ແລະ ແປນດີ).

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍທ່ຽວໄປຫາເຄື່ອງປ່າຂອງດົງຫຼາຍໆຊະນິດຢູ່ອ້ອມເຂດບ້ານເລື້ອຍໆ.

3 ແບ່ງເປັນກຸ່ມຍິງ, ກຸ່ມຊາຍ, ກຸ່ມລະປະມານ 8 ຄົນ.

4 ແນະນໍາຈຸດປະສົງກັບຜູ້ໃຫ້ຂໍ້ມູນ, ຄື: ຢາກຮູ້ວ່າ ເຄື່ອງປ່າຂອງດົງທີ່ຊາວບ້ານເຄີຍໄປເອົາ ມີຊະນິດໃດແດ່ທີ່ຫາຍາກກ່ວາເກົ່າ (ຕົວຢ່າງມີໜ້ອຍກ່ວາເກົ່າ, ຕ້ອງໄປໄກໆ ຈຶ່ງຫາໄດ້) ຊະນິດໃດຈະເປັນຊະນິດຫຼຸດລົງທີ່ ນຶ່ງ? ຊະນິດໃດຫຼຸດລົງທີ່ ສອງ? ຊະນິດໃດ ຫຼຸດລົງທີ່ ສາມ? ຕໍ່ໄປ...

5 ກ່ອນອື່ນ, ຊາວບ້ານຕ້ອງເລືອກເອົາເຄື່ອງປ່າຂອງດົງທີ່ຫຼຸດລົງກວ່າໝູ່ໃຫ້ເລືອກປະມານ 10 ຊະນິດ.

6 ຈັດຕາຕະລາງທີ່ຂຽນຊື່ບັນດາຊະນິດຫຼຸດລົງທີ່ຊາວບ້ານກໍານົດໄວ້ແລ້ວ (ອາດຈະບໍ່ໄດ້ຂຽນເປັນຄໍາສັບ, ຍ້ອນວ່າຊາວບ້ານບາງຄົນອາດຈະບໍ່ຮູ້ໜັງສື ກໍລະນີນັ້ນເຮົາອາດຈະແຕ້ມຮູບເອົາ ຫຼື ເອົາຕົວຢ່າງແທ້ຈິງມາວາງໄວ້ກໍ່ໄດ້).

7 ຈັດລະດັບໂດຍໃຊ້ວິທີວາງກ້ອນຫີນນ້ອຍ (ຫຼື ອັນອື່ນທີ່ເປັນເມັດນ້ອຍ ເຊັ່ນ : ໃນໝາກຂາມ, ເມັດເຂົ້າເປືອກ, ສາລີ ..................):

- ເອົາກ້ອນຫີນນ້ອຍ ຫຼື ອັນໃດນຶ່ງທີ່ເປັນກ້ອນ ຫຼື ເມັດນ້ອຍທີ່ສາມາດນັບໄດ້ 50 ກ້ອນ.
- ໃຫ້ຊາວບ້ານຈັບກ້ອນນັ້ນ ແລະ ວາງໄວ້ຕາມແຕ່ລະຊະນິດເຄື່ອງປ່າຂອງດົງທີ່ກໍານົດໄວ້ໃນຕາຕະລາງ ແລ້ວສະເໜີຢ່າງນີ້: ໃຫ້ວາງກ້ອນຫີນແບ່ງໄວ້ລະຫວ່າງແຕ່ລະຊະນິດ, ຊະນິດທີ່ຫຼຸດລົງຫຼາຍກວ່າໝູ່ຕ້ອງວາງກ້ອນ ຫຼື ເມັດນັ້ນໄວ້ໃຫ້ຫຼາຍກວ່າໝູ່.
- ຄວນໃຫ້ເວລາແກ່ຊາວບ້ານຫຼາຍເພື່ອສົນທະນາກ່ຽວກັບການຈັດລະດັບ - ຕ້ອງຕັ້ງໃຈຟັງເຫດຜົນຂອງເຂົາເຈົ້າໃນການຈັດລະດັບ ແລະ ຕ້ອງມີຄົນບັນທຶກພ້ອມ.

8 ຫຼັງຈາກແບ່ງກ້ອນ ຫຼື ເມັດນັ້ນຖືກກັບຄວາມຫຼຸດລົງຂອງແຕ່ລະຊະນິດໄດ້ແລ້ວ, ແມ່ນໃຫ້ນັບຈໍານວນ ແລະ ຈົດໄວ້ - ຊະນິດໃດໄດ້ຫຼາຍທີ່ນຶ່ງ? ຊະນິດໃດໄດ້ ຫຼາຍທີ່ສອງ? ຕໍ່ໄປຈົນໝົດ ຕາມຕົວເລກ 1, 2, 3,... ແລ້ວເຮົາຈະໄດ້ເຫັນລະດັບໂດຍກົງເລີຍ (ເບິ່ງຕົວຢ່າງຂ້າງເທິງ).

9 ເຮົາອາດຈະເອົາຕົວເລກຂອງຈໍານວນກ້ອນ ຫຼື ເມັດມາຕີເປີເຊັນກໍ່ໄດ້ - ສົມມຸດວ່າຊາວບ້ານໄດ້ວາງກ້ອນຫີນໄວ້ທັງໝົດໄດ້ 50 ກ້ອນ ຖ້າເອົາ 15 ກ້ອນວາງຢູ່ກັບຫວາຍ, ນີ້ຈະເທົ່າກັບຈໍານວນ 30% ຂອງຈໍານວນກ້ອນຫີນທັງໝົດ.

ຂໍ້ເພີ້ມເຕີມ :

- ອາດຈະຈັດລະດັບໂດຍວິທີການສົມທຽບຄູ່ (ເບິ່ງໜ້າ ................ ).

ຂໍ້ສັງເກດ:

- ການຕີເປີເຊັນແມ່ນບໍ່ມີຄວາມສໍາຄັນຫຼາຍ ເລື່ອງທີ່ສໍາຄັນໃນການຈັດລະດັບ ແມ່ນຢາກຮູ້ວ່າອັນໃດໄດ້ທີ່ 1? ອັນໃດໄດ້ທີ່ 2? ອັນໃດໄດ້ທີ່ 3? ຕໍ່ໄປຈົນໝົດ ເຮົາເບິ່ງຕົວເລກຂອງຈໍານວນກ້ອນຫີນ ຫຼື ເມັດອື່ນທີ່ຊາວບ້ານວາງໄວ້ແລ້ວຈຶ່ງເຫັນລະດັບໂລດ.
- ສໍາຄັນ: ຖ້າການຕີເປີເຊັນຈະສ້າງຄວາມສັບສົນ ຫຼື ເຮັດໃຫ້ເສຍເວລາແມ່ນບໍ່ຄວນເຮັດ.

# • ຈຳນວນເຄື່ອງປ່າຂອງດົງ ທີ່ເກັບອອກຈາກປ່າ •

ແມ່ນຫຍັງ?

ວິທີການນີ້ແມ່ນເພື່ອເຂົ້າໃຈວ່າ:

- ການຄິດໄລ່ຫົວໜ່ວຍພື້ນບ້ານເປັນຫົວໜ່ວຍສາກົນ.
- ຊາວບ້ານເຄີຍເອົາເຄື່ອງປ່າຂອງດົງມາຈຳນວນຫຼາຍເທົ່າໃດ?
- ມີຊາວບ້ານໄປເກັບເຄື່ອງປ່າຂອງດົງຫຼາຍເທົ່າໃດ?
- ໃຊ້ເວລາດົນປານໃດໃນການເກັບ?

*(ສັບເຕັກນິກ: ປະລິມານຂອງການເກັບກູ້ເຄື່ອງປ່າຂອງດົງ).*

**ຫາຂໍ້ມູນນີ້ເພື່ອຫຍັງ?**

- ເພື່ອເປັນບ່ອນອີງໃນການວິເຄາະບັນຫາ ເສດຖະກິດໃນບ້ານ.
- ເພື່ອຕິດຕາມ ແລະ ກວດກາຈຳນວນເຄື່ອງປ່າຂອງດົງທີ່ເອົາອອກຈາກປ່າ.
- ເພື່ອການວາງແຜນການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງ.

ຕົວຢ່າງ:

## ຂໍ້ມູນແບບສອບຖາມຈຳນວນເຄື່ອງປ່າຂອງດົງທີ່ເອົາອອກຈາກປ່າ.

ຊື່ພໍ່, ແມ່. ທ້າວ ຈັນ, ນາງ ແສງ. ຈຳນວນຄົນໃນຄອບຄົວ 6 ຄົນ ຍິງ 3 ຄົນ ເລກເຮືອນ 12 ກຸ່ມ: ຄ/ຄ ກອງ.

| ຊະນິດ ຄປດ | ບ່ອນໄປເກັບ | ຜູ້ໄປເກັບ | ໄປຜູ້ດຽວ ຫຼື ກຸ່ມ | ໄປແລະກັບ ໃຊ້ເວລາ ຈັກວັນ | ຈ/ນ ເກັບແຕ່ລະເທື່ອ | ເປັນຫົວໜ່ວຍສາກົນ | ເກັບຈັກເທື່ອຕໍ່ເດືອນ | ເກັບຈັກເດືອນຕໍ່ປີ | ທັງໝົດເກັບໄດ້ເທົ່າໃດ | ລວມທັງໝົດເທົ່າໃດ. |
|---|---|---|---|---|---|---|---|---|---|---|
| ໜໍ່ໄມ້ | ປ່າແດງ | ພໍ່ | ຜູ້ດຽວ | 2 | ກະຕ່າໃຫຍ່ 1 | 10 Kg | 3 | 4 | 120 Kg | 936 Kg |
| | | ແມ່ | ກຸ່ມ | 2 | -"- ກາງ 1 | 7 Kg | 12 | 4 | 336 Kg | |
| | | ລູກຊາຍ | ກຸ່ມ | 3 | -"- ນ້ອຍ 1 | 4 Kg | 15 | 4 | 240 Kg | |
| | | ລູກສາວ | ກຸ່ມ | 3 | -"- 1 | 4 Kg | 15 | 4 | 240Kg | |
| | ພູກະແໜມ | ພໍ່ | ກຸ່ມ | 8 | ກະຕ່ານ້ອຍ | 4Kg | 1 | 2 | 8 Kg | 8 Kg |
| ຍອດຫວາຍ | ດົງຊາລ່ອຍ | ແມ່ | ກຸ່ມ | 4 | 2 ມັດ | 20 ຍອດ | 3 | 7 | 420 ຍອດ | 960 ຍອດ |
| | | ລູກຊາຍ | ຜູ້ດຽວ | 6 | 1 ມັດ | 10 ຍອດ | 4 | 9 | 360 ຍອດ | |
| | | ລູກສາວ | ກຸ່ມ | 6 | 1 ມັດ | 10 ຍອດ | 2 | 9 | 180 ຍອດ | |
| ເສັ້ນຫວາຍ | ດົງຊາລ່ອຍ | ພໍ່ | ຜູ້ດຽວ | 6 | 5 ເສັ້ນ | 50 ແມັດ | 1 | 5 | 250 ແມັດ | 310 ແມັດ |
| | ປ່າແດງ | ພໍ່ | ກຸ່ມ/ຜູ້ດຽວ | 4 | 3 ເສັ້ນ | 30 ແມັດ | 1 | 2 | 60 | |

ເຮັດແນວໃດ?

1 ກຽມແບບຟອມ ເພື່ອສຳພາດຕາມຕົວຢ່າງຂ້າງເທິງ. (ຜູ້ເກັບກຳຂໍ້ມູນຕ້ອງທຳຄວາມເຂົ້າໃຈແບບຟອມໃຫ້ລະອຽດ ກ່ອນການສຳພາດ).
2 ຊະນິດເຄື່ອງປ່າຂອງດົງທີ່ຈະສຳພາດ ແມ່ນເອົາມາຈາກການຈັດລະດັບຄວາມສຳຄັນຂອງເຄື່ອງປ່າຂອງດົງ.
3 ສະເໜີຈຸດປະສົງກັບ ອຳນາດການປົກຄອງບ້ານ ແລະ ໃຫ້ຈັດຄອບຄົວທີ່ຈະສຳພາດແຕ່ລະວັນ ໃຫ້ເອົາໝົດທຸກໆ ຄອບຄົວໃນບ້ານ.
4 ສຳພາດຕາມແບບຟອມ.
5 ໃຫ້ຄຳນຶງເຖິງ ຫົວຂໍ້ໃຫຍ່ ຂອງການເກັບກຳຂໍ້ມູນແບບມີສ່ວນຮ່ວມ (ເບິ່ງຕົວຢ່າງ).

ຂໍ້ສັງເກດ:

- ຕ້ອງເອົາໃຈໃສ່ໃຫ້ມີສ່ວນຮ່ວມກັບທັງຍິງ ແລະ ຊາຍ, ຜູ້ເຖົ້າ ແລະ ເດັກນ້ອຍ ໃນຄອບຄົວ ເພາະວ່າຊາວບ້ານເກືອບໝົດທຸກຄົນເຄີຍເກັບເຄື່ອງປ່າຂອງດົງສ່ວນໃດນຶ່ງ.
- ໃນການຖາມເຖິງການເຄື່ອນໄຫວຂອງຊາວບ້ານ, ຄວນຈະໃຊ້ຄຳເວົ້າທີ່ຊາວບ້ານເຄີຍໃຊ້ - ຕົວຢ່າງ, ຖ້າຢາກຮູ້ວ່າຊາວບ້ານອອກໄປເກັບເຄື່ອງປ່າຂອງດົງດົນປານໃດໃນແຕ່ລະເທື່ອ, ແມ່ນບໍ່ຕ້ອງຖາມ "ໄປກັບໃຊ້ເວລາຈັກຊົ່ວໂມງ?", ແຕ່ຄວນຖາມ "ໄປກັບຈະທັນກິນເຂົ້າເພັງຢູ່ບ້ານບໍ?" ຫຼືລັກສະນະແນວນີ້ - ຜູ້ເກັບກຳຂໍ້ມູນຕ້ອງປັບຕົວໃນການສອບຖາມໃຫ້ເຂົ້າກັບສະພາບຕົວຈິງ.
- ສຳຄັນແມ່ນຕ້ອງເຂົ້າໃຈຈຳນວນຂອງຫົວໜ່ວຍພື້ນບ້ານ ມາຕີເປັນຫົວໜ່ວຍສາກົນ.
    - ຕົວຢ່າງ - ເກັບໝາກຈອງເປັນກະຊອກ (ກະຊອກໜຶ່ງທໍ່ກັບ X ກກ)
    - ຕົວຢ່າງ - ເກັບໜໍ່ໄມ້ເປັນກະຕຸ (ກະຕຸໜຶ່ງທໍ່ກັບ X ກກ)

  ໃນການຄິດໄລ່ຫົວໜ່ວຍພື້ນບ້ານໄລ່ເປັນຫົວໜ່ວຍສາກົນອາດຈະຕ້ອງເອົາກະຕ່າຫຼືຖົງຕ່າງໆທີ່ຊາວບ້ານເຄີຍໃຊ້ ແລ້ວກໍ່ວັດແທກຫຼືຕິດຊິງຄິດໄລ່ເປັນ ກກ.
- ເຄື່ອງປ່າຂອງດົງຊະນິດນຶ່ງ ອາດຈະເກັບມາຈາກຫລາຍບ່ອນ ດັ່ງນັ້ນ ຄວນຖາມເຖິງທຸກໆ ບ່ອນໃຫ້ຄົບ.

# • ການວິເຄາະບັນຫາເຄື່ອງປ່າຂອງດົງ •

ແມ່ນຫຍັງ?

ວິທີການນີ້ຈະໃຫ້ເຂົ້າໃຈວ່າ ຍ້ອນບັນຫາຕ່າງໆຂອງເຄື່ອງປ່າຂອງດົງ ແລະ ວິທີການແກ້ໄຂ.

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອຊອກວິທີແກ້ໄຂບັນຫາ.
- ເພື່ອວາງແຜນການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງ.
- ເພື່ອກະຕຸ້ນໃຫ້ຊາວບ້ານ ມີແນວຄິດໃໝ່ຕໍ່ການຄຸ້ມຄອງ ແລະ ຂະຫຍາຍຄວາມອຸດົມສົມບູນຂອງເຄື່ອງປ່າຂອງດົງໃນເຂດບ້ານຂອງເຂົາເຈົ້າ.

ຕົວຢ່າງ:

## ຕາຕະລາງວິເຄາະບັນຫາ.

ບ້ານເຫາແດງ
ວັນທີ 5/4/2000
ກຸ່ມຊາຍ

| ຊະນິດສັດ | ບັນຫາ | ສາເຫດ | ວິທີແກ້ໄຂ | ຮ່ວມກັບພາກສ່ວນອື່ນ. |
|---|---|---|---|---|
| 1. ປາ, ປູ, ຫອຍ, ກຸ້ງ. | ມີໜ້ອຍ<br>- ອຶດ/ຫາຍາກ | - ຖິ້ມລະເບີດ, ເບື່ອປາ.<br>- ຕັນປາ ປາໃນລະດູປາໄຂ່ ເດືອນ 6-7.<br>- ສອ້ມ/ເອົາລູກປາທີ່ເກີດໃໝ່. | - ສ້າງເຂດສະຫງວນ[illegible]<br>- ຢຸດການຫາປາໃນລະດູປາຂຶ້ນໄຂ່<br>- ສ້າງວັງສະຫງວນ.<br>- ວາງຫຼັກການກົດລະບຽບຄຸ້ມຄອງແນໃສ່ເພື່ອແນ່ໃຫ້ທຸກພາກສ່ວນ[illegible]. | - ຂະແໜງການທີ່ກ່ຽວຂ້ອງ/ສາຍສັດ<br>ພະນັກງານເມືອງ.<br>- ວິຊາການຊ່ວຍແນະນຳ. |
| 2. ເຕີຍ. | ອຶດ/ຫາຍາກ, ມີຢູ່ໄກ. | - [illegible]ສານ ສາດແກ່ລະບົບ.<br>- ບໍ່ມີການປູກທົດແທນ.<br>- ຖາງປ່າເຕີຍເຮັດສວນ<br>- ປະຊາກອນເພີ່ມຂຶ້ນ. | - ຕັດເອົາແຕ່ພາກສ່ວນທີ່ນຳໃຊ້ໄດ້<br>- ສ້າງກົດລະບຽບການຄຸ້ມຄອງແນໃສ່ເພື່ອແນ່ໃຫ້ທຸກພາກສ່ວນປະຕິບັດ[illegible].<br>- ຈັດຫາເນື້ອທີ່ປູກເພີ່ມ. | - ຂະແໜງການກ່ຽວຂ້ອງ.<br>- ພະນັກງານເມືອງ<br>- ວິຊາການ. |
| 3. ຫວາຍ. | - ຫາລຸດລົງໃນແຕ່ລະປີ. | - ຕັດ ຫຼາດ, ກິນ, ຂາຍ<br>- ຕັດ ລຳ, ໜໍ່, ຂາຍ<br>- 4 ບໍ່ມີໃຜປູກ ທົດແທນ.<br>- ຖາງປ່າຫວາຍເຮັດສວນ.<br>- ປະຊາກອນເພີ່ມຂຶ້ນ. | - ຈັດສັນຕອນປ່າເພື່ອເກັບ[illegible].<br>- ຮັກສາໄວ້ໃນສວນ[illegible].<br>- ປູກແທນ.<br>- ວັດຖຸ[illegible] ກາເຟ, ຂາຍ, [illegible]. | - ຂະແໜງການກ່ຽວຂ້ອງ.<br>- ພະນັກງານເມືອງ.<br>- ວິຊາການ. |
| 4. ຜັກປ່າ. | - ອຶດ/ຫາຍາກ<br>- ຫຼຸດລົງ. | - ຖາງປ່າເຮັດສວນກາເຟ<br>- ຫຼາຍບ້ານໃຊ້ນຳກັນ<br>- ເກັບຂາຍຫຼາຍເກີນ[illegible]<br>- ປະຊາກອນເພີ່ມຂຶ້ນ. | - ກຳນົດລະບຽບການເກັບກູ້.<br>- ຮັກສາແລະສະກັດກັ້ນໄຟໄໝ້ລາມປ່າ. | - ຫຼາຍບ້ານຮ່ວມມືກັນເພື່ອບໍ່ໃຫ້ປະຕິບັດ. |

เຮັດແນວໃດ?

| | |
|---|---|
| 1 | ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເພີດ ຫຼື ອື່ນໆ ເພື່ອສ້າງຕາຕະລາງ (ເຊັ່ນ ດິນຮາບພຽງ ແລະ ແປນດີ). |
| 2 | ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍໄປເອົາເຄື່ອງປ່າຂອງດົງຫຼາຍໆຊະນິດ. |
| 3 | ແບ່ງເປັນກຸ່ມຍິງ, ກຸ່ມຊາຍ, ກຸ່ມລະປະມານ 8 ຄົນ. |
| 4 | ສະເໜີຈຸດປະສົງກັບຜູ້ໃຫ້ຂໍ້ມູນ, ຄື: ຢາກຮູ້ວ່າ :<br>• ເຄື່ອງປ່າຂອງດົງທີ່ສຳຄັນ ມີບັນຫາຫຍັງແດ່? (ຕົວຢ່າງ - ມີໜ້ອຍກວ່າເກົ່າ, ຫາຍາກກວ່າເກົ່າ, ມີຢູ່ໄກຫຼາຍ, ມີການຍາດກັນກັບບ້ານອື່ນ).<br>• ຍ້ອນຫຍັງຈຶ່ງເກີດມີບັນຫານີ້?<br>• ເຮັດຈັ່ງໃດຈຶ່ງຈະໄດ້ແກ້ໄຂບັນຫານີ້?<br>• ຈະເອົາໃຜ (ຫຼື ພາກສ່ວນໃດ) ມາຮ່ວມມືໃນການແກ້ໄຂບັນຫາ? |
| 5 | ສ້າງຫົວຂໍ້ຕາຕະລາງຂຶ້ນ ແລ້ວລະດົມແນວຄິດຂອງຊາວບ້ານ ເພື່ອຂຽນເຂົ້າໃສ່ຕາຕະລາງ (ເບິ່ງຕົວຢ່າງ). |
| 6 | ໃຫ້ຊາວບ້ານເປັນເຈົ້າການໃນການສົນທະນາຕາມແຕ່ລະຫົວຂໍ້ໃນຕາຕະລາງ. |
| 7 | ເອົາຕາຕະລາງວິເຄາະຂອງກຸ່ມຍິງ, ກຸ່ມຊາຍ ມາສົມທຽບກັນມນກຸ່ມໃຫຍ່. ອາດຈະເອົາຕາຕະລາງນຶ່ງເປັນຫລັກ ແລ້ວເອົາເນື້ອໃນຂອງຕາຕະລາງນຶ່ງອີກມາຕື່ມໃສ່ ເພື່ອໃຫ້ຄົບຖ້ວນ. |

ຂໍ້ຄວນເອົາໃຈໃສ່ :

- ຕ້ອງໃຫ້ເຂົ້າໃຈເຖິງເຫດຜົນຂອງຊາວບ້ານ ແລະ ໃຫ້ມີຄົນບັນທຶກລະອຽດພ້ອມ.
- ຕ້ອງໃຈເຢັນ ໃຫ້ເວລາຫລາຍແກ່ຊາວບ້ານ ເພື່ອຄິດ ແລະ ສົນທະນາລະອຽດ.

# • ຂໍ້ມູນລວມຂອງການເກັບກູ້ເຄື່ອງປ່າຂອງດົງ •

ແມ່ນຫຍັງ?

ວິທີການນີ້ ຈະໃຫ້ເຂົ້າໃຈວ່າ ຊາວບ້ານເຄີຍເກັບເຄື່ອງປ່າຂອງດົງຊະນິດຕ່າງໆ ໂດຍວິທີໃດແດ່?

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອການວາງແຜນຄຸ້ມຄອງການນຳໃຊ້ເຄື່ອງປ່າຂອງດົງໃນຕໍ່ໜ້າ.
- ເພື່ອຊອກຫາວິທີການທີ່ດີກວ່າໝູ່ຊ່ວຍຊາວບ້ານໃນການເກັບກູ້ເຄື່ອງປ່າຂອງດົງແບບຍືນຍົງ.

ຕົວຢ່າງ:

## ຂໍ້ມູນລວມຂອງການເກັບກູ້ເຄື່ອງປ່າຂອງດົງ.

ບ້ານ ຜາແດງ
ວັນທີ 5/4/2000
ກຸ່ມ ຍິງ

| ຊະນິດຄປດ | ພາກສ່ວນທີ່ເກັບ | ວິທີຊາວບ້ານເກັບ | ລະດູການເກັບ | ອາຍຸທີ່ສາມາດເກັບໄດ້ | ຮອບວຽນການເກັບກູ້ | ພາກສ່ວນຂະຫຍາຍພັນ | ຜົນກະທົບຕໍ່ການເກັບ ສູນ |
|---|---|---|---|---|---|---|---|
| ໝາກແໜ່ງ | -ໝາກ | -ດຶງອອກເປັນພວງ.<br>-ໃຊ້ມີດຕັດເອົາພວງ. | ເດືອນ 8-9 | 3-4 ປີ | 1 ເທື່ອຕໍ່ປີ | -ແກ່ນ<br>-ເຫງົ້າ | -ຕັດລຳ<br>-ດຶງເອົາ |
| ຫວາຍ | ລຳ<br>-ຍອດ<br>-ໝາກ | -ຕັດ, ດຶງ<br>-ຕັດ<br>-ເດັດ | ຕົ້ນເດືອນ 4-5<br>ເດືອນ 6-7 | 7-8 ປີ<br>3 ປີຂຶ້ນໄປ<br>4-5 ປີ | -7-8 ປີ<br>-3 ປີຂຶ້ນໄປ<br>ທຸກໆປີ | -ເຫງົ້າ<br>-ແກ່ນ<br>-ເບັ້ຍ | -ຕັດຮາກກູ້<br>-ດຶງລູກອ່ອນ<br>-ຕັດລຳແກ່ |
| ໄມ້ປ່ອງ | -ລຳ,<br>-ໜໍ່ | -ຕັດລຳ<br>-ຂຸດ | -ຕະຫຼອດ<br>-ເດືອນ 7-12 | -2 ປີຂຶ້ນໄປ<br>-ທຸກໆປີ | 2 ປີຂຶ້ນໄປ<br>1 ປີຂຶ້ນໄປ | -ເຫງົ້າ<br>-ຕາ<br>-ແກ່ນ | -ຕັດກູ້<br>-ຂຸດເຫງົ້າ<br>-ໄຟໄໝ້ປ່າ |

ເຮັດແນວໃດ?

1 ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເພີດ ຫຼື ອື່ນໆ ເພື່ອສ້າງຕາຕະລາງ (ເຊັ່ນ ດິນຮາບພຽງ ແລະ ແປນດີ).
2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍໄປເອົາເຄື່ອງປ່າຂອງດົງຫຼາຍໆຊະນິດ
3 ແບ່ງເປັນກຸ່ມຍິງ, ກຸ່ມຊາຍ, ກຸ່ມລະປະມານ 8 ຄົນ.
4 ສະເໜີຈຸດປະສົງກັບຜູ້ໃຫ້ຂໍ້ມູນ, ຄື: ຢາກຮູ້ວ່າ
- ຊາວບ້ານເຄີຍເກັບເຄື່ອງປ່າຂອງດົງຊະນິດໃດແດ່?
- ເກັບພາກສ່ວນໃດ?
- ມີວິທີການເກັບແນວໃດ?
- ເກັບເວລາໃດ?
- ອາຍຸທີ່ສາມາດເກັບກູ້ໄດ້ເທົ່າໃດ?
- ຮອບວຽນຂອງການເກັບກູ້ເທົ່າໃດ?
- ເອົາພາກສ່ວນໃດຂະຫຍາຍພັນ?
- ຜົນກະທົບຕໍ່ການດຸ່ນດ່ຽງທາງນິເວດແນວໃດແດ່?

5 ສ້າງຫົວຂໍ້ຕາຕະລາງ ແລ້ວລະດົມແນວຄິດຂອງຊາວບ້ານ ເພື່ອຂຽນເຂົ້າໃສ່ຕາຕະລາງ (ເບິ່ງຕົວຢ່າງ).
6 ໃຫ້ຊາວບ້ານເປັນເຈົ້າການໃນການສົນທະນາຕາມແຕ່ລະຫົວຂໍ້ໃນຕາຕະລາງ.
7 ເອົາຕາຕະລາງວິເຄາະຂອງກຸ່ມຍິງ, ກຸ່ມຊາຍ ມາສົມທຽບກັນນຳກຸ່ມໃຫຍ່. ອາດຈະເອົາຕາຕະລາງນຶ່ງເປັນຫລັກ ແລ້ວເອົາເນື້ອໃນຂອງຕາຕະລາງນຶ່ງອີກມາຕື່ມໃສ່ ເພື່ອໃຫ້ຄົບຖ້ວນ.

ຂໍ້ຄວນເອົາໃຈໃສ່ :

- " ຮອບວຽນຂອງການເກັບກູ້ " ໝາຍຄວາມວ່າ " ດົນປານໃດຈຶ່ງກັບຄືນມາເກັບກູ້ໄດ້ອີກເທື່ອນຶ່ງ"
- ວິທີການເກັບກູ້ຂອງຊາວບ້ານອາດຈະມີຫລາຍວິທີ ສະນັ້ນ ຄວນຖາມໃຫ້ລະອຽດ.

## • ການເກັບເຄື່ອງປ່າຂອງດົງ ລະຫວ່າງບ້ານອ້ອມຂ້າງ ແລະ ພາກສ່ວນອື່ນໆ •

ແມ່ນຫຍັງ?

ວິທີການນີ້ແມ່ນເພື່ອເຂົ້າໃຈບັນຫາຕໍ່ໄປນີ້:

- ຊາວບ້ານເຄີຍໄປເອົາເຄື່ອງປ່າຂອງດົງຢູ່ເຂດບ້ານອື່ນ ບ້ານໃດແດ່?
- ຊາວບ້ານອື່ນ ບ້ານໃດແດ່ ເຄີຍມາເອົາເຄື່ອງປ່າຂອງດົງຢູ່ເຂດບ້ານເຮົາ?
- ມີພາກສ່ວນອື່ນໃດແດ່ (ຕົວຢ່າງ ບໍລິສັດໃດນຶ່ງ) ທີ່ເຄີຍມາເອົາເຄື່ອງປ່າຂອງດົງຢູ່ເຂດບ້ານເຮົາ?
- ການໄປມານີ້ ແມ່ນໄປມາເລື້ອຍໆບໍ່?

ຫາຂໍ້ມູນນີ້ເພື່ອຫຍັງ?

- ເພື່ອການວາງແຜນ ແລະ ສ້າງກົດລະບຽບຄຸ້ມຄອງການນຳໃຊ້ເຄື່ອງປ່າຂອງດົງ ຮ່ວມກັບບ້ານອ້ອມຂ້າງ ແລະ ພາກສ່ວນອື່ນໆ.
- ເພື່ອຊ່ວຍໃນການປະເມີນການນຳໃຊ້ເຄື່ອງປ່າຂອງດົງໃຫ້ສອດຄ່ອງກັບຄວາມຈິງ.

ຕົວຢ່າງ:



**ເຮັດແນວໃດ?**

1 ຫາກະດານໃຫຍ່, ສໍຂາວ ຫຼື ເຈ້ຍໃຫຍ່, ບິກເຟີດ ຫຼື ອື່ນໆ ເພື່ອແຕ້ມ (ເຊັ່ນ ດິນຮາບພຽງ ແລະ ແປນດີ).

2 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍທ່ຽວໄປເອົາເຄື່ອງປ່າຂອງດົງຢູ່ ຫຼາຍບ່ອນ.

3 ແບ່ງເປັນກຸ່ມຍິງ, ກຸ່ມຊາຍ, ກຸ່ມລະປະມານ 8 ຄົນ.

4 ສະເໜີຈຸດປະສົງກັບຜູ້ໃຫ້ຂໍ້ມູນ.

5 ໃນຈຸດໃຈກາງຂອງກະດານ (ຫຼືເຈ້ຍຫຼືບ່ອນດິນຮາບພຽງ ແລະ ແປນດີ), ຂີດວົງກົມນ້ອຍ ແລະ ຂຽນຊື່ບ້ານເຮົາ.

6 ໃຫ້ຊາວບ້ານກຳນົດວ່າ ບ້ານອ້ອມຂ້າງຢູ່ຈຸດໃດແດ່ ແລະ ໃຫ້ຂີດໃສ່ບ່ອນນັ້ນໆພ້ອມ.

- ບ້ານໃກ້ໆໃຫ້ຂີດໄວ້ໃກ້ໆກັບເຄື່ອງໝາຍຂອງບ້ານເຮົາ.
- ບ້ານໄກໆໃຫ້ຂີດໄວ້ຢູ່ໄກ.

7 ສຳຫຼັບແຕ່ລະບ້ານ, ໃຫ້ຂີດລູກສອນບອກເຖິງການເຄື່ອນໄຫວຂອງຊາວບ້ານແຕ່ລະບ້ານ, ໂດຍວິທີຕໍ່ໄປນີ້:

- ຖ້າວ່າຊາວບ້ານ ກ ເຄີຍ ເຂົ້າມາເອົາເຄື່ອງປ່າຂອງດົງໃນເຂດບ້ານເຮົາ, ແມ່ນໃຫ້ລູກສອນອອກຈາກບ້ານ ກ ຊີ້ເຂົ້າມາຫາບ້ານເຮົາ.
- ຖ້າວ່າເຮົາເຄີຍໄປເອົາເຄື່ອງປ່າຂອງດົງໃນເຂດບ້ານ ກ, ແມ່ນໃຫ້ລູກສອນອອກຈາກບ້ານ ເຮົາ ຊີ້ໄປຫາບ້ານ ກ ນັ້ນ (ອາດຈະມີລູກສອນຊີ້ໄປທັງສອງທາງ - ເບິ່ງຕົວຢ່າງຢູ່ຂ້າງເທິງ).
- ຖ້າວ່າການໄປມານັ້ນແມ່ນດົນໆ ມີເທື່ອນຶ່ງ ໃຫ້ລູກສອນຂີດແຕ່ເສັ້ນດຽວ; ຖ້າວ່າມີເລື້ອຍໆໃຫ້ລູກສອນຂີດເປັນສາມເສັ້ນ; ຖ້າວ່າປານກາງໃຫ້ຂີດສອງເສັ້ນ (ເບິ່ງຕົວຢ່າງຢູ່ຂ້າງເທິງ).

8 ຖ້າວ່າມີພາກສ່ວນອື່ນທີ່ເຄີຍເຂົ້າມາເກັບເຄື່ອງປ່າຂອງດົງໃນເຂດບ້ານເຮົາ, ແມ່ນໃຫ້ຕື່ມໃສ່ ແລະ ຂີດລູກສອນຕາມວິທີສະເໜີມາແລ້ວ.

ຂໍ້ຄວນເອົາໃຈໃສ່ :

- ໃນການເກັບກຳຂໍ້ມູນນີ້ ຕ້ອງຊຸກຍູ້ໃຫ້ຊາວບ້ານ ມີການສົນທະນາເຖິງເຫດຜົນຂອງການໄປມາ ດັ່ງນັ້ນ ຕ້ອງມີການບັນທຶກລະອຽດໄປພ້ອມໆກັນ.

ຂໍ້ສັງເກດ :

- ນອກຈາກເລື້ອງການເກັບກູ້ເຄື່ອງປ່າຂອງດົງແລ້ວ ເຮົາສາມາດນຳໃຊ້ວິທີການນີ້ ເພື່ອຖາມເຖິງເລື້ອງການຄ້າຂາຍ ຫຼື ການພົວພັນດ້ານອື່ນໆກໍໄດ້.

# • ການຍ່າງປ່າ •

**ແມ່ນຫຍັງ?**

ການຍ່າງປ່າແມ່ນເຂົ້າປ່ານຳກັນກັບຊາວບ້ານ ເພື່ອເກັບກຳຂໍ້ມູນສະພາບຕົວຈິງໃນປ່າໄມ້, ສັງເກດການປ່ຽນແປງຂອງປ່າໄມ້ ແລະ ຄວາມອຸດົມສົມບູນຂອງເຄື່ອງປ່າຂອງດົງ ໃນເຂດໃດເຂດນຶ່ງທີ່ໄດ້ກຳນົດໄວ້ແລ້ວ.

**ຫາຂໍ້ມູນນີ້ເພື່ອຫຍັງ?**

- ເພື່ອຢັ້ງຢືນ ຫຼື ປັບປຸງຂໍ້ມູນກ່ຽວກັບປ່າທີ່ໄດ້ເກັບແລ້ວ.
- ເພື່ອໃຫ້ສັງເກດສະພາບການຂອງບ່ອນເກັບເຄື່ອງປ່າຂອງດົງໂດຍກົງ.

**ຕົວຢ່າງ:**







## ເຮັດແນວໃດ?

1 ຊອກຫາຊາວບ້ານທີ່ສາມາດໃຫ້ຂໍ້ມູນດີ ເຊັ່ນ: ຄົນທີ່ເຄີຍທ່ຽວໃນປ່າເພື່ອໄປເອົາເຄື່ອງປ່າຂອງດົງຫຼາຍໆຊະນິດ (ໃຫ້ໄດ້ປະມານ 6 ຄົນ, ທັງຍິງແລະຊາຍ)

2 ສະເໜີຈຸດປະສົງກັບຜູ້ໃຫ້ຂໍ້ມູນ.

3 ສົນທະນາກັບຊາວບ້ານກ່ຽວກັບປ່າຕ່າງໆຢູ່ອ້ອມບ້ານ ແລະ ໃຫ້ຕົກລົງກັນວ່າຈະຍ່າງໄປທາງໃດ ໂດຍອີງໃສ່ ແຜນວາດປ່າທີ່ໄດ້ແຕ້ມໄວ້ແລ້ວ.

4 ໃຫ້ມີຄົນເກັບກຳຂໍ້ມູນໄປນຳກັນຢ່າງນ້ອຍ 3 ຄົນ :

- ຄົນນຶ່ງສອບຖາມຕາມສະພາບໃນການຍ່າງ.
- ຄົນນຶ່ງບັນທຶກການສົນທະນາ ແລະ ຂໍ້ສັງເກດຕ່າງໆ.
- ຄົນອື່ນຄວນສັງເກດການໂດຍກົງ ແລະ ປະກອບສ່ວນໃນການສອບຖາມ ແລະ ການບັນທຶກ.

5 ເວລາຍ່າງຕ້ອງມີການສອບຖາມ, ສົນທະນາກັນ, ແລະ ສັງເກດການໂດຍກົງ ກ່ຽວກັບບັນຫາສະພາບຂອງປ່າ, ເຊັ່ນ:

- ສະພາບຂອງດິນເປັນແນວໃດ? ປູກຫຍັງໄດ້ແດ່?
- ປ່າມີສະພາບແບບໃດ? ມີການປ່ຽນແປງແນວໃດໃນແຕ່ລະບ່ອນ?
- ສວນແລະໄຮ່ມີສະພາບແບບໃດ?
- ມີຈຸດໃດທີ່ຊາວບ້ານເຄີຍໃຊ້ໃນການບອກທາງກັນໃນປ່າ?

6 ຕ້ອງບັນທຶກທຸກຊະນິດເຄື່ອງປ່າຂອງດົງ ທີ່ພົບໃນເວລາຍ່າງປ່າ.

7 ເວລາກັບມາຮອດບ້ານ ແຕ້ມແຜນທີ່ຂອງການຍ່າງໃຫ້ລະອຽດ (ເບິ່ງຕົວຢ່າງຂ້າງເທິງ).

ຂໍ້ສັງເກດ:

- ວິທີການນີ້ຍັງສາມາດໃຊ້ໄດ້ໃນການຍ່າງສຳຫຼວດພາຍໃນເຂດໝູ່ບ້ານ.
- ຖ້າຈະຍ່າງປ່າ ຄວນແຕ້ມແຜນວາດບ້ານ ແລະ ປ່າໄມ້ກ່ອນ.

# • ສຳພາດກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ປ່າ •

ແມ່ນຫຍັງ?

ວິທີການນີ້ ແມ່ນການສຳພາດແບບເຄິ່ງຈັດວາງ ກ່ຽວກັບລະບຽບການຕ່າງໆ ທີ່ຊາວບ້ານເຄີຍມີ ແລະ ຮັບຮູ້ກັນເອງໃນການນຳໃຊ້ປ່າໄມ້ແຕ່ລະບ່ອນ.

| | |
|---|---|
| ຫາຂໍ້ມູນນີ້ ເພື່ອຫຍັງ? | • ເພື່ອເປັນບ່ອນອີງ ໃນການວາງແຜນການຄຸ້ມຄອງ ແລະ ນຳໃຊ້ປ່າໄມ້ ແລະ ເຄື່ອງປ່າຂອງດົງ ໃນແຕ່ລະບ່ອນໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງເຂດພື້ນທີ່. |

ເຮັດແນວໃດ?

1 ເອົາລາຍການຄຳຖາມທີ່ກຽມໄວ້ແລ້ວ (ເບິ່ງຕົວຢ່າງ).
2 ຖືໄປນຳ ໃນເວລາຍ່າງປ່າກັບຊາວບ້ານ.
3 ໃນເວລາຍ່າງປ່າ ໃຫ້ໃຊ້ລາຍການຄຳຖາມ ເປັນບ່ອນອີງໃນການສົນທະນາແບບເຄິ່ງຈັດວາງກັບ ຊາວບ້ານ.
4 ໃຫ້ມີຜູ້ນຶ່ງເປັນຜູ້ບັນທຶກສະເພາະ, ໃຫ້ບັນທຶກຢ່າງລະອຽດ.
5 ຂໍ້ມູນນີ້ ຕ້ອງມີການສົນທະນາສ່ອງແສງຄືນເປັນກຸ່ມຮ່ວມກັບຊາວບ້ານ.

## ສຳພາດກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ປ່າ

*ບັນດາຂໍ້ມູນຂ່າວສານທີ່ຄົນບັນທຶກໄວ້ :*

- ຊື່ທ້ອງຖິ່ນທີ່ຕັ້ງຂອງຕອນປ່າໄມ້ ພ້ອມດ້ວຍບ່ອນຢູ່ການປົກຄອງ : ແຂວງ, ເມືອງ, ເຂດ, ບ້ານ ແລະ ໜ່ວຍ.
- ຊື່ບ້ານໂຄງການ ພ້ອມດ້ວຍບ່ອນຢູ່ການປົກຄອງ ຖ້າຫາກວ່າ ມັນແຕກຕ່າງກັນກັບຂ້າງເທິງ.
- ຊື່ ຫຼື ນຳເບີຂອງແຜນວາດ / ແຜນທີ່ພູມມີປະເທດ ຂອງຕອນປ່າໄມ້ນັ້ນຢູ່.
- ຊື່ສະມາຊິກທີມສະໜາມ.
- ຊື່ຊາວບ້ານທີ່ເຂົ້າຮ່ວມ (ຜູ້ສຳຄັນ).
- ວັນທີສຳເລັດການກວດກາ ແລະ ສ້າງເອກະສານ.

*ບັນດາຫົວຂໍ້ ແລະ ຂໍ້ມູນຂ່າວສານພິເສດ ສະເໜີໃຫ້ກວດກາ ແລະ ສ້າງເປັນເອກະສານ :*

1. ຈຳແນກກຸ່ມຜູ້ຊົມໃຊ້ປ່າໄມ້ໃນອະດີດ ແລະ ປະຈຸບັນ ບົດບາດໃນການຕັດສິນ ແລະ ການເຄື່ອນໄຫວ.

- ແມ່ນໃຜເປັນຜູ້ຊົມໃຊ້ ແລະ ຄຸ້ມຄອງຕອນປ່າໄມ້ ແຫ່ງນີ້ໃນອະດີດ?
- ຮູບແບບລະບຽບການຄຸ້ມຄອງ ແລະ ສິດນຳໃຊ້ປ່າໄມ້ທ້ອງຖິ່ນໃນອະດີດ? (ເບິ່ງບົດສະເໜີຂອງ Fisher et al 1996).
- ເພີ່ນໄດ້ກຳນົດຂໍ້ກຳນົດກົດລະບຽບ ແລະ ສິດຊົມໃຊ້ປ່າໄມ້ທ້ອງຖິ່ນແນວໃດ? ແມ່ນໃຜເປັນຜູ້ເຮັດ?
- ປະຈຸບັນແມ່ນໃຜເປັນຜູ້ຄຸ້ມຄອງ ແລະ ຊົມໃຊ້ຕອນປ່າໄມ້ນີ້.
- ໃນປະຈຸບັນການຄຸ້ມຄອງ ແລະ ສິດຊົມໃຊ້ຕອນປ່າໄມ້ແຫ່ງນີ້ມີຄືແນວໃດ?
- ປະຈຸບັນເພີ່ນກຳນົດການຄຸ້ມຄອງ ແລະ ສ້າງຂໍ້ຕົກລົງ ການຊົມໃຊ້ຕອນປ່າໄມ້ແຫ່ງນີ້ແນວໃດ? ແມ່ນໃຜເປັນຜູ້ເຮັດ?

2. ປະຫວັດໃນການຄຸ້ມຄອງ ແລະ ພຶດຕິກຳຢູ່ໃນຕອນປ່າໄມ້.

2.1 ຮູບແບບການຄຸ້ມຄອງ ທີ່ຜູ້ຊົມໃຊ້ປ່າໄມ້ໄດ້ມີໃນອະດີດ :

- ຮູບແບບພຶດຕິກຳຕ່າງໆ ທີ່ຜູ້ຊົມໃຊ້ປ່າໄມ້ໃນໄລຍະຜ່ານມາ ແລະ ມັນກ່ຽວຂ້ອງກັບແຕ່ລະຈຸດປະສົງ ການຄຸ້ມຄອງຄືແນວໃດ? ໃຫ້ພິຈາລະນາດັ່ງຕໍ່ລົງໄປນີ້ :
- ໄຟໄໝ້ປ່າ (ເຈດຕະນາ ຫຼື ອຸບັດຕິເຫດ).
- ປ່ອຍສັດກິນຫຍ້າ.
- ຕາດຟືນ.
- ເຜົາຖ່ານ.
- ຕາດໄມ້ໃຊ້ສອຍ.
- ການເກັບກູ້ເຄື່ອງປ່າຂອງດົງໃນອະດີດ ( ລວມທັງການລ່າສັດ, ການຕີເຜິ້ງ, ຫາໜໍ່ໄມ້ ແລະ ການພະຍາຍາມເອົາເຄື່ອງປ່າຊະນິດໃດນຶ່ງມາປູກ).

- ການຖາງປ່າເຮັດໄຮ່.
- ການອົບພະຍົບ (ລວມທັງການໄປນອນປ່າ; ການອົບພະຍົບຊົ່ວຄາວ ຫຼື ຖາວອນ).
- ປ່າສັກສິດ ຫຼື ປ່າມະເຫສັກ.
- ການປ້ອງກັນແຫຼ່ງນ້ຳ.
- ການນຳໃຊ້ດິນ ເພື່ອກິດຈະກຳ ອື່ນໆ (ການຂະຫຍາຍປ່າແລະ ການຈັດການປ້ອງກັນຕ່າງໆ).

2.2 ບັນດາພຶດຕິກຳຂອງບຸກຄົນພາຍນອກ ໃນອະດີດເປັນຄືແນວໃດ?

- ການຂຸດຄົ້ນໄມ້ທ່ອນ.
- ການກໍ່ສ້າງທາງ.
- ການເກັບກູ້ເຄື່ອງປ່າຂອງດົງ ລວມທັງການລ່າສັດ.

2.3 ຄວາມເຫັນຂອງທີມ ກ່ຽວກັບການຄຸ້ມຄອງ ແລະ ພຶດຕິກຳໃນໄລຍະຜ່ານມາ (ລວມທັງພຶດຕິກຳຂອງບຸກຄົນພາຍນອກ) ທີ່ມີຕໍ່ :

- ການຂະຫຍາຍປ່າໄມ້.
- ໂຄງສ້າງ ແລະ ອົງປະກອບຂອງປ່າໄມ້.
- ການມີໜ້າຂອງສັດປ່າ ແລະ ຄວາມຫລາກຫລາຍ.

3. ຈຸດປະສົງ ແລະ ການຄຸ້ມຄອງໃນປະຈຸບັນ.

3.1 ຈຸດປະສົງຂອງການຄຸ້ມຄອງ ໃນປະຈຸບັນມີຄືແນວໃດ?

3.2 ໃນປະຈຸບັນມີພຶດຕິກຳແນວໃດ ທີ່ມີສ່ວນກ່ຽວພັນກັບແຕ່ລະຈຸດປະສົງການຄຸ້ມຄອງ ໃຫ້ພິຈາລະນາດັ່ງຕໍ່ລົງໄປນີ້ :

- ໄຟໄໝ້ປ່າ (ເຈດຕະນາ ຫຼື ອຸບັດຕິເຫດ).
- ປ່ອຍສັດກິນຫຍ້າ.
- ຕັດຟືນ.
- ເຜົາຖ່ານ.
- ຕັດໄມ້ໃຊ້ສອຍ.
- ການເກັບກູ້ເຄື່ອງປ່າຂອງດົງໃນອະດີດ ( ລວມທັງການລ່າສັດ, ການຕີເຜິ້ງ, ຫາໜໍ່ໄມ້ ແລະ ການພະຍາຍາມເອົາເຄື່ອງປ່າຊະນິດໃດນຶ່ງມາປູກ).
- ການຖາງປ່າເຮັດໄຮ່.
- ການອົບພະຍົບ (ລວມທັງການໄປນອນປ່າ; ການອົບພະຍົບຊົ່ວຄາວ ຫຼື ຖາວອນ).
- ປ່າສັກສິດ ຫຼື ປ່າມະເຫສັກ.
- ການປ້ອງກັນແຫຼ່ງນ້ຳ.
- ການນຳໃຊ້ດິນ ເພື່ອກິດຈະກຳ ອື່ນໆ (ການຂະຫຍາຍປ່າແລະ ການຈັດການປ້ອງກັນຕ່າງໆ).

3.3 ພຶດຕິກຳແນວໃດທີ່ບຸກຄົນພາຍນອກກຳລັງດຳເນີນການຢູ່ໃນປະຈຸບັນ?

- ການຂຸດຄົ້ນໄມ້ທ່ອນ.
- ການກໍ່ສ້າງທາງ.
- ການເກັບກູ້ເຄື່ອງປ່າຕອງດົງ ລວມທັງການລ່າສັດ.

3.4 ຄວາມເຫັນຂອງທີມ ກ່ຽວກັບການຄຸ້ມຄອງ ແລະ ພຶດຕິກຳໃນໄລຍະຜ່ານມາ (ລວມທັງ ພຶດຕິກຳຂອງບຸກຄົນພາຍນອກ) ທີ່ມີຕໍ່ :

- ການຂະຫຍາຍປ່າໄມ້.
- ໂຄງສ້າງ ແລະ ອົງປະກອບຂອງປ່າໄມ້.
- ການມີໜ້າຂອງສັດປ່າ ແລະ ຄວາມຫລາກຫລາຍ.

# • ການປະເມີນສະພາບປ່າແບບມີສ່ວນຮ່ວມ •

ແມ່ນຫຍັງ?

ວິທີການນີ້ ແມ່ນການນຳໃຊ້ແບບຟອມ ໃນເວລາຍ່າງປ່າເອົາຂໍ້ມູນ ກ່ຽວກັບສະພາບຂອງປ່າໄມ້

| ຫາຂໍ້ມູນນີ້ ເພື່ອຫຍັງ? | • ເພື່ອຕີລາຄາສະພາບຂອງປ່າໄມ້ໃນແຕ່ລະບ່ອນ.<br>• ເພື່ອເປັນບ່ອນອີງ ໃນການຕິດຕາມ ແລະ ປະເມີນຜົນສະພາບຂອງປ່າໄມ້ໃນຕໍ່ໜ້າ. |
|---|---|

ເຮັດແນວໃດ?

1. ເອົາແບບຟອມ " ການປະເມີນສະພາບປ່າ " ທີ່ກຽມໄວ້ແລ້ວ (ເບິ່ງຕົວຢ່າງ).
2. ຖືໄປນຳໃນເວລາຍ່າງປ່າກັບຊາວບ້ານ.
3. ຍ່າງໄປຮອດແຕ່ລະບ່ອນ ສຳຫລວດ ແລະ ສັງເກດການ. ຈາກນັ້ນ ມີການສົນທະນາ ແລະ ຕີລາຄາຮ່ວມກັນກັບຊາວບ້ານ ໂດຍອີງໃສ່ແຕ່ລະຫົວຂໍ້ຂອງແບບຟອມ.
4. ໃຫ້ມີການບັນທຶກຢ່າງລະອຽດ ຄົບຖ້ວນ.

ຂໍ້ສັງເກດ :

- ຜູ້ເກັບກຳຂໍ້ມູນ ຄວນທຳຄວາມເຂົ້າໃຈຈະແຈ້ງຕໍ່ທຸກໆຫົວຂໍ້ໃນແບບຟອມກ່ອນຈະນຳໃຊ້.

# ການປະເມີນສະພາບປ່າແບບມີສ່ວນຮ່ວມ

| | |
|---|---|
| A1 ຊື່ສະຖານທີ່ບ່ອນຕອນປ່າໄມ້ຕັ້ງຢູ່ | |
| A2 ຊື່ບ້ານໂຄງການ | |
| A3 ຊື່ ຫຼື ນຳເບີຂອງແຜນວາດບ່ອນຕອນປ່າໄມ້ຕັ້ງຢູ່ | |
| A4 ຊື່ສະມາຊິກທີມສະໜາມ | |
| A5 ຂໍ້ມູນເກັບກຳໂດຍ | |
| A6 ຊື່ຊາວບ້ານທີ່ເຂົ້າຮ່ວມ | |
| A7 ວັນທີເກັບກຳຂໍ້ມູນ | |

| | | |
|---|---|---|
| A8 ລະດູການ (ຂີດວົງອ້ອມ) | ແລ້ງ | ຝົນ |

| |
|---|
| A9 ປະເພດພືດສຳຄັນທີ່ພົບເຫັນຫລາຍ : |

| | |
|---|---|
| A10 ເນື້ອທີ່ (ຮຕ) | A12 ລະດັບຄວາມສູງ (ມ) |
| A11 ທີ່ຕັ້ງພູມີປະເທດ | A13 ທິດໃດ |

A14 ດານຫີນທີ່ຢູ່ໃນປ່າໄມ້

| | | | | |
|---|---|---|---|---|
| ຂີດວົງມົນອ້ອມຢ່າງນຶ່ງ | < 25% | 25-50% | 51-75% | > 75% |
| ຄວາມເຫັນເພີ້ມເຕີມ | | | | |

A15 ອະທິບາຍເພີ້ມກ່ຽວກັບປະເພດ ແລະ ຄວາມຮຸນແຮງການເຊາະເຈື່ອນ. ກວດເບິ່ງຫ້ອງທີ່ເໝາະສົມ

| ປະເພດການເຊາະເຈື່ອນ | ບໍ່ມີ | ມີໜ້ອຍ < 10% | ປານກາງ 10-25% | ຮ້າຍແຮງ 26-50% | ຮ້າຍແຮງຫຼາຍ > 50% |
|---|---|---|---|---|---|
| | | | | | |
| ຮ່ອງກ້ວາງ | | | | | |
| ຮ່ອງເລິກ | | | | | |
| ໜ້າກະດານ | | | | | |
| ຄວາມເຫັນເພີ້ມເຕີມ | | | | | |

A16 ຊັ້ນຂອງພືດ

ສຳລັບແຕ່ລະຊັ້ນ

- ໃຫ້ຂີດວົງຮອບເປີເຊັນ ຂອງເຮືອນຍອດ ( <25%, 25-50%, 51-75%, > 75%).
- ບັນທຶກຊື່ຂອງຕົ້ນໄມ້ 5 ຊະນິດທີ່ມີຫລາຍທີ່ສຸດຢູ່ໃນຊັ້ນນັ້ນ, ທັງຊື່ລາວ ແລະ ຊື່ສາກົນ. ໃນກໍລະນີ ທີ່ບໍ່ສາມາດຈຳແນກຊະນິດພັນໄດ້ ໃຫ້ເກັບເອົາ 2 ຕົວຢ່າງ ຈາກຕົ້ນໄມ້ນັ້ນ (ໃບພ້ອມດ້ວຍດອກ / ໝາກຖ້າມີ) ເພື່ອໄວ້ຈຳແນກພາຍຫລັງ. ຕິດເຄື່ອງໝາຍເປັນຕົວໜັງສື ຫຼື ຕົວເລກໃສ່ໄວ້ເພື່ອກັນຫລົງ ແລະ ບັນທຶກໄວ້ຫ້ອງຊະນິດພັນຂອງຊັ້ນນັ້ນ.
- ສຳລັບຊັ້ນຕົ້ນໄມ້ສະເພາະ : ຄຳນວນເບິ່ງລະດັບ ແລະ ລວງສູງສະເລັ່ຽ ຂອງຊັ້ນຕົ້ນໄມ້ (ເປັນແມັດ, ຕົວຢ່າງ : 5-15 ມ; ປານກາງ 10 ມ.).

A16.1 ຊັ້ນໜ້າດິນ ເປີເຊັນການຄຸ້ມໜ້າດິນ ( <25%, 25-50%, 51-75%, > 75%).

| | |
|---|---|
| 1 | 4 |
| 2 | 5 |
| 3 | |

A16.2 ຊັ້ນພຸ່ມ ເປີເຊັນການຄຸ້ມໜ້າດິນ ( <25%, 25-50%, 51-75%, > 75%).

| | |
|---|---|
| 1 | 4 |
| 2 | 5 |
| 3 | |

A16.3 ຊັ້ນຕົ້ນໄມ້ 1 ເປີເຊັນການຄຸ້ມໜ້າດິນ ( <25%, 25-50%, 51-75%, > 75%).

| | |
|---|---|
| 1 | 4 |
| 2 | 5 |
| 3 | |

A16.4 ຊັ້ນຕົ້ນໄມ້ 2 ເປີເຊັນການຄຸ້ມໜ້າດິນ ( <25%, 25-50%, 51-75%, > 75%).

| | |
|---|---|
| 1 | 4 |
| 2 | 5 |
| 3 | |

A16.5 ຊັ້ນເພີ່ມເຕີມຖ້າຈຳເປັນເປີເຊັນການຄຸ້ມໜ້າດິນ ( <25%, 25-50%, 51-75%, > 75%).

ຖ້າສາມາດເຮັດໄດ້ : ລະດັບຄວາມສູງ

| ມັນແມ່ນຊັ້ນໃດແທ້? | |
|---|---|
| 1 | 4 |
| 2 | 5 |
| 3 | |

A 17 ການສືບພັນ ຂອງ 5 ຊະນິດ ຕົ້ນໄມ້ / ໄມ້ພຸ່ມ ທີ່ພົບຫຼາຍທີ່ສຸດ. ປະເພດການສືບພັນ

| |
|---|
| 1 |
| 2 |
| 3 |
| 4 |
| 5 |

A 18 ພືດຊະນິດອື່ນໆ ທີ່ມີຢູ່ໃນຕອນປ່າໄມ້

| ລະດັບຊັ້ນຂອງພືດພັນ | ບໍ່ພົບເຫັນ | ຫາຍາກ | ມີໜ້ອຍ | ມີທົ່ວໄປ | ມີຫລາຍ |
|---|---|---|---|---|---|
| ຜັກກູດຕົ້ນ | | | | | |
| ຜັກກູດກາຝາກ | | | | | |
| ເອື້ອງກາຝາກ | | | | | |
| ເອື້ອງດິນ | | | | | |
| ໄຄໂຄກ | | | | | |
| ເຫັດໄຄ | | | | | |
| ເຄືອເຂົາ | | | | | |
| ອື່ນໆ (ພິເສດ) | | | | | |

A19 ບັນທຶກຊະນິດ ຄປດ ທີ່ພົບ ຫຼື ລາຍງານວ່າ ມີຢູ່ໃນຕອນປ່າໄມ້ນັ້ນ (ລວມທັງສັດປ່າ) ແລະ ຊະນິດພັນຕົ້ນໄມ້ ຫຼື ພັນສັດປ່າທີ່ຄວນບັນທຶກໄວ້ ເຊັ່ນ: ມີຄຸນຄ່າ, ຫາຍາກ ຫຼື ຈະສູນພັນ) ພົບເຫັນຢູ່ໃນຕອນປ່າໄມ້ແຫ່ງນີ້ ໂດຍທີມສະໜາມ ຫຼື ຊາວບ້ານ. ໃຫ້ບັນທຶກໄວ້ໃບນຶ່ງຕ່າງຫາກ.

A20 ຮ່ອງຮອຍການລົບກວນຂອງຄົນຢູ່ໃນຕອນປ່າໄມ້ (ລວມທັງບາງຊະນິດ ຄປດ).

| ປະເພດການລົບກວນ / ການກະທຳ | | ສິ່ງບົ່ງບອກ | ປະເພດການລົບກວນ / ການກະທຳ | | ສິ່ງບົ່ງບອກ |
|---|---|---|---|---|---|
| ທາງແລວ | | | ທາໜໍ່ໄມ້ | | |
| ທາງລົດ | | | ການກະສິກຳ | | |
| ການຂຸດຄົ້ນໄມ້ທ່ອນ | | | ພັກອາໃສ(ຕູບ)ຖຽງ | | |
| ການຕັດຟືນ/ຫຼັກຮົ້ວ | | | ໄຟໃໝ້ປ່າ/ເຕົາໄຟ | | |
| ກັບດັກສັດປ່າ | | | ການຂ້າຕົ້ນໄມ້ ເຊັ່ນ ການອ້ອນລຳ | | |
| ການບັກເອົາຢາງໄມ້ | | | | | |
| ການປ່ອຍສັດລ້ຽງ | | | | | |
| ການຕັດໄມ້ປ່ອງ | | | | | |

A21 ບັນທຶກເພີ້ມເຕີມ ກ່ຽວກັບຕອນປ່າໄມ້ (ສາມາດບັນທຶກເພີ້ມໃສ່ເຈັ້ຍຕ່າງຫາກ ຖ້າຈຳເປັນ)

# ການປະເມີນສະພາບປ່າ

1. ຊື່ທ້ອງຖິ່ນຕາມບ່ອນທີ່ຕັ້ງຂອງມັນ ພ້ອມດ້ວຍບ່ອນຢູ່ການປົກຄອງເຊັ່ນ : ແຂວງ, ເມືອງ, ເຂດ, ບ້ານ ແລະ ໜ່ວຍ.
2. ຊື່ບ້ານຂອງໂຄງການ ພ້ອມດ້ວຍບ່ອນຢູ່ການປົກຄອງຖ້າຫາກແຕກຕ່າງກັບຂ້າງເທິງ.
3. ບັນຊີລາຍຊື່ສະຖານທີ່ ຫຼື ສັນຍາລັກທີ່ບົ່ງບອກເຖິງທີ່ຕັ້ງ ແລະ ເຂດແດນຂອງມັນຢູ່ໃນແຜນວາດ ຫຼື ແຜນທີ່ພູມີປະເທດ.
4. ລາຍຊື່ພະນັກງານທີມງານສະໜາມ.
5. ລາຍຊື່ຜູ້ຊົມໃຊ້ປ່າ (ບຸກຄົນທີ່ຖືກສຳພາດ).
6. ລະດູການ ແລ້ງ ຫຼື ຝົນ.
7. ອີງໃສ່ ລະບົບການຈັດສັນປ່າໄມ້ແຫ່ງຊາດ (ເບິ່ງບົດແນບທ້າຍ 7) ເພື່ອກຳນົດປະເພດພືດຕົ້ນຕໍ ທີ່ມີຢູ່ໃນຕອນປ່າ. ຖ້າຫາກມີຄວາມຫຍຸ້ງຍາກ ໃນການຈຳແນກປະເພດປ່າ ໃຫ້ບັນທຶກໄວ້ພ້ອມດ້ວຍຄວາມເຫັນຂອງທີມງານ ແລະ ຄວາມເຫັນຂອງຊາວບ້ານ ກ່ຽວກັບປ່າປະເພດນັ້ນ.
8. ໃຫ້ຄິດໄລ່ເນື້ອທີ່ເປັນເຮັກຕາ ອີງຕາມຄວາມສັງເກດຂອງທີມງານ ແລະຂອງຊາວບ້ານ.
9. ວາງຕຳແໜ່ງຕອນປ່ານັ້ນ ເຂົ້າຢູ່ໃນແຜນວາດພູມີປະເທດທີ່ມີມາດຕາສ່ວນໃຫຍ່. ເບິ່ງຮູບແຕ້ມ 8 ຂ້າງລຸ່ມ ເພື່ອຈັດລະດັບຄວາມສູງ.

ແຕ້ມຮູບ 8. ແຜນວາດພູມີປະເທດທີ່ມີມາດຕາສ່ວນກ້ວາງ




10. ໃຊ້ແຜນທີ່ພູມີປະເທດ ເພື່ອຈັດລະດັບຄວາມສູງຂອງຕອນປ່ານັ້ນເປັນແມັດ ຕົວຢ່າງ: 500 ຫາ 550 ແມັດ.
11. ພັນລະນາຮູບລັກສະນະທົ່ວໄປ ຂອງຕອນປ່າ. ການເລືອກລັກສະນະທົ່ວໄປມີດັ່ງນີ້ : ທິດເໜືອ, ທິດຕາເວັນອອກສ່ຽງເໜືອ, ທິດຕາເວັນອອກ, ທິດຕາເວັນອອກສ່ຽງໃຕ້, ທິດໃຕ້, ທິດຕາເວັນຕົກສ່ຽງໃຕ້, ທິດຕາເວັນຕົກ, ທິດຕາເວັນຕົກສ່ຽງເໜືອ (ອີງຕາມທິດຂອງດວງຕາເວັນຂອງເຂັມຊີ້ທິດ). ໃນກໍລະນີ ຕອນປ່າຫາກຮາບພຽງ ຈົ່ງບັນທຶກ " ບໍ່ມີ ".

12. ໃຫ້ຄ່ານວນເປັນສ່ວນຮ້ອຍໜ້າດິນຢູ່ໃນຕອນປ່າໄມ້ນັ້ນທີ່ປົກຄຸມດ້ວຍຫີນດານ ເນື້ອທີ່ເປົ່າແປນທີ່ບໍ່ມີສິ່ງປົກຄຸມ. ໃນກໍລະນີທັສດິນພຽງ ຫາກປົກຄຸມດ້ວຍຫີນແຮ່, ໃຫ້ບັນທຶກໄວ້ ລວມທັງຫີນກ້ອນນໃຫຍ່ທີ່ກິ້ງລົງມາແຕ່ເທິງພູ ແລະ ພະລານຫີນ.

13. ບນທຶກເພີ້ມເຕີມ* : ການເຊາະເຈື່ອນໜ້າດິນ ທີ່ຮ້າຍແຮງທະວີຂຶ້ນໂດຍສັງເກດເປັນເປີເຊັນ ທີ່ກະທົບກັບເນື້ອທີ່ດິນຢູ່ໃນຕອນປ່ານັ້ນ. ກ່ຽວກັບການເຊາະເຈື່ອນໜ້າດິນ ທີ່ຮ້າຍແຮງລວມມີ : ການເຊາະເຈື່ອນເປັນຮ່ອງເລິກ, ການເຊາະເຈື່ອນເປັນຮ່ອງກ້ວາງ, ການເຊາະເຈື່ອນເປັນໜ້າກະດານ.

* ຂະຫຍາຍເພີ້ມເຕີມ :

ບໍ່ມີ : ບໍ່ປະກົດການເຊາະເຈື່ອນໃຫ້ເຫັນ ຫຼື ບໍ່ມີເລີຍ.

ໜ້ອຍ : ປະກົດເຫັນການເຊາະເຈື່ອນ ແຕ່ໜ້ອຍກ່ວາ 10% ຂອງເນື້ອທີ່ໃນຕອນປ່ານັ້ນ.

ປານກາງ : ປະກົດເຫັນການເຊາະເຈື່ອນ 10 - 25% ຂອງເນື້ອທີ່ໃນຕອນປ່ານັ້ນ.

ຮ້າຍແຮງ : ປະກົດເຫັນການເຊາະເຈື່ອນ 25 - 50% ຂອງເນື້ອທີ່ໃນຕອນປ່ານັ້ນ.

ຮ້າຍແຮງຫລາຍ : ປະກົດເຫັນການເຊາະເຈື່ອນ ຫລາຍກ່ວາ 50% ຂອງເນື້ອທີ່ໃນຕອນປ່ານັ້ນ.

ຮ່ອງກ້ວາງ : ຮ່ອງທີ່ມີຄວາມເລິກ ແລະ ຄວາມກ້ວາງໜ້ອຍກ່ວາ 30 ຊມ. ເກີດຍ້ອນນ້ຳເຊາະເຈື່ອນລົງຄ້ອຍ.

ການເຊາະເຈື່ອນເປັນໜ້າກະດານ : ໜ້າດິນຖືກເຊາະລ້າງເປັນແຜ່ນໜ້າກະດານຄ້ອຍ ໂດຍບໍ່ປະກົດເຫັນ ຮ່ອງນ້ຳເຊາະຢ່າງຫລວງຫລາຍ. ປະກົດການເຊາະເຈື່ອນແບບໜ້າກະດານເຮັດໃຫ້ເຫັນດັ່ງນີ້ : ເສັ້ນເສົາຫີນ ແລະ ຮາກຂອງຕົ້ນໄມ້ພົ້ນຂຶ້ນໜ້າດິນ, ມີກອງກ້ອນຫີນເກີດຂຶ້ນກະແຈກ ກະຈາຍ ຕ້ານຂີ້ເຫຍື້ອ ຕາມຄ້ອຍທາງລົງຂອງນ້ຳ.

ຮູບແຕ້ມ 9 : ຮູບປະກອບ ເພື່ອສັງເກດ ການເຊາະເຈື່ອ ປະເພດຕ່າງໆ.




14. ຂັ້ນລະດັບຂັ້ນ. ໝາຍເຫດ : ໃນກໍລະນີທີ່ບໍ່ສາມາດຈຳແນກຊະນິດພັນພືດນຶ່ງໃດໄດ້ນັ້ນ, ໃຫ້ເກັບເອົາຕົວຢ່າງແນວລະ 2 ຊຸດ (ໃບ, ຖ້າໄດ້ໃຫ້ເອົາທັງດອກ / ໝາກ) ເພື່ອເອົາໄວ້ຈຳແນກຕາມຫລັງ.

14.1 ຊັ້ນໜ້າດິນ : ລວມມີຈຳນວນຫຍ້າ "ຜັກກູດ ແລະ ຈຳພວກຫ້ວານ" ທັງຫລາຍ, ຄິດໄລ່ເປັນເປີເຊັນການປົກຄຸມຂອງຈຳພວກຫຍ້າ, ຈຳພວກຫ້ວານ ແລະ ຈຳພວກຜັກກູດທີ່ເກີດຢູ່ໃນຕອນປ່ານັ້ນ.

14.2 ຊັ້ນພຸ່ມໄມ້ : ແມ່ນຈຳພວກຕົ້ນໄມ້ເຕັ້ຍທີ່ມີກິ່ງງ່າດົກແຕ່ໜ້າດິນຂຶ້ນໄປ ໂດຍທົ່ວໄປສູງປະມານ 3 ແມັດ ແຕ່ບາງຄັ້ງສູງກ່ວາ 7 ແມັດກໍມີ. ລວມທັງເບັ້ຍໄມ້ ແລະ ຕົ້ນນໄມ້ນ້ອຍອີກດ້ວຍ (ເບິ່ງຂໍ້ 17) ເຮືອນຍອດຂອງພຸ່ມໄມ້ ແມ່ນຄິດໄລ່ເປັນເປີເຊັນ ຂອງການປົກຄຸມໜ້າດິນ, ເຮືອນຍອດປຽບເໝືອນເປັນສິ່ງກຳບັງແສງ.

14.3 ຊັ້ນຕນໄມ້ 1 : ເປັນຊັ້ນຕົ້ນໄມ້ຢູ່ຊັ້ນຕ່ຳ ທີ່ປາກົດຢ່າງຊັດເຈນ ສ່ວນຫລາຍເປັນຕົ້ນໄມ້ຈິງ ທີ່ມີລຳຕົ້ນດ່ຽວ ທີ່ມີໜ້າຕັດ 10 ຊມ ຫຼື ຫລາຍກ່ວາ ແລະ ສູງກ່ວາ 2 ແມັດ. ມີບາງຊະນິດກໍມີກິ່ງງ່າເປັນພົ້ວຢູ່ຍອດຂອງມັນ. ລວມທັງຊະນິດໄມ້ໄຜ່ ທີ່ແມ່ນຫຍ້າ. ເຮືອນຍອດຂອງຕົ້ນໄມ້ຄິດໄລ່ເປັນເປີເຊັນຂອງການປົກຄຸມ ຊຶ່ງປຽບເໝືອນເປັນສິ່ງກຳບັງແສງ (ໃນກໍລະນີຕົ້ນໄມ້ຫາກບໍ່ມີໃບໃຫ້ຄຳນວນ ເອົາກິ່ງງ່າທີ່ແຜ່ອອກ) ການຄິດໄລ່ສະເລັ່ຽລວງສູງ ແລະ ຊັ້ນຂອງເຮືອນຍອດ (ເປັນແມັດ).

14.4 ຊັ້ນຕນໄມ້ 2 : ຊັ້ນສູງສຸດຂອງຊັ້ນເຮືອນຍອດຂອງຕົ້ນໄມ້ ຄິດໄລ່ສະເລັ່ຽລະດັບຊັ້ນ ແລະລວງສູງຂອງເຮືອນຍອດຊັ້ນນີ້ເປັນແມັດ.

14.5 ນອກຈາກນີ້ ຖ້າຍັງມີຊັ້ນພືດໃດເພີ້ມເຕີມ ພະຍາຍາມນຳໃຊ້ຂັ້ນຕອນນີ້ ບັນທຶກໄວ້ວ່າມັນແມ່ນຊັ້ນໃດແທ້.

17. ບັນທຶກຖ້າມີການຂະຫຍາຍພັນດ້ວຍກ້າ, ດ້ວຍເບັ້ຍ ຫຼື ດ້ວຍແໜງ.

18. ຕົວຢ່າງ : ຜັກກູດຕົ້ນ , ຜັກກູດລຳຕົ້ນໃນດິນ, ຈຳພວກດອກເອື້ອງ ແລະ ດອກເຜິ້ງທັງຫລາຍ, ໄຄ ແລະ ເຫັດໄຄທັງຫລາຍ ແລະ ຈຳພວກເຄືອໄມ້ຕ່າງໆ. ຫາຍາກ : ນຶ່ງ ຫຼື ສອງກໍເທົ່ານັ້ນທີ່ພົບເຫັນຢູ່ໃນຕອນປ່ານັ້ນ. ມີໜ້ອຍ : ບໍ່ມີຫລາຍປານໃດຢູ່ໃນຕອນປ່ານັ້ນ, ທົ່ວໄປ : ພົບເຫັນຢູ່ທຸກບ່ອນຢູ່ໃນປ່າແຫ່ງນັ້ນ ຫຼື ຕາມທາງຜ່ານໄປ..

19. ຢ່າລືມກວດສາຍຕາເບິ່ງຮ່ອງຮອຍການກະທຳຂອງຄົນຢູ່ໃນຕອນປ່ານັ້ນ. ໃຫ້ບັນທຶກຮ່ອງຮອຍ ທີ່ກຳລັງເຮັດຢູ່ ຖ້າໂອກາດເໝາະສົມ ບັນທຶກພຶດຕິກຳອື່ນໆ ທີ່ພົບເຫັນເຂົ້າຕື່ມ ຖ້າຈຳເປັນ.

20. ບັນທຶກຂໍ້ມູນຂ່າວສານອື່ນໆ ທີ່ກ່ຽວຂ້ອງກັບຕອນປ່າແຫ່ງນັ້ນ ທີ່ເຈົ້າເຫັນວ່າສົມຄວນ. ຖ້າຕາຕະລາງບໍ່ມີບ່ອນພໍ ໃຫ້ຂຽນໃສ່ເຈັ້ຽອື່ນຂັດຕິດກໍໄດ້. ໃຫ້ບັນທຶກທຸກສິ່ງທຸກຢ່າງ ທີ່ທີມງານໄດ້ເກັບຕົວຢ່າງພືດ ຫຼື ສັດໄປຈາກຕອນປ່າແຫ່ງນັ້ນ.

## ການສັງລວມ ແລະ ສະຫຼຸບ

ໃນຕອນສຸດທ້າຍຂອງການເກັບກຳຂໍ້ມູນແຕ່ລະເທື່ອ, ຈະຕ້ອງໄດ້ມີການສະຫຼຸບ ແລະ ສ່ອງແສງຄືນ ທັງໃນບ້ານ ແລະ ຫຼັງຈາກກັບມາແຕ່ພາກສະໜາມແລ້ວ ນີ້ຈະເປັນຂັ້ນຕອນສຳຄັນກ່ອນຈະເລີ່ມການວາງແຜນການຄຸ້ມຄອງ ແລະ ນຳໃຊ້ເຄື່ອງປ່າຂອງດົງ.

ວິທີການຕ່າງໆເພື່ອການສັງລວມ ແລະ ສະຫຼຸບມີຕໍ່ໄປນີ້:

- ການສ່ອງແສງຄືນ.
- ການຂຽນບົດລາຍງານ.

## • ການສ່ອງແສງຄືນ •

ແມ່ນຫຍັງ?

ກ່ອນຈະອອກຈາກບ້ານ ຫຼັງຈາກເກັບກຳຂໍ້ມູນແບບມີສ່ວນຮ່ວມໄດ້ແລ້ວ ຕ້ອງມີການສະຫຼຸບ ແລະ ສະເໜີຄືນພ້ອມກັນກັບຊາວບ້ານ.

ເພື່ອຫຍັງ?

- ເພື່ອເປີດໂອກາດດີໃຫ້ຊາວບ້ານມີສ່ວນຮ່ວມ ໃນການສ່ອງແສງຄືນກ່ຽວກັບວຽກການເກັບກຳຂໍ້ມູນແບບມີສ່ວນຮ່ວມ.
- ເພື່ອຢັ້ງຢືນເຖິງຄວາມແນ່ນອນຂອງຂໍ້ມູນທີ່ເກັບໄດ້ແລ້ວ.

ເຮັດແນວໃດ?

1 ລວມປະຊຸມໝົດບ້ານ ເພື່ອຟັງການສະເໜີຄືນ ແລະ ການສົນທະນາ ກ່ຽວກັບຂໍ້ມູນທີ່ເກັບມາໄດ້ (ໃຫ້ມີຊາວບ້ານໃນຫຼາຍລະດັບໄດ້ເຂົ້າຮ່ວມນຳກັນ).

2 ສະເໜີຂໍ້ມູນຄືນ ໂດຍໃຊ້ຕາຕະລາງ, ແຜນວາດ, ຮູບ, ແລະ ຂໍ້ມູນອື່ນໆ. (ແຕ່ບໍ່ຕ້ອງເວົ້າດົນຫຼາຍ ເພາະຈະເຮັດໃຫ້ຊາວບ້ານເສັຽເວລາ).

3 ແນະນຳໃຫ້ຊາວບ້ານອອກຄຳຄິດຄຳເຫັນ (ຕົວຢ່າງ - ເຂົາເຈົ້າອາດຈະມີຂໍ້ມູນເພີ່ມເຕີມ ຫຼື ອາດຈະຢາກສົນທະນາຄືນກ່ຽວກັບຂໍ້ມູນທີ່ບໍ່ແນ່ນອນ).

4 ເອົາໃຈໃສ່ໃນການຟັງຄຳຄິດຄຳເຫັນຂອງຊາວບ້ານໃນການຢັ້ງຢືນ ຫຼື ພິຈາລະນາຄືນ ກ່ຽວກັບຂໍ້ມູນບາງຂໍ້.

5 ຕ້ອງມີຄົນນຶ່ງຮັບຜິດຊອບ ໃນການບັນທຶກຢ່າງລະອຽດ.

6 ຖ້າຈຳເປັນ, ອາດຈະໄດ້ດັດແປງຂໍ້ມູນໃໝ່ ເພື່ອໃຫ້ສອດຄ່ອງກັບ ຄຳຄິດເຫັນຂອງຊາວບ້ານໃນເວລາສະເໜີສ່ອງແສງຄືນ.

ຂໍ້ຄວນເອົາໃຈໃສ່:

- ຄວນໃຫ້ຊາວບ້ານມີສ່ວນຮ່ວມໃນການສະເໜີຂໍ້ມູນຄືນ.



## • ການຂຽນບົດລາຍງານ •

ແມ່ນຫຍັງ?

ແມ່ນການບັນທຶກ, ວິເຄາະ ແລະ ສັງລວມຂໍ້ມູນທີ່ເກັບກຳໃນໄລຍະເວລາ ທີ່ປະຕິບັດວຽກງານໃນພາກສະໜາມ.

ເພື່ອຫຍັງ?

- ເພື່ອເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານ.
- ເພື່ອເປັນຂໍ້ມູນພື້ນຖານ ໃນການວາງແຜນ, ຕິດຕາມ ແລະ ປະເມີນຜົນ.
- ເພື່ອເປັນການເຜີຍແຜ່ຂໍ້ມູນໃຫ້ແກ່ພາກສ່ວນອື່ນທີ່ຕ້ອງການ.

ຕົວຢ່າງ:

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

- ບົດລາຍງານ ການລົງພາກສະໜາມ

ບ້ານໂພນແກງ ວັນທີ 4 – 6 ເດືອນ 4 ປີ 2000

**ສາລະບານ**


| | ໜ້າ |
|---|---|
| 1. ຫົວຂໍ້ | 1 |
| 2. ພະນັກງານລົງສະໜາມ | 1 |
| 3. ຈຸດປະສົງ | 1 |
| 4. ຕາຕະລາງວຽກງານ | 2 |
| 5. ຄຳແນະນຳ | 2 |
| 6. ເນື້ອໃນບົດລາຍງານ | 3 |
| 6.1. ຂໍ້ມູນກ່ຽວກັບບ້ານ | 3 |
| 6.2. ຂໍ້ມູນກ່ຽວກັບປ່າ | 5 |
| 6.3. ຂໍ້ສັງເກດທົ່ວໄປ | 7 |
| 7. ຂໍ້ມູນຫຼັກທີ່ໄດ້ພົບເຫັນ | 8 |
| 8. ບົດສະຫຼຸບແລະຄຳແນະນຳ | 9 |
| – ບົດແນບທ້າຍ | |
| – ແຜນທີ່ | 10 |
| – ຕາຕະລາງ | |

ເຮັດແນວໃດ?

1. ເວລາກັບມາຮອດຫ້ອງການແລ້ວ ຕ້ອງສັງລວມຂໍ້ມູນທີ່ເກັບມາຈາກພາກສະໜາມ.
2. ໃຫ້ທີມງານສະຫຼຸບ ແລະ ສ່ອງແສງຄືນ ເຖິງຂັ້ນຕອນການປະຕິບັດໃນບ້ານ.
3. ໃຫ້ຂຽນບົດລາຍງານເປັນທີມ.
   - ສ້າງໂຄງຮ່າງຂອງບົດລາຍງານ.
   - ເອົາແຕ່ລະຫົວຂໍ້ມາສົນທະນາກັນພາຍໃນທີມງານ.
   - ຂຽນເນື້ອໃນບົດລາຍງານໃຫ້ຄົບຖ້ວນຕາມຂໍ້ມູນທີ່ເກັບມາ (ອາດຈະຂຽນນຳກັນເປັນທີມ ຫຼື ແບ່ງກັນໄປຂຽນ).
4. ຖ້າປາກົດວ່າ ມີຂໍ້ມູນບໍ່ຄົບຖ້ວນ ແມ່ນທີມງານຕ້ອງໄດ້ກັບຄືນໄປບ້ານອີກ ເພື່ອເກັບກຳຂໍ້ມູນເພີ່ມເຕີມ.
5. ຫຼັງຈາກຂຽນແລ້ວ ຕ້ອງມີການກວດແກ້ບົດລາຍງານ ເພື່ອໃຫ້ຖືກຕ້ອງ ແລະ ເຂົ້າໃຈງ່າຍ.

ຂໍ້ຄວນເອົາໃຈໃສ່ :

- ໃນການຂຽນບົດລາຍງານ ບໍ່ຄວນປ່ອຍໃຫ້ແຕ່ຜູ້ດຽວເປັນຜູ້ຂຽນ.